ສາທາລະນະລັດ ປະຊາທິປະໄຕ ປະຊາຊົນລາວ
ສັນຕິພາບ ເອກະລາດ ປະຊາທິປະໄຕ ເອກະພາບ ວັດທະນະຖາວອນ

ປະທານປະເທດ

ເລກທີ 145 /ປປທ

ນະຄອນຫຼວງວຽງຈັນ, ວັນທີ 21 ມັງກອນ 2019

# ລັດຖະດຳລັດ
# ຂອງປະທານປະເທດ
## ສາທາລະນະລັດ ປະຊາທິປະໄຕ ປະຊາຊົນລາວ
### ກ່ຽວກັບການປະກາດໃຊ້ກົດໝາຍວ່າດ້ວຍ ທະນາຄານທຸລະກິດ (ສະບັບປັບປຸງ)

- ອີງຕາມ ລັດຖະທຳມະນູນ ແຫ່ງ ສາທາລະນະລັດ ປະຊາທິປະໄຕ ປະຊາຊົນລາວ (ສະບັບປັບປຸງ ປີ 2015) ໝວດທີ VI ມາດຕາ 67 ຂໍ້ 1;
- ອີງຕາມ ມະຕິຂອງກອງປະຊຸມສະພາແຫ່ງຊາດ, ສະບັບເລກທີ 110/ສພຊ, ລົງວັນທີ 07 ທັນວາ 2018 ກ່ຽວກັບການຮັບຮອງເອົາກົດໝາຍວ່າດ້ວຍ ທະນາຄານທຸລະກິດ (ສະບັບປັບປຸງ);
- ອີງຕາມ ໜັງສືສະເໜີຂອງຄະນະປະຈຳສະພາແຫ່ງຊາດ, ສະບັບເລກທີ 02/ຄປຈ, ລົງວັນທີ 07 ມັງກອນ 2019.

**ປະທານປະເທດ**

**ສາທາລະນະລັດ ປະຊາທິປະໄຕ ປະຊາຊົນລາວ ອອກລັດຖະດຳລັດ:**

ມາດຕາ 1 ປະກາດໃຊ້ກົດໝາຍວ່າດ້ວຍ ທະນາຄານທຸລະກິດ (ສະບັບປັບປຸງ)

ມາດຕາ 2 ລັດຖະດຳລັດສະບັບນີ້ ມີຜົນສັກສິດ ນັບແຕ່ວັນລົງລາຍເຊັນ ເປັນຕົ້ນໄປ.

**ປະທານປະເທດ ແຫ່ງ ສປປ ລາວ**

ບຸນຍັງ ວໍລະຈິດ

ສາທາລະນະລັດ ປະຊາທິປະໄຕ ປະຊາຊົນລາວ

ສັນຕິພາບ ເອກະລາດ ປະຊາທິປະໄຕ ເອກະພາບ ວັດທະນະຖາວອນ

ສະພາແຫ່ງຊາດ

ເລກທີ 110 /ສພຊ

ນະຄອນຫຼວງວຽງຈັນ, ວັນທີ 07 / 12 / 18

# ມະຕິ

## ຂອງກອງປະຊຸມສະພາແຫ່ງຊາດ

## ກ່ຽວກັບການຮັບຮອງເອົາກົດໝາຍວ່າດ້ວຍທະນາຄານທຸລະກິດ (ສະບັບປັບປຸງ)

---

ອີງຕາມລັດຖະທຳມະນູນ ແຫ່ງ ສາທາລະນະລັດ ປະຊາທິປະໄຕ ປະຊາຊົນລາວ (ສະບັບປັບປຸງ ປີ 2015) ມາດຕາ 53 ຂໍ້ 1 ແລະ ກົດໝາຍວ່າດ້ວຍສະພາແຫ່ງຊາດ (ສະບັບປັບປຸງ ປີ 2015) ມາດຕາ 11 ຂໍ້ 1.

ພາຍຫຼັງທີ່ກອງປະຊຸມສະໄໝສາມັນ ເທື່ອທີ 6 ຂອງສະພາແຫ່ງຊາດ ຊຸດທີ VIII ໄດ້ຄົ້ນຄວ້າພິຈາລະນາ ຢ່າງກວ້າງຂວາງ ແລະ ເລິກເຊິ່ງ ກ່ຽວກັບເນື້ອໃນຂອງກົດໝາຍວ່າດ້ວຍທະນາຄານທຸລະກິດ (ສະບັບປັບປຸງ) ໃນ ວາລະກອງປະຊຸມ ຄັ້ງວັນທີ 7 ທັນວາ 2018.

### ກອງປະຊຸມສະພາແຫ່ງຊາດ ຕົກລົງ:

ມາດຕາ 1 ຮັບຮອງເອົາກົດໝາຍວ່າດ້ວຍທະນາຄານທຸລະກິດ (ສະບັບປັບປຸງ) ດ້ວຍຄະແນນສຽງເຫັນດີເປັນສ່ວນຫຼາຍ.

ມາດຕາ 2 ມະຕິສະບັບນີ້ ມີຜົນສັກສິດນັບແຕ່ວັນລົງລາຍເຊັນ ເປັນຕົ້ນໄປ.

ປະທານສະພາແຫ່ງຊາດ

ປານີ ຢາທໍ່ຕູ້

ສາທາລະນະລັດ ປະຊາທິປະໄຕ ປະຊາຊົນລາວ

ສັນຕິພາບ ເອກະລາດ ປະຊາທິປະໄຕ ເອກະພາບ ວັດທະນະຖາວອນ

ສະພາແຫ່ງຊາດ

ເລກທີ 56 /ສພຊ

ນະຄອນຫຼວງວຽງຈັນ, ວັນທີ 7 ທັນວາ 2018

# ກົດໝາຍ
# ວ່າດ້ວຍທະນາຄານທຸລະກິດ
# (ສະບັບປັບປຸງ)

## ພາກທີ I
## ບົດບັນຍັດທົ່ວໄປ

### ມາດຕາ 1 (ປັບປຸງ) ຈຸດປະສົງ

ກົດໝາຍສະບັບນີ້ ກຳນົດ ຫຼັກການ, ລະບຽບການ ແລະ ມາດຕະການ ກ່ຽວກັບການສ້າງຕັ້ງ, ການເຄື່ອນໄຫວ, ການຄຸ້ມຄອງ ແລະ ການຕິດຕາມ ກວດກາ ທະນາຄານທຸລະກິດ ເພື່ອໃຫ້ທະນາຄານດັ່ງກ່າວ ດຳເນີນຢ່າງມີປະສິດທິພາບ, ໝັ້ນຄົງ ແລະ ໂປ່ງໃສ ແນໃສ່ຮັບປະກັນໃຫ້ທະນາຄານທຸລະກິດ ມີຄວາມເຕີບໃຫຍ່ເຂັ້ມແຂງ, ທັນສະໄໝ, ປອດໄພ ແລະ ສາມາດເຊື່ອມໂຍງກັບສາກົນ, ປະກອບສ່ວນເຂົ້າໃນການຮັກສາສະຖຽນລະພາບຂອງລະບົບສະຖາບັນການເງິນ-ເງິນຕາ ແລະ ການພັດທະນາເສດຖະກິດ-ສັງຄົມຂອງຊາດ.

### ມາດຕາ 2 (ປັບປຸງ) ທະນາຄານທຸລະກິດ

ທະນາຄານທຸລະກິດ ແມ່ນ ສະຖາບັນການເງິນ ທີ່ໄດ້ຮັບອະນຸຍາດໃຫ້ດຳເນີນທຸລະກິດການທະນາຄານ ເປັນຕົ້ນ ການຮັບຝາກເງິນ, ການສະໜອງສິນເຊື່ອ, ການໃຫ້ບໍລິການຊຳລະ, ການຊື້ ຂາຍເງິນຕາ ແລະ ການໃຫ້ບໍລິການອື່ນ ຕາມທີ່ໄດ້ກຳນົດໄວ້ໃນກົດໝາຍ.

### ມາດຕາ 3 (ປັບປຸງ) ການອະທິບາຍຄຳສັບ

ຄຳສັບທີ່ນຳໃຊ້ໃນກົດໝາຍສະບັບນີ້ ມີ ຄວາມໝາຍ ດັ່ງນີ້:

1. **ຜູ້ຖືຮຸ້ນລາຍໃຫຍ່** ໝາຍເຖິງ ຜູ້ຖືຮຸ້ນ ແຕ່ ສິບສ່ວນຮ້ອຍ ຂຶ້ນໄປ ຂອງຈຳນວນຮຸ້ນທັງໝົດ ທີ່ສາມາດລົງຄະແນນສຽງໄດ້ໃນທະນາຄານທຸລະກິດ;
2. **ຜູ້ບໍລິຫານ** ໝາຍເຖິງ ສະມາຊິກສະພາບໍລິຫານ, ສະມາຊິກຄະນະກຳມະການຂອງສະພາບໍລິຫານ, ຄະນະອຳນວຍການ, ຫົວໜ້າພະແນກ ແລະ ຫົວໜ້າສາຂາ;

3. **ຜູ້ກ່ຽວຂ້ອງ** ໝາຍເຖິງ ບຸກຄົນ ຫຼື ນິຕິບຸກຄົນ ທີ່ມີສາຍພົວພັນໃດໜຶ່ງກັບທະນາຄານທຸລະກິດ ດັ່ງນີ້:

(1) ຜູ້ຖືຮຸ້ນລາຍໃຫຍ່, ຜູ້ບໍລິຫານ ລວມທັງ ຜົວ ຫຼື ເມຍ, ລູກ, ພໍ່, ແມ່, ປູ່, ຍ່າ, ພໍ່ເຖົ້າ, ແມ່ເຖົ້າ, ຫຼານ (ລູກຂອງລູກ), ອ້າຍ, ເອື້ອຍ, ນ້ອງ, ລູກເຂີຍ, ລູກໃພ້ ຂອງພວກກ່ຽວ;

(2) ບໍລິສັດໃນກຸ່ມ;

(3) ນິຕິບຸກຄົນອື່ນທີ່ບຸກຄົນໃນຂໍ້ (1) ເທິງນີ້ ເປັນຜູ້ບໍລິຫານ ຫຼື ເປັນຜູ້ຖືຮຸ້ນລາຍໃຫຍ່.

4. **ຜູ້ກວດກາຂອງທະນາຄານແຫ່ງ ສປປ ລາວ** ໝາຍເຖິງ ພະນັກງານຂອງທະນາຄານແຫ່ງ ສປປ ລາວ, ບຸກຄົນ ຫຼື ນິຕິບຸກຄົນ ຈາກພາກສ່ວນອື່ນ ທີ່ໄດ້ຮັບການແຕ່ງຕັ້ງ ຫຼື ມອບໝາຍຈາກທະນາຄານແຫ່ງ ສປປ ລາວ ໃຫ້ກວດກາທະນາຄານທຸລະກິດ;

5. **ສະມາຊິກສະພາບໍລິຫານຈາກພາຍນອກ** ໝາຍເຖິງ ສະມາຊິກສະພາບໍລິຫານ ທີ່ບໍ່ແມ່ນພະນັກງານປະຈໍາການຂອງທະນາຄານທຸລະກິດ ແລະ ບໍ່ແມ່ນຜູ້ກ່ຽວຂ້ອງທາງສາຍພົວພັນຄອບຄົວ, ການວ່າຈ້າງ ຫຼື ການມີຜົນປະໂຫຍດທາງດ້ານທຸລະກິດ ກັບຜູ້ຖືຮຸ້ນ ແລະ/ຫຼື ຜູ້ບໍລິຫານຂອງທະນາຄານທຸລະກິດນັ້ນ;

6. **ສາຂາ** ໝາຍເຖິງ ພາກສ່ວນໜຶ່ງຂອງທະນາຄານທຸລະກິດພາຍໃນ ຫຼື ຕ່າງປະເທດ ຊຶ່ງບໍ່ມີຖານະນິຕິບຸກຄົນ ແຍກອອກຈາກທະນາຄານນັ້ນ, ດໍາເນີນທຸລະກິດຕາມການມອບໝາຍຂອງທະນາຄານທຸລະກິດນັ້ນ ໂດຍສອດຄ່ອງກັບກົດໝາຍສະບັບນີ້;

7. **ບໍລິສັດໃນກຸ່ມ** ໝາຍເຖິງ ບໍລິສັດທີ່ທະນາຄານທຸລະກິດ ຖືຮຸ້ນທີ່ສາມາດລົງຄະແນນສຽງໄດ້ແຕ່ ຫ້າສິບສ່ວນຮ້ອຍ ຂຶ້ນໄປ;

8. **ທະນາຄານທຸລະກິດທີ່ມີຄວາມສໍາຄັນຕໍ່ລະບົບ** ໝາຍເຖິງ ທະນາຄານທຸລະກິດທີ່ມີຊັບສິນຂະໜາດໃຫຍ່, ມີສ່ວນແບ່ງຕະຫຼາດກວ້າງ, ມີສາຍພົວພັນກັບທະນາຄານທຸລະກິດ ແລະ ສະຖາບັນການເງິນອື່ນຢ່າງກວ້າງຂວາງ, ມີຜະລິດຕະພັນທີ່ສະຫຼັບສັບຊ້ອນ ຊຶ່ງບໍ່ມີທະນາຄານທຸລະກິດ ຫຼື ສະຖາບັນການເງິນອື່ນ ທີ່ຈະສາມາດໃຫ້ບໍລິການແທນໄດ້ ແລະ ອົງປະກອບອື່ນ ຕາມການກໍານົດຂອງທະນາຄານແຫ່ງ ສປປ ລາວ;

9. **ສິດຄວບຄຸມ** ໝາຍເຖິງ ສິດໄດ້ຈາກການຖືຮຸ້ນທີ່ສາມາດລົງຄະແນນສຽງໄດ້ ຫຼື ສິດທີ່ມີຜົນປະໂຫຍດໃນລະດັບທີ່ສາມາດມີຜົນກະທົບຕໍ່ການບໍລິຫານຈັດການ, ການກໍານົດນະໂຍບາຍ ໃນນິຕິບຸກຄົນ ຫຼື ການດໍາເນີນການໃດໜຶ່ງ;

10. **ຄວາມສ່ຽງຈຸດສຸມ** ໝາຍເຖິງ ຄວາມສ່ຽງທີ່ເກີດຈາກການສຸມໃສ່ການລົງທຶນໃດໜຶ່ງ ລວມທັງການສະໜອງສິນເຊື່ອໃຫ້ແກ່ລູກຄ້າລາຍໃຫຍ່ລາຍດຽວ, ກຸ່ມລູກຄ້າທີ່ມີສ່ວນກ່ຽວພັນກັນ ຫຼື ຂະແໜງການໃດໜຶ່ງຫຼາຍເກີນໄປ;

11. **ເງິນກູ້** ໝາຍເຖິງ ເງິນທີ່ທະນາຄານທຸລະກິດໃຫ້ລູກຄ້າກູ້ຢືມໃນຮູບແບບຕ່າງໆ ເຊັ່ນ ເງິນກູ້ທົ່ວໄປ, ເງິນເບີກເກີນບັນຊີ, ເງິນຈ່າຍລ່ວງໜ້າ ແລະ ເງິນກູ້ປະເພດອື່ນ ຕາມການກໍານົດຂອງທະນາຄານແຫ່ງ ສປປ ລາວ;

12. **ພາລະຜູກພັນທາງການເງິນ** ໝາຍເຖິງ ຂໍ້ຜູກພັນໃນສັນຍາທີ່ທະນາຄານທຸລະກິດ ໄດ້ຕົກລົງກັບລູກຄ້າໃນຮູບແບບວົງເງິນສິນເຊື່ອ, ໜັງສືສິນເຊື່ອ, ໜັງສືຄໍ້າປະກັນ, ໜັງສືຮັບຮອງການຈ່າຍເງິນ ແລະ ຮູບແບບອື່ນ ຕາມການກໍານົດຂອງທະນາຄານແຫ່ງ ສປປ ລາວ.

### ມາດຕາ 4 (ປັບປຸງ) ນະໂຍບາຍຂອງລັດ ກ່ຽວກັບທະນາຄານທຸລະກິດ

ລັດ ຊຸກຍູ້, ສົ່ງເສີມ ການສ້າງຕັ້ງທະນາຄານທຸລະກິດ ຫຼື ການເຂົ້າຮ່ວມໃນການດຳເນີນທຸລະກິດການທະນາຄານ ດ້ວຍການສະໜອງຂໍ້ມູນ ຂ່າວສານ ແລະ ຄວາມສະດວກອື່ນ ເພື່ອພັດທະນາຂະແໜງການທະນາຄານໃຫ້ມີຄວາມເຕີບໃຫຍ່ເຂັ້ມແຂງ, ໝັ້ນຄົງ, ທັນສະໄໝ ແລະ ສາມາດເຊື່ອມໂຍງກັບພາກພື້ນ ແລະ ສາກົນ.

ລັດ ສົ່ງເສີມໃຫ້ທະນາຄານທຸລະກິດ ລົງທຶນ ແລະ ສະໜອງສິນເຊື່ອ ເພື່ອຊຸກຍູ້ການຜະລິດ, ທຸລະກິດ, ປະກອບສ່ວນໃນການສ້າງວຽກເຮັດງານທຳ ເພີ່ມລາຍໄດ້ຂອງປະຊາຊົນ, ສ້າງພື້ນຖານໃຫ້ແກ່ການຫັນເປັນອຸດສາຫະກຳ ແລະ ທັນສະໄໝ, ການພັດທະນາເສດຖະກິດ-ສັງຄົມຂອງຊາດ.

### ມາດຕາ 5 (ໃໝ່) ຫຼັກການ ກ່ຽວກັບການເຄື່ອນໄຫວ ແລະ ການຄຸ້ມຄອງທະນາຄານທຸລະກິດ

ການເຄື່ອນໄຫວ ແລະ ການຄຸ້ມຄອງທະນາຄານທຸລະກິດ ໃຫ້ປະຕິບັດຕາມຫຼັກການ ດັ່ງນີ້:

1. ສອດຄ່ອງກັບແນວທາງ ນະໂຍບາຍ, ຍຸດທະສາດ, ກົດໝາຍ ແລະ ແຜນພັດທະນາເສດຖະກິດ-ສັງຄົມແຫ່ງຊາດ;
2. ຄຸ້ມຄອງຢ່າງລວມສູນ ແລະ ເປັນເອກະພາບ;
3. ຮັກສາຄວາມໝັ້ນຄົງ ແລະ ຄວາມປອດໄພຂອງທະນາຄານທຸລະກິດ ແລະ ລະບົບການເງິນ-ເງິນຕາຂອງຊາດ;
4. ດຳເນີນທຸລະກິດການທະນາຄານ ຕາມການອະນຸຍາດຂອງທະນາຄານແຫ່ງ ສປປ ລາວ;
5. ເປັນເອກະລາດໃນການດຳເນີນທຸລະກິດ ແລະ ມີຄວາມສະເໝີພາບຕໍ່ໜ້າກົດໝາຍ;
6. ໃຫ້ບໍລິການຢ່າງມີຈັນຍາບັນ, ໂປ່ງໃສ ແລະ ຮັບປະກັນ ສິດ ແລະ ຜົນປະໂຫຍດອັນຊອບທຳຂອງຜູ້ຊົມໃຊ້.

### ມາດຕາ 6 (ປັບປຸງ) ຂອບເຂດການນຳໃຊ້ກົດໝາຍ

ກົດໝາຍສະບັບນີ້ ນຳໃຊ້ສຳລັບ ທະນາຄານທຸລະກິດ, ບໍລິສັດໃນກຸ່ມ, ສາຂາ, ຫ້ອງການຜູ້ຕາງໜ້າຂອງທະນາຄານທຸລະກິດພາຍໃນ ທີ່ຕັ້ງຢູ່ ສປປ ລາວ ຫຼື ຕ່າງປະເທດ, ອົງການຄຸ້ມຄອງທະນາຄານທຸລະກິດ ລວມທັງ ບຸກຄົນ, ນິຕິບຸກຄົນ ຫຼື ການຈັດຕັ້ງ ທີ່ກ່ຽວຂ້ອງ.

### ມາດຕາ 7 (ປັບປຸງ) ການຮ່ວມມືສາກົນ

ລັດ ສົ່ງເສີມ ການພົວພັນ ຮ່ວມມືກັບຕ່າງປະເທດ, ພາກພື້ນ ແລະ ສາກົນ ກ່ຽວກັບການເຄື່ອນໄຫວຂອງທະນາຄານທຸລະກິດ ດ້ວຍການແລກປ່ຽນ ບົດຮຽນ, ຂໍ້ມູນ ຂ່າວສານ, ເຕັກໂນໂລຊີ ແລະ ພັດທະນາຊັບພະຍາກອນມະນຸດ ເພື່ອໃຫ້ລະບົບທະນາຄານຂອງ ສປປ ລາວ ເຕີບໃຫຍ່ເຂັ້ມແຂງ, ສາມາດເຊື່ອມໂຍງກັບສາກົນ, ປະຕິບັດຕາມສົນທິສັນຍາ ແລະ ສັນຍາສາກົນ ທີ່ ສປປ ລາວ ເປັນພາຄີ.

## ພາກທີ II
## ການຂໍອະນຸຍາດດຳເນີນທຸລະກິດການທະນາຄານ
## ແລະ ໂຄງປະກອບການຈັດຕັ້ງ

### ໝວດທີ 1
### ການຂໍອະນຸຍາດດຳເນີນທຸລະກິດການທະນາຄານ

**ມາດຕາ ໘ (ປັບປຸງ) ການຂໍອະນຸຍາດດຳເນີນທຸລະກິດການທະນາຄານ**

ບຸກຄົນ, ນິຕິບຸກຄົນ ທີ່ມີຈຸດປະສົງດຳເນີນທຸລະກິດການທະນາຄານ ຕ້ອງຍື່ນຄຳຮ້ອງຂໍອະນຸຍາດ ພ້ອມດ້ວຍເອກະສານກ່ຽວຂ້ອງ ຢ່າງຖືກຕ້ອງ ແລະ ຄົບຖ້ວນ ຕໍ່ຫ້ອງການບໍລິການການລົງທຶນປະຕູດຽວ ຂັ້ນສູນກາງ ຕາມທີ່ໄດ້ກຳນົດໄວ້ໃນກົດໝາຍວ່າດ້ວຍການສົ່ງເສີມການລົງທຶນ ເພື່ອສົ່ງໃຫ້ທະນາຄານແຫ່ງ ສປປ ລາວ ພິຈາລະນາ ອະນຸຍາດດຳເນີນທຸລະກິດການທະນາຄານ.

ເອກະສານປະກອບໃນການຂໍອະນຸຍາດດຳເນີນທຸລະກິດການທະນາຄານ ມີ ດັ່ງນີ້:

1. ຄຳຮ້ອງຂໍສ້າງຕັ້ງ ຕາມແບບພິມທີ່ທະນາຄານແຫ່ງ ສປປ ລາວ ກຳນົດ;
2. ບົດວິພາກເສດຖະກິດ-ເຕັກນິກ ຕາມແບບພິມ ທີ່ທະນາຄານແຫ່ງ ສປປ ລາວ ກຳນົດ;
3. ໜັງສືແຕ່ງຕັ້ງຄະນະຮັບຜິດຊອບສ້າງຕັ້ງ, ໃນກໍລະນີທີ່ມອບໝາຍໃຫ້ຜູ້ຕາງໜ້າ ເປັນຜູ້ຮັບຜິດຊອບໃນການຂໍສ້າງຕັ້ງ ຕ້ອງມີໃບມອບສິດຢ່າງຖືກຕ້ອງຕາມກົດໝາຍ;
4. ສັນຍາຮ່ວມທຶນ ຫຼື ສັນຍາສ້າງຕັ້ງທະນາຄານ;
5. ເອກະສານຢັ້ງຢືນແຫຼ່ງທຶນຈົດທະບຽນ ຫຼື ເງິນລົງທຶນ;
6. ໜັງສືຍິນຍອມ ໃຫ້ທະນາຄານແຫ່ງ ສປປ ລາວ ສາມາດກວດສອບແຫຼ່ງທຶນທີ່ຈະນຳມາລົງທຶນສ້າງຕັ້ງທະນາຄານທຸລະກິດ, ຖານະການເງິນຂອງຜູ້ຖືຮຸ້ນ; ກວດສອບປະຫວັດ ຂອງຜູ້ຖືຮຸ້ນ ແລະ ຜູ້ບໍລິຫານ;
7. ຮ່າງກົດລະບຽບ ຕາມແບບພິມທີ່ທະນາຄານແຫ່ງ ສປປ ລາວ ກຳນົດ;
8. ມະຕິກອງປະຊຸມຂອງຜູ້ຖືຮຸ້ນສ້າງຕັ້ງ ທີ່ຮັບຮອງເອົາເອກະສານຕາມ ຂໍ້ 2, 3, 4 ແລະ ຂໍ້ 7 ຂອງມາດຕານີ້ ແລະ ການແຕ່ງຕັ້ງສະພາບໍລິຫານ ແລະ ຜູ້ອຳນວຍການ;
9. ມະຕິຂອງກອງປະຊຸມຜູ້ຖືຮຸ້ນ, ສະພາບໍລິຫານ ຫຼື ຜູ້ທີ່ມີສິດອຳນາດຂອງຜູ້ຂໍສ້າງຕັ້ງ ສຳລັບການສ້າງຕັ້ງສາຂາ ຫຼື ທະນາຄານໃນກຸ່ມ ຂອງທະນາຄານທຸລະກິດ;
10. ບັນຊີລາຍຊື່ຂອງຜູ້ຖືຮຸ້ນ ແລະ ອັດຕາສ່ວນການຖືຮຸ້ນ;
11. ຄູ່ມືດຳເນີນງານ ກ່ຽວກັບວຽກງານການບັນຊີ, ການບໍລິຫານຄວາມສ່ຽງ, ການກວດກາພາຍໃນ, ການຄຸ້ມຄອງພະນັກງານ, ການບໍລິການຜະລິດຕະພັນຕ່າງໆ, ການຕ້ານ ສະກັດກັ້ນ ການຟອກເງິນ ແລະ ການສະໜອງທຶນໃຫ້ແກ່ການກໍ່ການຮ້າຍ ແລະ ອື່ນໆ;
12. ເອກະສານຢັ້ງຢືນຖານະການເງິນ ຂອງຜູ້ຖືຮຸ້ນ ໂດຍໄດ້ຮັບການກວດສອບຈາກອົງການກວດສອບພາຍນອກ ສາມປີ ປ້ອນຫຼັງຕໍ່ເນື່ອງ;
13. ໜັງສືອະນຸຍາດຈາກອົງການທີ່ກ່ຽວຂ້ອງ ໃຫ້ສ້າງຕັ້ງທະນາຄານທຸລະກິດ ຢູ່ ສປປ ລາວ ຕາມກົດໝາຍຂອງປະເທດທີ່ກ່ຽວຂ້ອງ (ສຳລັບນິຕິບຸກຄົນຕ່າງປະເທດ);

14. ຊີວະປະຫວັດ, ໃບຢັ້ງຢືນຄຸນວຸດທິ ແລະ ໃບຢັ້ງຢືນການຜ່ານງານ ຂອງຜູ້ບໍລິຫານ ແລະ ຜູ້ກວດກາພາຍໃນ ຕາມແບບພິມທີ່ທະນາຄານແຫ່ງ ສປປ ລາວ ກຳນົດ.

ການຂໍອະນຸຍາດດຳເນີນທຸລະກິດການທະນາຄານ ຕ້ອງເສຍຄ່າທຳນຽມ ຕາມລະບຽບການ.

**ມາດຕາ 9 (ປັບປຸງ) ການພິຈາລະນາ ກ່ຽວກັບການຂໍອະນຸຍາດດຳເນີນທຸລະກິດການທະນາຄານ**

ພາຍຫຼັງໄດ້ຮັບເອກະສານ ຂໍອະນຸຍາດດຳເນີນທຸລະກິດການທະນາຄານ ຢ່າງຖືກຕ້ອງ ແລະ ຄົບຖ້ວນ ຕາມທີ່ໄດ້ກຳນົດໄວ້ໃນມາດຕາ 8 ຂອງກົດໝາຍສະບັບນີ້ແລ້ວ ທະນາຄານແຫ່ງ ສປປ ລາວ ຈະພິຈາລະນາ ແລະ ແຈ້ງຕອບເຫັນດີທາງດ້ານຫຼັກການ ຫຼື ປະຕິເສດການຂໍອະນຸຍາດດຳເນີນທຸລະກິດ ໃຫ້ແກ່ຜູ້ຂໍອະນຸຍາດດຳເນີນທຸລະກິດການທະນາຄານ ໂດຍຜ່ານຫ້ອງການບໍລິການການລົງທຶນປະຕູດຽວຂັ້ນສູນກາງ ພາຍໃນເວລາ ຫົກສິບວັນ.

ທະນາຄານແຫ່ງ ສປປ ລາວ ຕ້ອງແຈ້ງຕອບເຫັນດີທາງດ້ານຫຼັກການ ຖ້າເຫັນວ່າຜູ້ຂໍດຳເນີນທຸລະກິດການທະນາຄານ ມີ ເງື່ອນໄຂຄົບຖ້ວນ ດັ່ງນີ້:

1. ບົດວິພາກເສດຖະກິດ-ເຕັກນິກ, ແຜນທຸລະກິດ ມີເນື້ອໃນຄົບຖ້ວນ, ສົມເຫດສົມຜົນ ແລະ ສາມາດຈັດຕັ້ງປະຕິບັດໄດ້;
2. ມີເງິນລົງທຶນ ພຽງພໍ, ຈະແຈ້ງ ແລະ ຖືກຕ້ອງຕາມກົດໝາຍ;
3. ອັດຕາສ່ວນການຖືຮຸ້ນຂອງຜູ້ຖືຮຸ້ນ ມີຄວາມຊັດເຈນ ແລະ ເປັນຈິງ;
4. ຜູ້ບໍລິຫານ ບໍ່ເຄີຍຖືກສານຕັດສິນໃຫ້ເປັນຜູ້ລົ້ມລະລາຍ ຫຼື ເປັນຜູ້ບໍລິຫານໃນນິຕິບຸກຄົນທີ່ຖືກສານຕັດສິນໃຫ້ລົ້ມລະລາຍ ແລະ ບໍ່ຖືກປົດອອກຈາກການເປັນຜູ້ບໍລິຫານໃນນິຕິບຸກຄົນອື່ນ;
5. ຜູ້ບໍລິຫານ, ຜູ້ຖືຮຸ້ນ ມີປະຫວັດດີ, ບໍ່ເຄີຍຖືກສານຕັດສິນລົງໂທດ ໃນສະຖານລັກຊັບ, ສໍ້ໂກງຊັບ, ຍັກຍອກຊັບ, ປອມແປງເອກະສານ, ຮັບ ຫຼື ໃຫ້ສິນບົນ, ສໍ້ລາດບັງຫຼວງ, ການຟອກເງິນ, ການສະໜອງທຶນໃຫ້ແກ່ການກໍ່ການຮ້າຍ, ການຄ້າມະນຸດ, ການກະທຳຜິດກ່ຽວກັບຢາເສບຕິດ ຫຼື ການກະທຳຜິດອື່ນ ທີ່ກ່ຽວຂ້ອງກັບດ້ານການເງິນ ແລະ ເງິນຕາ;
6. ຜູ້ບໍລິຫານ ແລະ ຜູ້ຖືຮຸ້ນລາຍໃຫຍ່ ມີຄຸນວຸດທິ ແລະ ປະສົບການເໝາະສົມກັບການດຳເນີນທຸລະກິດດ້ານການເງິນ-ການທະນາຄານ;
7. ຂໍ້ມູນລາຍລະອຽດຂອງຜູ້ກ່ຽວຂ້ອງ ຂອງຜູ້ຖືຮຸ້ນ ແລະ ຜູ້ບໍລິຫານທັງໝົດ ມີຄວາມຖືກຕ້ອງ ແລະ ເປັນຈິງ;
8. ກົດລະບຽບ ມີຄວາມຮັດກຸມ, ຄົບຖ້ວນ ແລະ ສອດຄ່ອງກັບກົດໝາຍ ແລະ ລະບຽບການຂອງທະນາຄານແຫ່ງ ສປປ ລາວ;
9. ຄູ່ມືດຳເນີນງານ, ກວດສອບ ແລະ ຄວບຄຸມວຽກງານພາຍໃນ ມີຄວາມສອດຄ່ອງກັບກົດໝາຍ.

ໃນກໍລະນີຫາກເຫັນວ່າ ບໍ່ມີເງື່ອນໄຂຄົບຖ້ວນ ທະນາຄານແຫ່ງ ສປປ ລາວ ຕ້ອງແຈ້ງຕອບປະຕິເສດ ຢ່າງເປັນລາຍລັກອັກສອນໃຫ້ແກ່ຜູ້ຂໍອະນຸຍາດດຳເນີນທຸລະກິດການທະນາຄານ.

**ມາດຕາ 10 (ປັບປຸງ) ການອອກໃບອະນຸຍາດດຳເນີນທຸລະກິດການທະນາຄານ**

ພາຍຫຼັງໄດ້ຮັບໜັງສືແຈ້ງຕອບເຫັນດີທາງດ້ານຫຼັກການ ຈາກທະນາຄານແຫ່ງ ສປປ ລາວ ແລະ ໄດ້ຮັບໃບອະນຸຍາດລົງທຶນຈາກຄະນະກຳມະການສົ່ງເສີມ ແລະ ຄຸ້ມຄອງການລົງທຶນຂັ້ນສູນກາງ, ຜູ້ຂໍອະນຸຍາດດຳເນີນທຸລະກິດການທະນາຄານ ຕ້ອງປະຕິບັດເງື່ອນໄຂເພີ່ມເຕີມ ພາຍໃນເວລາ ໜຶ່ງຮ້ອຍແປດສິບວັນ ດັ່ງນີ້:

1. ຖອກທຶນຈົດທະບຽນ ຫຼື ເງິນລົງທຶນ ຢູ່ທະນາຄານແຫ່ງ ສປປ ລາວ ຢ່າງຄົບຖ້ວນ;
2. ປະກອບພະນັກງານທີ່ໄດ້ມາດຕະຖານ ໃນຈຳນວນພຽງພໍ;
3. ປະກອບວັດຖຸເຕັກນິກ ແລະ ສະຖານທີ່ ເພື່ອຮັບປະກັນໃຫ້ແກ່ການດຳເນີນງານ;
4. ມີລະບົບດຳເນີນງານ ທີ່ສາມາດຕອບສະໜອງການດຳເນີນທຸລະກິດການທະນາຄານ.

ໃນກໍລະນີທີ່ຜູ້ຂໍອະນຸຍາດດຳເນີນທຸລະກິດການທະນາຄານ ບໍ່ສາມາດປະຕິບັດເງື່ອນໄຂໃດໜຶ່ງເທິງນີ້ ໂດຍມີເຫດຜົນພຽງພໍ ທະນາຄານແຫ່ງ ສປປ ລາວ ຈະພິຈາລະນາຕໍ່ເວລາການປະຕິບັດເງື່ອນໄຂເພີ່ມເຕີມກໍ່ໄດ້ ຄັ້ງລະ ເກົ້າສິບວັນ ແຕ່ທັງໝົດບໍ່ເກີນ ສອງຄັ້ງ.

ທະນາຄານແຫ່ງ ສປປ ລາວ ຈະອອກໃບອະນຸຍາດດຳເນີນທຸລະກິດການທະນາຄານ ກໍຕໍ່ເມື່ອຜູ້ຂໍອະນຸຍາດດຳເນີນທຸລະກິດການທະນາຄານ ໄດ້ປະຕິບັດເງື່ອນໄຂ ຕາມວັກໜຶ່ງເທິງນີ້ ຢ່າງຄົບຖ້ວນ.

ພາຍຫຼັງໄດ້ຮັບໃບອະນຸຍາດດຳເນີນທຸລະກິດການທະນາຄານແລ້ວ ທະນາຄານແຫ່ງ ສປປ ລາວ ຕ້ອງແຈ້ງໃຫ້ຂະແໜງການທີ່ກ່ຽວຂ້ອງ ເພື່ອຂຶ້ນທະບຽນວິສາຫະກິດ ແລະ ທະນາຄານທຸລະກິດນັ້ນ ຕ້ອງເຄື່ອນໄຫວທຸລະກິດພາຍໃນເວລາ ເກົ້າສິບວັນ ນັບແຕ່ວັນໄດ້ຮັບທະບຽນວິສາຫະກິດ ເປັນຕົ້ນໄປ.

**ມາດຕາ 11 (ປັບປຸງ) ການນຳໃຊ້ໃບອະນຸຍາດດຳເນີນທຸລະກິດການທະນາຄານ**

ທະນາຄານທຸລະກິດ ຕ້ອງເຄື່ອນໄຫວໃຫ້ສອດຄ່ອງກັບໃບອະນຸຍາດດຳເນີນທຸລະກິດການທະນາຄານ ແລະ ຕ້ອງສະແດງໃບອະນຸຍາດດັ່ງກ່າວ ຢູ່ສຳນັກງານຂອງຕົນ ໂດຍສະເພາະບ່ອນທີ່ລູກຄ້າສາມາດເຫັນລາຍລະອຽດໄດ້ຊັດເຈນ.

ໃບອະນຸຍາດດຳເນີນທຸລະກິດການທະນາຄານ ມີຜົນນຳໃຊ້ໄດ້ຕະຫຼອດໄລຍະການເຄື່ອນໄຫວຂອງທະນາຄານທຸລະກິດ ແລະ ບໍ່ສາມາດມອບ, ໂອນ ຫຼື ໃຫ້ບຸກຄົນ ຫຼື ນິຕິບຸກຄົນອື່ນນຳໃຊ້.

**ມາດຕາ 12 (ປັບປຸງ) ທຶນຈົດທະບຽນ ຫຼື ເງິນລົງທຶນຕ່ຳສຸດ**

ທະນາຄານທຸລະກິດ ທີ່ໄດ້ຮັບອະນຸຍາດດຳເນີນທຸລະກິດຕາມກົດໝາຍສະບັບນີ້ ຕ້ອງມີທຶນຈົດທະບຽນຕ່ຳສຸດ ຫ້າຮ້ອຍຕື້ກີບ. ທະນາຄານທຸລະກິດຕ່າງປະເທດ ທີ່ສ້າງຕັ້ງສາຂາຢູ່ ສປປ ລາວ ຕ້ອງມີເງິນລົງທຶນຕ່ຳສຸດ ໃຫ້ສາຂາດັ່ງກ່າວ ສາມຮ້ອຍຕື້ກີບ.

ທຶນຈົດທະບຽນ ຫຼື ເງິນລົງທຶນ ສາມາດປະກອບເປັນເງິນ ແລະ ວັດຖຸ, ສຳລັບການປະກອບເປັນວັດຖຸ ຕ້ອງບໍ່ໃຫ້ເກີນ ສິບສ່ວນຮ້ອຍ ຂອງທຶນຈົດທະບຽນ ຫຼື ເງິນລົງທຶນ. ທຶນທີ່ເປັນວັດຖຸ ຕ້ອງໄດ້ຮັບການປະເມີນຈາກບໍລິສັດປະເມີນມູນຄ່າຊັບສິນ ຕາມການເຫັນດີຂອງທະນາຄານແຫ່ງ ສປປ ລາວ.

ທຶນທີ່ເປັນວັດຖຸ ປະກອບດ້ວຍ ອະສັງຫາລິມະຊັບ ແລະ/ຫຼື ສັງຫາລິມະຊັບ ທີ່ນຳໃຊ້ເຂົ້າໃນການດຳເນີນທຸລະກິດຂອງທະນາຄານທຸລະກິດ, ໃນນັ້ນອະສັງຫາລິມະຊັບຕ້ອງຕັ້ງຢູ່ ສປປ ລາວ ເທົ່ານັ້ນ.

ທຶນຈົດທະບຽນ ຫຼື ເງິນລົງທຶນຕໍ່າສຸດ ໃນແຕ່ລະໄລຍະນັ້ນ ສາມາດປ່ຽນແປງໄດ້ຕາມການຕົກລົງຂອງລັດຖະບານ ແຕ່ບໍ່ໃຫ້ຫຼຸດຈຳນວນທີ່ໄດ້ກຳນົດໄວ້ໃນມາດຕານີ້.

### ມາດຕາ 13 (ປັບປຸງ) ການລົງທຶນ ແລະ ຖືຮຸ້ນໃນທະນາຄານທຸລະກິດ

ການລົງທຶນໃນທະນາຄານທຸລະກິດ ປະກອບດ້ວຍຮູບການ ດັ່ງນີ້:

1. ການລົງທຶນຮ່ວມ ລະຫວ່າງຜູ້ລົງທຶນພາຍໃນ ແລະ ຕ່າງປະເທດ;
2. ການລົງທຶນຮ່ວມ ລະຫວ່າງລັດວິສາຫະກິດ ແລະ ວິສາຫະກິດເອກະຊົນ;
3. ການລົງທຶນຮ່ວມ ລະຫວ່າງພາກ ລັດ ແລະ ເອກະຊົນ;
4. ການລົງທຶນຝ່າຍດຽວ.

ທະນາຄານທຸລະກິດ ສາມາດສ້າງຕັ້ງໃນຮູບແບບບໍລິສັດຈຳກັດ ຫຼື ບໍລິສັດມະຫາຊົນ. ໃນກໍລະນີສ້າງຕັ້ງເປັນບໍລິສັດຈຳກັດຜູ້ດຽວ ແມ່ນອະນຸຍາດໃຫ້ສ້າງຕັ້ງເປັນທະນາຄານໃນກຸ່ມຂອງທະນາຄານຕ່າງປະເທດເທົ່ານັ້ນ.

ບຸກຄົນ, ນິຕິບຸກຄົນ ສາມາດເປັນຜູ້ຖືຮຸ້ນໃນທະນາຄານທຸລະກິດ ຕາມອັດຕາສ່ວນການຖືຮຸ້ນ ທີ່ໄດ້ກຳນົດໄວ້ໃນລະບຽບການຂອງທະນາຄານແຫ່ງ ສປປ ລາວ.

ການຖືຮຸ້ນໃນທະນາຄານທຸລະກິດ ຕ້ອງບໍ່ພາໃຫ້ເປັນການຄອບຄອງຕະຫຼາດ ຫຼື ກໍ່ໃຫ້ເກີດການແຂ່ງຂັນທີ່ບໍ່ເປັນທຳ, ຍົກເວັ້ນກໍລະນີການຖືຮຸ້ນ ເພື່ອສ້າງຄວາມເຂັ້ມແຂງໃຫ້ແກ່ທະນາຄານທຸລະກິດທີ່ຢູ່ໃນພາວະວິກິດ ຕາມການອະນຸຍາດຂອງທະນາຄານແຫ່ງ ສປປ ລາວ.

### ມາດຕາ 14 (ປັບປຸງ) ກົດລະບຽບຂອງທະນາຄານທຸລະກິດ

ກົດລະບຽບຂອງທະນາຄານທຸລະກິດ ຕ້ອງໄດ້ຮັບການຮັບຮອງຈາກກອງປະຊຸມຜູ້ຖືຮຸ້ນ ແລະ ມີເນື້ອໃນ ດັ່ງນີ້:

1. ຊື່ ແລະ ທີ່ຕັ້ງສຳນັກງານ;
2. ວັດຖຸປະສົງ;
3. ທຶນຈົດທະບຽນ;
4. ປະເພດຮຸ້ນ, ຈຳນວນຮຸ້ນ ແລະ ສິດໃນການລົງຄະແນນສຽງ;
5. ຊື່, ທີ່ຢູ່ ແລະ ສັນຊາດຂອງຜູ້ຖືຮຸ້ນ;
6. ການຄຸ້ມຄອງບໍລິຫານ;
7. ກອງປະຊຸມ ແລະ ວິທີລົງມະຕິ;
8. ການແບ່ງເງິນປັນຜົນ;
9. ການແກ້ໄຂຂໍ້ຂັດແຍ່ງ;
10. ວິທີການຊຳລະສະສາງ;
11. ເນື້ອໃນອື່ນ ຕາມການກຳນົດຂອງທະນາຄານແຫ່ງ ສປປ ລາວ.

**ມາດຕາ 15 (ປັບປຸງ) ການຮັກສາ ແລະ ເປີດເຜີຍຂໍ້ມູນກ່ຽວກັບການຂໍອະນຸຍາດດຳເນີນທຸລະກິດ**

ທະນາຄານແຫ່ງ ສປປ ລາວ ຕ້ອງຮັກສາຂໍ້ມູນທັງໝົດ ກ່ຽວກັບການຂໍອະນຸຍາດດຳເນີນທຸລະກິດການທະນາຄານ ແລະ ຕ້ອງເປີດເຜີຍຂໍ້ມູນໃຫ້ມວນຊົນ ພາຍໃນເວລາ ສິບວັນ ນັບແຕ່ວັນອອກໃບອະນຸຍາດດຳເນີນທຸລະກິດການທະນາຄານ ເປັນຕົ້ນໄປ.

ຂໍ້ມູນທີ່ເປີດເຜີຍ ມີ ດັ່ງນີ້:

1. ຊື່, ທີ່ຕັ້ງຂອງສຳນັກງານໃຫຍ່ ແລະ ສາຂາ;
2. ທຶນຈົດທະບຽນ, ເງິນລົງທຶນ;
3. ເລກທີ ແລະ ວັນທີ ຂອງໃບອະນຸຍາດດຳເນີນທຸລະກິດການທະນາຄານ;
4. ຂອບເຂດການເຄື່ອນໄຫວຂອງທະນາຄານທຸລະກິດ ທີ່ໄດ້ຮັບອະນຸຍາດ;
5. ຜູ້ຖືຮຸ້ນ, ຜູ້ບໍລິຫານ;
6. ຂໍ້ມູນອື່ນ ທີ່ທະນາຄານແຫ່ງ ສປປ ລາວ ເຫັນວ່າຈຳເປັນ.

ໃນກໍລະນີທີ່ມີການປ່ຽນແປງຂໍ້ມູນໃດໜຶ່ງນັ້ນ ທະນາຄານແຫ່ງ ສປປ ລາວ ຕ້ອງເປີດເຜີຍຂໍ້ມູນດັ່ງກ່າວຢ່າງທັນການ.

**ມາດຕາ 16 (ໃໝ່) ການຂໍອະນຸຍາດດຳເນີນທຸລະກິດການທະນາຄານຂອງສາຂາທະນາຄານທຸລະກິດຕ່າງປະເທດ**

ການຂໍອະນຸຍາດດຳເນີນທຸລະກິດການທະນາຄານ ຂອງສາຂາທະນາຄານທຸລະກິດຕ່າງປະເທດ ໃຫ້ປະຕິບັດຕາມຂັ້ນຕອນການສ້າງຕັ້ງທະນາຄານທຸລະກິດ ຕາມທີ່ໄດ້ກຳນົດໄວ້ໃນກົດໝາຍສະບັບນີ້.

ເອກະສານປະກອບໃນການຂໍອະນຸຍາດດຳເນີນທຸລະກິດການທະນາຄານ ຂອງສາຂາທະນາຄານທຸລະກິດຕ່າງປະເທດ ມີດັ່ງດຽວກັນກັບເອກະສານທີ່ໄດ້ກຳນົດໄວ້ໃນມາດຕາ 8 ຂອງກົດໝາຍສະບັບນີ້ ຍົກເວັ້ນຂໍ້ 4, 8 ແລະ ຂໍ້ 10.

ນອກຈາກເອກະສານທີ່ໄດ້ກ່າວມາໃນວັກສອງເທິງນີ້ ຍັງຕ້ອງມີມະຕິຂອງ ສະພາບໍລິຫານ, ກອງປະຊຸມຜູ້ຖືຮຸ້ນ ຫຼື ຜູ້ທີ່ມີສິດອຳນາດຂອງຜູ້ຂໍດຳເນີນທຸລະກິດ ກ່ຽວກັບການຮັບຮອງເອົາເອກະສານ ຕາມທີ່ໄດ້ກຳນົດໄວ້ໃນມາດຕາ 8 ຂໍ້ 1, 2, 3 ແລະ ຂໍ້ 7, ໜັງສືແຕ່ງຕັ້ງຜູ້ບໍລິຫານສາຂາຊຸດທຳອິດ ແລະ ຕ້ອງມີໜັງສືຄ້ຳປະກັນສັນຍາຂອງທະນາຄານສຳນັກງານໃຫຍ່ ໃນການປະຕິບັດພັນທະທາງດ້ານການເງິນ ແທນສາຂາຂອງຕົນທີ່ຕັ້ງຢູ່ ສປປ ລາວ.

**ມາດຕາ 17 (ໃໝ່) ການສ້າງຕັ້ງຫ້ອງການຜູ້ຕາງໜ້າຂອງທະນາຄານທຸລະກິດຕ່າງປະເທດ**

ການສ້າງຕັ້ງຫ້ອງການຜູ້ຕາງໜ້າຂອງທະນາຄານທຸລະກິດຕ່າງປະເທດຢູ່ ສປປ ລາວ ໃຫ້ປະຕິບັດຕາມກົດໝາຍວ່າດ້ວຍການສົ່ງເສີມການລົງທຶນ.

## ໝວດທີ 2
## ໂຄງປະກອບການຈັດຕັ້ງຂອງທະນາຄານທຸລະກິດ

**ມາດຕາ 18 (ປັບປຸງ) ໂຄງປະກອບການຈັດຕັ້ງຂອງທະນາຄານທຸລະກິດ**

ທະນາຄານທຸລະກິດ ມີ ໂຄງປະກອບການຈັດຕັ້ງຕົ້ນຕໍ ດັ່ງນີ້:

1. ກອງປະຊຸມຜູ້ຖືຮຸ້ນ;
2. ສະພາບໍລິຫານ;
3. ຄະນະກໍາມະການຂອງສະພາບໍລິຫານ;
4. ຄະນະອໍານວຍການ.

**ມາດຕາ 19 (ປັບປຸງ) ກອງປະຊຸມຜູ້ຖືຮຸ້ນ**

ກອງປະຊຸມຜູ້ຖືຮຸ້ນ ແມ່ນ ການຈັດຕັ້ງສູງສຸດຂອງທະນາຄານທຸລະກິດ. ກອງປະຊຸມຜູ້ຖືຮຸ້ນ ມີ ສອງ ປະເພດ ຄື ກອງປະຊຸມສາມັນ ແລະ ກອງປະຊຸມວິສາມັນ.

ກອງປະຊຸມສາມັນ ຕ້ອງເປີດຂຶ້ນຢ່າງໜ້ອຍ ໜຶ່ງຄັ້ງ ຕໍ່ປີ, ໃນນັ້ນ ໜຶ່ງຄັ້ງ ຕ້ອງເປີດຂຶ້ນພາຍໃນເວລາ ສີ່ເດືອນ ຫຼັງຈາກສິ້ນສຸດປີການບັນຊີ. ສໍາລັບກອງປະຊຸມວິສາມັນ ສາມາດເປີດຂຶ້ນເມື່ອໃດກໍໄດ້ ຖ້າເຫັນວ່າຈໍາເປັນ ຕາມການສະເໜີຂອງຜູ້ຖືຮຸ້ນ ທີ່ຖືຮຸ້ນແຕ່ ໜຶ່ງສ່ວນສາມ ຂອງຈໍານວນຮຸ້ນທັງໝົດ ຫຼື ຕາມກົດລະບຽບຂອງທະນາຄານທຸລະກິດ.

ການແຈ້ງກ່ຽວກັບກອງປະຊຸມ, ອົງປະຊຸມ, ວາລະກອງປະຊຸມ, ວິທີລົງມະຕິ, ມະຕິກອງປະຊຸມ, ການປົກປ້ອງສິດ ແລະ ຜົນປະໂຫຍດຂອງຜູ້ຖືຮຸ້ນສ່ວນໜ້ອຍ ແລະ ການລົບລ້າງມະຕິກອງປະຊຸມ ໃຫ້ປະຕິບັດຕາມກົດໝາຍວ່າດ້ວຍວິສາຫະກິດ.

ໃນກໍລະນີທີ່ທະນາຄານທຸລະກິດ ມີຖານະການເງິນອ່ອນແອ, ບໍ່ແກ້ໄຂຂໍ້ຄົງຄ້າງຕາມການແນະນໍາຂອງຜູ້ກວດກາຂອງທະນາຄານແຫ່ງ ສປປ ລາວ ຫຼື ຜູ້ຖືຮຸ້ນບໍ່ປະຕິບັດ ສິດ ແລະ ໜ້າທີ່ຂອງຕົນ ທະນາຄານແຫ່ງ ສປປ ລາວ ສາມາດສັ່ງເປີດກອງປະຊຸມຜູ້ຖືຮຸ້ນ ແລະ ກອງປະຊຸມນັ້ນ ຈະເລືອກຕັ້ງປະທານ ເພື່ອດໍາເນີນກອງປະຊຸມ.

ສໍາລັບທະນາຄານທີ່ເປັນບໍລິສັດຈໍາກັດຜູ້ດຽວ ໃຫ້ຖືເອົາມະຕິຂອງກອງປະຊຸມຜູ້ຖືຮຸ້ນ ຫຼື ສະພາບໍລິຫານ ຂອງທະນາຄານທຸລະກິດຕ່າງປະເທດທີ່ເປັນຜູ້ຖືຮຸ້ນ ເປັນມະຕິຂອງກອງປະຊຸມຜູ້ຖືຮຸ້ນຂອງຕົນ.

**ມາດຕາ 20 (ປັບປຸງ) ສິດ ແລະ ໜ້າທີ່ ຂອງກອງປະຊຸມຜູ້ຖືຮຸ້ນ**

ກອງປະຊຸມຜູ້ຖືຮຸ້ນ ມີ ສິດ ແລະ ໜ້າທີ່ ດັ່ງນີ້:

1. ຮັບຮອງເອົາກົດລະບຽບຂອງທະນາຄານທຸລະກິດ ລວມທັງການປັບປຸງແກ້ໄຂກົດລະບຽບດັ່ງກ່າວ ຕາມການສະເໜີຂອງສະພາບໍລິຫານ;
2. ເລືອກຕັ້ງ ຫຼື ປົດຕໍາແໜ່ງ ປະທານ, ຮອງປະທານ ແລະ ສະມາຊິກຂອງສະພາບໍລິຫານ;
3. ກໍານົດເບັ້ຍປະຊຸມຂອງກອງປະຊຸມສະພາບໍລິຫານ, ເງິນເດືອນ, ເງິນບໍາເນັດ ແລະ ນະໂຍບາຍອື່ນ ສໍາລັບຜູ້ບໍລິຫານ;

4. ຮັບຮອງເອົາບົດສະຫຼຸບ, ແຜນການດຳເນີນທຸລະກິດ ແລະ ບົດລາຍງານຜົນການກວດສອບປະຈຳປີ ຕາມການສະເໜີຂອງສະພາບໍລິຫານ;

5. ຮັບຮອງເອົາການ ເພີ່ມ ຫຼື ຫຼຸດທຶນ, ການຄວບທຸລະກິດ, ການຊື້ ຂາຍຊັບສິນທີ່ສຳຄັນ ຫຼື ການຍຸບເລີກທະນາຄານທຸລະກິດ ຕາມການສະເໜີຂອງສະພາບໍລິຫານ;

6. ຮັບຮອງເອົາການແບ່ງເງິນປັນຜົນ, ການສ້າງຄັງຕ່າງໆ ຕາມການສະເໜີຂອງສະພາບໍລິຫານ;

7. ນຳໃຊ້ສິດ ແລະ ປະຕິບັດໜ້າທີ່ອື່ນ ຕາມທີ່ໄດ້ກຳນົດໄວ້ໃນກົດໝາຍ.

**ມາດຕາ 21 (ປັບປຸງ) ສະພາບໍລິຫານ**

ສະພາບໍລິຫານ ປະກອບດ້ວຍ ສະມາຊິກແຕ່ ຫ້າຄົນ ຂຶ້ນໄປ ຕາມການເຫັນດີຂອງທະນາຄານແຫ່ງ ສປປ ລາວ, ໃນນັ້ນ ຕ້ອງມີສະມາຊິກສະພາບໍລິຫານຈາກພາຍນອກຢ່າງໜ້ອຍ ໜຶ່ງຄົນ.

ສະພາບໍລິຫານ ປະກອບດ້ວຍ ປະທານ, ຮອງປະທານ ແລະ ສະມາຊິກຈຳນວນໜຶ່ງ ຊຶ່ງທັງໝົດຖືກເລືອກຕັ້ງ ຫຼື ປົດຕຳແໜ່ງ ໂດຍກອງປະຊຸມຜູ້ຖືຮຸ້ນ. ອາຍຸການຂອງສະມາຊິກສະພາບໍລິຫານ ບໍ່ໃຫ້ເກີນ ສາມປີ ແລະ ສາມາດຖືກເລືອກຕັ້ງຄືນໃໝ່ຢ່າງຕໍ່ເນື່ອງກັນ ບໍ່ໃຫ້ເກີນ ສາມຄັ້ງ.

ສະພາບໍລິຫານ ຕ້ອງເປີດກອງປະຊຸມຢ່າງໜ້ອຍ ສາມເດືອນຕໍ່ຄັ້ງ. ການເຄື່ອນໄຫວຂອງສະພາບໍລິຫານ ໃຫ້ປະຕິບັດຕາມກົດລະບຽບຂອງທະນາຄານທຸລະກິດ, ກົດໝາຍ ແລະ ລະບຽບການທີ່ກ່ຽວຂ້ອງ.

**ມາດຕາ 22 (ປັບປຸງ) ເງື່ອນໄຂຂອງສະມາຊິກສະພາບໍລິຫານ**

ສະມາຊິກສະພາບໍລິຫານ ຕ້ອງມີເງື່ອນໄຂຕົ້ນຕໍ ດັ່ງນີ້:

1. ມີຄວາມສາມາດທາງດ້ານການປະພຶດ;

2. ມີຄວາມຮູ້ ຄວາມສາມາດ ແລະ ປະສົບການ ທາງດ້ານບໍລິຫານຈັດການ, ການເງິນ-ການທະນາຄານ ຫຼື ກົດໝາຍ;

3. ບໍ່ເຄີຍຖືກສານຕັດສິນລົງໂທດ ໃນສະຖານລັກຊັບ, ສໍ້ໂກງຊັບ, ຍັກຍອກຊັບ, ປອມແປງເອກະສານ, ຮັບ ຫຼື ໃຫ້ສິນບົນ, ສໍ້ລາດບັງຫຼວງ ຫຼື ຟອກເງິນ;

4. ບໍ່ເຄີຍຖືກປົດອອກຈາກການເປັນຜູ້ບໍລິຫານໃນນິຕິບຸກຄົນອື່ນ, ບໍ່ຖືກສານຕັດສິນໃຫ້ເປັນຜູ້ລົ້ມລະລາຍ ມາກ່ອນ ແລະ ບໍ່ເປັນຜູ້ບໍລິຫານໃນນິຕິບຸກຄົນ ທີ່ຖືກສານຕັດສິນໃຫ້ລົ້ມລະລາຍ;

5. ຖ້າແມ່ນຜູ້ກວດກາຂອງທະນາຄານແຫ່ງ ສປປ ລາວ ຕ້ອງໄດ້ພົ້ນຈາກໜ້າທີ່ຢ່າງໜ້ອຍ ໜຶ່ງປີ ກ່ອນຖືກແຕ່ງຕັ້ງເປັນສະມາຊິກສະພາບໍລິຫານ.

**ມາດຕາ 23 (ປັບປຸງ) ສິດ ແລະ ໜ້າທີ່ຂອງສະພາບໍລິຫານ**

ສະພາບໍລິຫານ ມີ ສິດ ແລະ ໜ້າທີ່ ດັ່ງນີ້:

1. ຜັນຂະຫຍາຍ ແລະ ຈັດຕັ້ງປະຕິບັດມະຕິກອງປະຊຸມຜູ້ຖືຮຸ້ນ;

2. ກຳນົດ ຍຸດທະສາດ, ນະໂຍບາຍ, ການຄຸ້ມຄອງບໍລິຫານ, ການບໍລິຫານຄວາມສ່ຽງ, ການກວດສອບ ແລະ ນະໂຍບາຍອື່ນ ໃນການດຳເນີນທຸລະກິດ;

3. ຮັບຮອງເອົາລະບຽບການ ແລະ ຄູ່ມື ຕາມການສະເໜີຂອງຄະນະກຳມະການສະພາບໍລິຫານ;

4. ຮັບຜິດຊອບຕໍ່ທຸກການເຄື່ອນໄຫວຂອງທະນາຄານທຸລະກິດ ຕາມກົດໝາຍ ແລະ ລະບຽບການທີ່ກ່ຽວຂ້ອງ;

5. ໄດ້ຮັບຂໍ້ມູນຢ່າງທັນການ ແລະ ເໝາະສົມກ່ຽວກັບສະພາບສິນເຊື່ອ, ຄວາມສ່ຽງທີ່ສຳຄັນ, ການຈັດຊັ້ນໜີ້ ແລະ ຊັບສິນ, ການຫັກເງິນແຮ ແລະ ການເສື່ອມຄຸນນະພາບຂອງຊັບສິນ ແລະ ຄວາມສ່ຽງທີ່ເກີດຈາກຊັບສິນ ຊຶ່ງອາດຈະສົ່ງຜົນເສຍຫາຍໃຫ້ແກ່ທະນາຄານທຸລະກິດ ໃນແຕ່ລະໄລຍະ;

6. ຊີ້ແຈງ, ຕອບຄຳຖາມ ແລະ ລາຍງານ ກ່ຽວກັບການເຄື່ອນໄຫວຂອງທະນາຄານທຸລະກິດ ຕໍ່ກອງປະຊຸມຜູ້ຖືຮຸ້ນ;

7. ສະເໜີແບ່ງປັນເງິນກຳໄລເຂົ້າຄັງຕ່າງໆ ແລະ ເງິນປັນຜົນ ຕໍ່ກອງປະຊຸມຜູ້ຖືຮຸ້ນ;

8. ສະເໜີແຜນການດຳເນີນທຸລະກິດຕໍ່ກອງປະຊຸມຜູ້ຖືຮຸ້ນ ເພື່ອພິຈາລະນາຮັບຮອງ;

9. ແຕ່ງຕັ້ງຄະນະກຳມະການຂອງສະພາບໍລິຫານ;

10. ແຕ່ງຕັ້ງ ຫຼື ປົດຕຳແໜ່ງ ຜູ້ອຳນວຍການ;

11. ຮັບຮອງເອົາການແຕ່ງຕັ້ງຮອງຜູ້ອຳນວຍການ ຕາມການສະເໜີຂອງຜູ້ອຳນວຍການ;

12. ລາຍງານການເຄື່ອນໄຫວຂອງທະນາຄານທຸລະກິດ ຕໍ່ກອງປະຊຸມຜູ້ຖືຮຸ້ນ;

13. ນຳໃຊ້ສິດ ແລະ ປະຕິບັດໜ້າທີ່ອື່ນ ຕາມທີ່ໄດ້ກຳນົດໄວ້ໃນກົດໝາຍ.

### ມາດຕາ 24 (ໃໝ່) ພັນທະຂອງສະມາຊິກສະພາບໍລິຫານ

ສະມາຊິກສະພາບໍລິຫານ ມີ ພັນທະ ດັ່ງນີ້:

1. ຕັດສິນບັນຫາຕ່າງໆຂອງທະນາຄານທຸລະກິດ ຢ່າງເປັນເອກະລາດ ແລະ ມີຈັນຍາບັນສູງ;

2. ສຶກສາໃຫ້ເຂົ້າໃຈຢ່າງເລິກເຊິ່ງ ຕໍ່ໜ້າທີ່ວຽກງານທີ່ຕົນໄດ້ຮັບມອບໝາຍ, ຄວາມສ່ຽງທີ່ຕິດພັນກັບໜ້າທີ່ວຽກງານຂອງຕົນ, ກົດໝາຍ ແລະ ລະບຽບການທີ່ກ່ຽວຂ້ອງ ແລະ ວິທີປະຕິບັດທີ່ດີຂອງສາກົນ;

3. ຍົກລະດັບຄວາມຮູ້ ຄວາມສາມາດ ທັງພາຍໃນ ແລະ ຕ່າງປະເທດ ກ່ຽວກັບໜ້າວຽກຂອງຕົນຢ່າງໜ້ອຍ ສອງຄັ້ງຕໍ່ປີ;

4. ເຂົ້າຮ່ວມປະຊຸມສະພາບໍລິຫານດ້ວຍຕົນເອງ ແລະ ປະຕິບັດໜ້າທີ່ຂອງຕົນ ຢ່າງຕັ້ງໜ້າ;

5. ປະກອບຄຳຄິດເຫັນຢ່າງເປັນເຈົ້າການໃນກອງປະຊຸມ ສະພາບໍລິຫານ ແລະ ຄະນະກຳມະການສະພາບໍລິຫານທີ່ຕົນສັງກັດ;

6. ແຈ້ງໃຫ້ສະພາບໍລິຫານໃນທັນໃດ ກ່ຽວກັບຜົນປະໂຫຍດທັບຊ້ອນຂອງຕົນ;

7. ຕອບຄຳຖາມເຈາະຈີ້ມຂອງທະນາຄານແຫ່ງ ສປປ ລາວ ດ້ວຍຕົນເອງ ກ່ຽວກັບການປະຕິບັດໜ້າວຽກຂອງຕົນ;

8. ເຂົ້າພົບຕາມການເຊີນ, ໃຫ້ຄວາມຮ່ວມມື ແລະ ປະຕິບັດຕາມການກຳນົດຂອງທະນາຄານແຫ່ງ ສປປ ລາວ;

9. ປະຕິບັດພັນທະອື່ນ ຕາມກົດລະບຽບຂອງທະນາຄານທຸລະກິດ.

ມາດຕາ 25 (ປັບປຸງ) ຄະນະກຳມະການຂອງສະພາບໍລິຫານ

ຄະນະກຳມະການຂອງສະພາບໍລິຫານ ປະກອບດ້ວຍ:

1. ຄະນະກຳມະການຄຸ້ມຄອງບໍລິຫານ;
2. ຄະນະກຳມະການບໍລິຫານຄວາມສ່ຽງ;
3. ຄະນະກຳມະການກວດສອບ;
4. ຄະນະກຳມະການອື່ນ ຕາມການຕົກລົງຂອງສະພາບໍລິຫານ.

ແຕ່ລະຄະນະກຳມະການ ປະກອບດ້ວຍ ສະມາຊິກສະພາບໍລິຫານຢ່າງໜ້ອຍ ສາມຄົນ ທີ່ມີຄຸນວຸດທິ ແລະ ປະສົບການທີ່ເໝາະສົມ, ໃນນັ້ນມີ ປະທານຄະນະກຳມະການ ແລະ ຄະນະກຳມະການ. ສະມາຊິກສະພາບໍລິຫານຜູ້ໜຶ່ງ ສາມາດສັງກັດຢູ່ຫຼາຍຄະນະກຳມະການໄດ້ ແຕ່ສາມາດເປັນປະທານໄດ້ພຽງໜຶ່ງຄະນະກຳມະການເທົ່ານັ້ນ. ປະທານຄະນະກຳມະການກວດສອບ ຕ້ອງເປັນສະມາຊິກສະພາບໍລິຫານຈາກພາຍນອກ. ສະພາບໍລິຫານສາມາດແຕ່ງຕັ້ງບຸກຄະລາກອນພາຍນອກ ທີ່ບໍ່ແມ່ນສະມາຊິກສະພາບໍລິຫານ ມາປະກອບເພີ່ມເຕີມ ໃນແຕ່ລະຄະນະກຳມະການໄດ້.

ຄະນະກຳມະການຂອງສະພາບໍລິຫານ ເຄື່ອນໄຫວວຽກງານຕາມລະບອບປະຊຸມ ຊຶ່ງເປີດຂຶ້ນຢ່າງໜ້ອຍ ສອງເດືອນຕໍ່ຄັ້ງ ຕາມການຮຽກໂຮມຂອງປະທານຄະນະກຳມະການ ຫຼື ປະທານສະພາບໍລິຫານ ໃນກໍລະນີຈຳເປັນ.

ຄະນະກຳມະການຂອງສະພາບໍລິຫານ ມີກົງຈັກຊ່ວຍວຽກປະຈຳຂອງຕົນ ແລະ ຕ້ອງມີຄູ່ມື ເພື່ອຮັບໃຊ້ວຽກງານຂອງຕົນ ຊຶ່ງຕ້ອງໄດ້ຮັບການທົບທວນຢ່າງໜ້ອຍ ປີລະຄັ້ງ.

ມາດຕາ 26 (ປັບປຸງ) ສິດ ແລະ ໜ້າທີ່ ຂອງຄະນະກຳມະການຄຸ້ມຄອງບໍລິຫານ

ຄະນະກຳມະການຄຸ້ມຄອງບໍລິຫານ ມີ ສິດ ແລະ ໜ້າທີ່ ດັ່ງນີ້:

1. ຄົ້ນຄວ້າສ້າງ ແລະ ປັບປຸງນະໂຍບາຍ ກ່ຽວກັບການຄຸ້ມຄອງບຸກຄະລາກອນ, ກຳນົດກົດຈັນຍາບັນ, ຫຼັກການ ແລະ ວິທີການຄັດເລືອກຜູ້ບໍລິຫານ, ຄ່າຕອບແທນໃຫ້ແກ່ຜູ້ບໍລິຫານ ເພື່ອນຳສະເໜີຕໍ່ສະພາບໍລິຫານພິຈາລະນາຮັບຮອງ;
2. ຊີ້ນຳການສ້າງ ແລະ ປັບປຸງຄູ່ມື ເພື່ອນຳສະເໜີຕໍ່ສະພາບໍລິຫານ ພິຈາລະນາຮັບຮອງ ພ້ອມທັງຕິດຕາມ, ກວດກາ ແລະ ລາຍງານໃຫ້ສະພາບໍລິຫານ ກ່ຽວກັບການຈັດຕັ້ງປະຕິບັດຄູ່ມືດັ່ງກ່າວ;
3. ກຳນົດມາດຕະຖານເງື່ອນໄຂຂອງພະນັກງານເຮັດວຽກງານຄຸ້ມຄອງບໍລິຫານ;
4. ຄັດເລືອກເປົ້າໝາຍ, ສະເໜີແຕ່ງຕັ້ງ ຫຼື ປົດຕຳແໜ່ງ ຜູ້ອຳນວຍການ, ຜູ້ກວດສອບພາຍໃນ ໃຫ້ສະພາບໍລິຫານພິຈາລະນາ ຕາມມາດຕະຖານ ແລະ ເງື່ອນໄຂທີ່ໄດ້ກຳນົດໄວ້;
5. ຄົ້ນຄວ້າການແຕ່ງຕັ້ງຂອງຜູ້ອຳນວຍການ, ຫົວໜ້າພະແນກ, ຫົວໜ້າສາຂາ ຕາມການສະເໜີຂອງຜູ້ອຳນວຍການ ເພື່ອນຳສະເໜີຕໍ່ສະພາບໍລິຫານ ພິຈາລະນາຮັບຮອງ;
6. ຄົ້ນຄວ້າສ້າງແຜນການດຳເນີນງານຂອງສະພາບໍລິຫານໃນແຕ່ລະປີ ເພື່ອນຳສະເໜີຕໍ່ສະພາບໍລິຫານພິຈາລະນາຮັບຮອງ ພ້ອມທັງຕິດຕາມການຈັດຕັ້ງປະຕິບັດແຜນການດັ່ງກ່າວ;
7. ກຳນົດເງື່ອນໄຂ ແລະ ແຜນການ ເພື່ອປະເມີນການເຄື່ອນໄຫວຂອງສະພາບໍລິຫານ ແລະ ຜູ້ບໍລິຫານ;

8. ສະເໜີສະພາບໍລິຫານ ວາງມາດຕະການດ້ານວິໄນ ຕໍ່ຜູ້ບໍລິຫານທີ່ລະເມີດການປະຕິບັດໜ້າທີ່ຂອງຕົນ;

9. ສະເໜີສະພາບໍລິຫານ ປົດຕຳແໜ່ງຜູ້ບໍລິຫານ ທີ່ຂາດເງື່ອນໄຂ ຫຼື ຂາດຄວາມເໝາະສົມໃນການສືບຕໍ່ດຳລົງຕຳແໜ່ງດັ່ງກ່າວ;

10. ສະຫຼຸບຕີລາຄາການຈັດຕັ້ງປະຕິບັດວຽກງານປະຈຳປີຂອງຕົນ;

11. ລາຍງານການປະຕິບັດໜ້າທີ່ຂອງຕົນ ຕໍ່ສະພາບໍລິຫານ ເປັນແຕ່ລະໄລຍະ;

12. ນຳໃຊ້ສິດ ແລະ ປະຕິບັດໜ້າທີ່ອື່ນ ຕາມທີ່ໄດ້ກຳນົດໄວ້ໃນກົດໝາຍ ແລະ ລະບຽບການທີ່ກ່ຽວຂ້ອງ.

**ມາດຕາ 27 (ປັບປຸງ) ສິດ ແລະ ໜ້າທີ່ ຂອງຄະນະກຳມະການບໍລິຫານຄວາມສ່ຽງ**

ຄະນະກຳມະການບໍລິຫານຄວາມສ່ຽງ ມີ ສິດ ແລະ ໜ້າທີ່ ດັ່ງນີ້:

1. ຄົ້ນຄວ້າ ສ້າງ ແລະ ປັບປຸງນະໂຍບາຍ ກ່ຽວກັບການບໍລິຫານຄວາມສ່ຽງ ຂອງທະນາຄານທຸລະກິດ ເພື່ອນຳສະເໜີຕໍ່ສະພາບໍລິຫານ ພິຈາລະນາຮັບຮອງ;

2. ຊີ້ນຳການສ້າງ ແລະ ປັບປຸງຄູ່ມື ແລ້ວນຳສະເໜີຕໍ່ສະພາບໍລິຫານ ພິຈາລະນາຮັບຮອງ ພ້ອມທັງຕິດຕາມ, ກວດກາ ແລະ ລາຍງານໃຫ້ສະພາບໍລິຫານ ກ່ຽວກັບການຈັດຕັ້ງປະຕິບັດຄູ່ມືດັ່ງກ່າວ;

3. ກຳນົດມາດຕະຖານເງື່ອນໄຂຂອງພະນັກງານທີ່ເຮັດວຽກງານບໍລິຫານຄວາມສ່ຽງ;

4. ປະກອບຄຳເຫັນຕໍ່ບັນຫາ ທີ່ສະພາບໍລິຫານມອບໝາຍໃຫ້ ຫຼື ຕ້ອງການໃຫ້ແກ້ໄຂ;

5. ສະຫຼຸບຕີລາຄາການຈັດຕັ້ງປະຕິບັດວຽກງານປະຈຳປີຂອງຕົນ;

6. ລາຍງານການປະຕິບັດໜ້າທີ່ຂອງຕົນຕໍ່ສະພາບໍລິຫານ ເປັນແຕ່ລະໄລຍະ;

7. ນຳໃຊ້ສິດ ແລະ ປະຕິບັດໜ້າທີ່ອື່ນ ຕາມທີ່ໄດ້ກຳນົດໄວ້ໃນກົດໝາຍ ແລະ ລະບຽບການທີ່ກ່ຽວຂ້ອງ.

**ມາດຕາ 28 (ປັບປຸງ) ສິດ ແລະ ໜ້າທີ່ ຂອງຄະນະກຳມະການກວດສອບ**

ຄະນະກຳມະການກວດສອບ ມີ ສິດ ແລະ ໜ້າທີ່ ດັ່ງນີ້:

1. ຄົ້ນຄວ້າ ສ້າງ ແລະ ປັບປຸງນະໂຍບາຍ ກ່ຽວກັບການລາຍງານການເງິນ ແລະ ການກວດສອບລະບົບຄວບຄຸມພາຍໃນ, ການບັນຊີ, ລະບົບຂໍ້ມູນ ລວມທັງການກວດສອບຂອງທະນາຄານທຸລະກິດ ເພື່ອນຳສະເໜີຕໍ່ສະພາບໍລິຫານພິຈາລະນາຮັບຮອງ;

2. ຊີ້ນຳການສ້າງ ແລະ ປັບປຸງຄູ່ມື ແລ້ວນຳສະເໜີຕໍ່ສະພາບໍລິຫານ ພິຈາລະນາຮັບຮອງ ພ້ອມທັງຕິດຕາມ, ກວດກາ ແລະ ລາຍງານໃຫ້ສະພາບໍລິຫານ ກ່ຽວກັບການຈັດຕັ້ງປະຕິບັດຄູ່ມືດັ່ງກ່າວ;

3. ຕິດຕາມກວດກາການເຄື່ອນໄຫວຂອງທະນາຄານທຸລະກິດ ລວມທັງການປະຕິບັດແຜນການດຳເນີນທຸລະກິດ, ມະຕິຂອງກອງປະຊຸມສະພາບໍລິຫານ ໃຫ້ສອດຄ່ອງກັບຄູ່ມື ແລະ ລະບຽບການພາຍໃນ ຂອງທະນາຄານທຸລະກິດ ແລະ ກົດໝາຍ;

4. ກຳນົດມາດຕະຖານເງື່ອນໄຂຂອງພະນັກງານເຮັດວຽກງານກວດສອບພາຍໃນ;

5. ຕົກລົງກ່ຽວກັບການວ່າຈ້າງ ຫຼື ຍົກເລີກສັນຍາກັບບໍລິສັດກວດສອບ ພ້ອມທັງກຳນົດຂອບເຂດຂອງການກວດສອບ ຕາມການຕົກລົງຂອງສະພາບໍລິຫານ;

6. ຕິດຕາມ, ຕີລາຄາຄຸນນະພາບຂອງບໍລິສັດກວດສອບ, ຄວາມເປັນເອກະລາດ ແລະ ການພົວພັນຂອງບໍລິສັດກວດສອບ ໂດຍເບິ່ງສາຍພົວພັນຮອບດ້ານ ລະຫວ່າງບໍລິສັດກວດສອບກັບທະນາຄານທຸລະກິດ;

7. ຮຽກເອົາ ເອກະສານລາຍງານການເງິນປະຈຳປີ ແລະ ປະຈຳໄຕມາດ ທີ່ໄດ້ຮັບການກວດສອບ, ບົດລາຍງານຜົນການກວດສອບພາຍໃນ ແລະ ພາຍນອກ ກັບຜູ້ບໍລິຫານທີ່ກ່ຽວຂ້ອງ, ຜູ້ກວດສອບພາຍໃນ ແລະ ບໍລິສັດກວດສອບ, ກວດເບິ່ງ ແລະ ປຶກສາຫາລື ກ່ຽວກັບບັນຫາດັ່ງກ່າວ;

8. ໃຫ້ຄຳແນະນຳດ້ານກົດໝາຍ ກ່ຽວກັບວຽກງານກວດສອບ;

9. ຕິດຕາມ, ກວດກາ ຄວາມຄືບໜ້າການແກ້ໄຂຂໍ້ຄົງຄ້າງ ຕາມທີ່ກຳນົດໄວ້ຢູ່ໃນບົດລາຍງານການກວດສອບ;

10. ປຶກສາກັບທີ່ປຶກສາດ້ານກົດໝາຍ, ທີ່ປຶກສາດ້ານບັນຊີ ແລະ ດ້ານອື່ນ ຕາມການເຫັນດີຂອງສະພາບໍລິຫານ;

11. ປະກອບຄຳເຫັນຕໍ່ບັນຫາທີ່ສະພາບໍລິຫານ ຫຼື ຜູ້ບໍລິຫານ ໄດ້ສະເໜີຂຶ້ນ;

12. ສະຫຼຸບຕີລາຄາ ການຈັດຕັ້ງປະຕິບັດວຽກງານປະຈຳປີຂອງຕົນ;

13. ລາຍງານການປະຕິບັດໜ້າທີ່ຂອງຕົນຕໍ່ສະພາບໍລິຫານ ເປັນແຕ່ລະໄລຍະ;

14. ນຳໃຊ້ສິດ ແລະ ປະຕິບັດໜ້າທີ່ອື່ນ ຕາມທີ່ໄດ້ກຳນົດໄວ້ໃນກົດໝາຍ ແລະ ລະບຽບການທີ່ກ່ຽວຂ້ອງ.

### ມາດຕາ 29 (ປັບປຸງ) ຄະນະອຳນວຍການ

ຄະນະອຳນວຍການ ປະກອບດ້ວຍ ຜູ້ອຳນວຍການ ແລະ ຮອງຜູ້ອຳນວຍການ.

ຜູ້ອຳນວຍການ ເປັນຜູ້ບໍລິຫານຈັດການວຽກງານປະຈຳວັນ ໃນຂອບເຂດສິດ ແລະ ໜ້າທີ່ຂອງຕົນ ຕາມທີ່ໄດ້ກຳນົດໄວ້ໃນກົດໝາຍສະບັບນີ້, ກົດລະບຽບພາຍໃນ ແລະ ຕາມການມອບໝາຍຂອງສະພາບໍລິຫານ.

ຜູ້ອຳນວຍການ ຖືກແຕ່ງຕັ້ງ ຫຼື ປົດຕຳແໜ່ງ ໂດຍສະພາບໍລິຫານ, ມີອາຍຸການບໍ່ເກີນ ສາມປີ ແລະ ສາມາດຖືກແຕ່ງຕັ້ງຄືນໃໝ່ຢ່າງຕໍ່ເນື່ອງກັນ ບໍ່ໃຫ້ເກີນ ສາມຄັ້ງ.

ຜູ້ອຳນວຍການ ອາດເປັນສະມາຊິກສະພາບໍລິຫານໄດ້ ແຕ່ບໍ່ໃຫ້ດຳລົງຕຳແໜ່ງເປັນປະທານ ຫຼື ຮອງປະທານສະພາບໍລິຫານ ຫຼື ປະທານຄະນະກຳມະການໃດໜຶ່ງຂອງສະພາບໍລິຫານ.

ຮອງຜູ້ອຳນວຍການ ມີໜ້າທີ່ຊ່ວຍຜູ້ອຳນວຍການໃນການບໍລິຫານວຽກງານຂອງທະນາຄານທຸລະກິດ ທັງເປັນຜູ້ຮັກສາການແທນ ໃນກໍລະນີທີ່ຜູ້ອຳນວຍການຕິດຂັດ ຕາມການມອບໝາຍຂອງຜູ້ອຳນວຍການ.

### ມາດຕາ 30 (ປັບປຸງ) ສິດ ແລະ ໜ້າທີ່ ຂອງຜູ້ອຳນວຍການ

ຜູ້ອຳນວຍການ ມີ ສິດ ແລະ ໜ້າທີ່ ດັ່ງນີ້:

1. ເປັນຕົວແທນທະນາຄານທຸລະກິດໃນການລົງລາຍເຊັນໃນສັນຍາ, ເອກະສານທາງການ;
2. ບໍລິຫານວຽກງານປະຈຳວັນຂອງທະນາຄານທຸລະກິດ;

3. ສ້າງ ຫຼື ດັດແກ້ແຜນທຸລະກິດປະຈຳປີ ສະເໜີສະພາບໍລິຫານພິຈາລະນາ ເພື່ອນຳສະເໜີຕໍ່ກອງປະຊຸມຜູ້ຖືຮຸ້ນຮັບຮອງ;

4. ແຕ່ງຕັ້ງ ຫຼື ປົດຕຳແໜ່ງ ຮອງຜູ້ອຳນວຍການ ບົນພື້ນຖານການຮັບຮອງຂອງສະພາບໍລິຫານ;

5. ແຕ່ງຕັ້ງ ຫຼື ປົດຕຳແໜ່ງ ຫົວໜ້າພະແນກ ຫຼື ຫົວໜ້າສາຂາ;

6. ບັນຈຸສັບຊ້ອນພະນັກງານຂອງທະນາຄານທຸລະກິດ ຕາມຂອບເຂດຄວາມຮັບຜິດຊອບຂອງຕົນ ຫຼື ຕາມການສະເໜີຂອງຄະນະກຳມະການສະພາບໍລິຫານ;

7. ສະໜອງຂໍ້ມູນ ແລະ ໃຫ້ຄຳຊີ້ແຈງ ກ່ຽວກັບບັນຫາ ທີ່ສະພາບໍລິຫານມີຄວາມສົນໃຈ;

8. ສ້າງ ຫຼື ປັບປຸງ ກົດລະບຽບກ່ຽວກັບການຄຸ້ມຄອງ ເພື່ອນຳສະເໜີຕໍ່ສະພາບໍລິຫານ ພິຈາລະນາຮັບຮອງ;

9. ຮັບຜິດຊອບທຸກການເຄື່ອນໄຫວຂອງທະນາຄານທຸລະກິດ ຕໍ່ສະພາບໍລິຫານ;

10. ສະເໜີເປີດສາຂາ, ສ້າງຕັ້ງບໍລິສັດໃນກຸ່ມ ຫຼື ລົງທຶນ ໃນທຸລະກິດອື່ນ ຕໍ່ສະພາບໍລິຫານ ພິຈາລະນາຮັບຮອງ;

11. ຕົກລົງກ່ຽວກັບເງິນເດືອນຂອງພະນັກງານ, ປະຕິບັດນະໂຍບາຍເບື້ອງບຳ ຫຼື ລົງວິໄນ ຕໍ່ພະນັກງານທີ່ລະເມີດກົດລະບຽບ ຂອງທະນາຄານທຸລະກິດ;

12. ໃຫ້ການຮ່ວມມື, ສະໜອງຂໍ້ມູນ ແລະ ຊີ້ແຈງບັນຫາ ຕໍ່ບໍລິສັດກວດສອບ ແລະ ທະນາຄານແຫ່ງ ສປປ ລາວ;

13. ໃຫ້ຄຳຊີ້ແຈງ ແລະ ສະໜອງເອກະສານທີ່ຈຳເປັນ ຕາມຄວາມຕ້ອງການຂອງສະພາບໍລິຫານ ແລະ ຄະນະກຳມະການຕ່າງໆ ຂອງສະພາບໍລິຫານ;

14. ລາຍງານການເຄື່ອນໄຫວຂອງທະນາຄານທຸລະກິດ ຕໍ່ສະພາບໍລິຫານ ແລະ ຄະນະກຳມະການຕ່າງໆ ຂອງສະພາບໍລິຫານ;

15. ນຳໃຊ້ສິດ ແລະ ປະຕິບັດໜ້າທີ່ອື່ນ ຕາມທີ່ໄດ້ກຳນົດໄວ້ໃນກົດໝາຍ.

### ມາດຕາ 31 (ໃໝ່) ການຮັບຮອງການແຕ່ງຕັ້ງ ຫຼື ປົດຕຳແໜ່ງຜູ້ບໍລິຫານ

ການແຕ່ງຕັ້ງ ຫຼື ການປົດຕຳແໜ່ງ ຜູ້ບໍລິຫານຂອງທະນາຄານທຸລະກິດ ຕ້ອງໄດ້ຮັບການຮັບຮອງຈາກທະນາຄານແຫ່ງ ສປປ ລາວ.

### ມາດຕາ 32 (ໃໝ່) ການຈັດຕັ້ງຂອງສາຂາທະນາຄານທຸລະກິດຕ່າງປະເທດ

ການຈັດຕັ້ງຂອງສາຂາທະນາຄານທຸລະກິດຕ່າງປະເທດ ປະກອບມີ ຫົວໜ້າສາຂາ, ຮອງຫົວໜ້າສາຂາ, ຫົວໜ້າຂະແໜງ, ຜູ້ກວດສອບພາຍໃນ ແລະ ພະນັກງານວິຊາການຈຳນວນໜຶ່ງ.

ການແຕ່ງຕັ້ງ ຫຼື ປົດຕຳແໜ່ງ ຫົວໜ້າສາຂາ, ຮອງຫົວໜ້າສາຂາ ຂອງສາຂາທະນາຄານທຸລະກິດຕ່າງປະເທດ ຕ້ອງໄດ້ຮັບການຮັບຮອງຈາກທະນາຄານແຫ່ງ ສປປ ລາວ.

## ພາກທີ III
## ທຸລະກິດການທະນາຄານ ແລະ ການຂະຫຍາຍທຸລະກິດ
### ໝວດທີ 1
### ທຸລະກິດການທະນາຄານ

**ມາດຕາ 33 (ປັບປຸງ) ທຸລະກິດການທະນາຄານ**

ທຸລະກິດການທະນາຄານ ປະກອບດ້ວຍ:

1. ການຮັບຝາກເງິນ;
2. ການສະໜອງສິນເຊື່ອ;
3. ການໃຫ້ບໍລິການຊຳລະ;
4. ການຊື້ ຂາຍເງິນຕາ.

ນອກຈາກນັ້ນ ທະນາຄານທຸລະກິດ ສາມາດເປັນຕົວແທນໃຫ້ບໍລິການທາງດ້ານການເງິນ, ໃຫ້ຄຳປຶກສາດ້ານການເງິນ ແລະ ການລົງທຶນ, ໃຫ້ບໍລິການເກັບຮັກສາວັດຖຸມີຄ່າ ແລະ ໃຫ້ບໍລິການອື່ນ ຕາມການອະນຸຍາດຂອງທະນາຄານແຫ່ງ ສປປ ລາວ.

**ມາດຕາ 34 (ໃໝ່) ການຮັບຝາກເງິນ**

ການຮັບຝາກເງິນ ແມ່ນ ການໃຫ້ບໍລິການເປີດບັນຊີເງິນຝາກຂອງທະນາຄານທຸລະກິດ ໃຫ້ບຸກຄົນ, ນິຕິບຸກຄົນ ແລະ ການຈັດຕັ້ງ ຊຶ່ງປະກອບດ້ວຍ ບັນຊີ ເງິນຝາກກະແສລາຍວັນ, ເງິນຝາກປະຢັດ, ເງິນຝາກມີກຳນົດ ແລະ ອື່ນໆ ໂດຍມີດອກເບ້ຍ ຫຼື ບໍ່ມີດອກເບ້ຍ.

ນອກຈາກນັ້ນ, ທະນາຄານທຸລະກິດ ສາມາດກູ້ຢືມເງິນ ຫຼື ອອກຮຸ້ນກູ້ ຢູ່ພາຍໃນ ແລະ ຕ່າງປະເທດ ຕາມກົດໝາຍ ເພື່ອລະດົມທຶນເຂົ້າໃນການເຄື່ອນໄຫວທຸລະກິດການທະນາຄານ.

**ມາດຕາ 35 (ໃໝ່) ການສະໜອງສິນເຊື່ອ**

ການສະໜອງສິນເຊື່ອ ແມ່ນ ການໃຫ້ ເງິນກູ້, ພາລະຜູກພັນທາງການເງິນອື່ນ ຫຼື ຜະລິດຕະພັນອື່ນທີ່ຄ້າຍຄືກັນຕາມການອະນຸຍາດຂອງທະນາຄານແຫ່ງ ສປປ ລາວ ທີ່ທະນາຄານທຸລະກິດໄດ້ອະນຸມັດໃຫ້ ບຸກຄົນ, ນິຕິບຸກຄົນ ຫຼື ການຈັດຕັ້ງ ນຳໃຊ້ໃນເປົ້າໝາຍໃດໜຶ່ງ ຊຶ່ງຜູ້ກູ້ຢືມ ຕ້ອງຊຳລະຕົ້ນທຶນ, ດອກເບ້ຍ ແລະ ຄ່າທຳນຽມ ໃຫ້ທະນາຄານທຸລະກິດ ຕາມທີ່ກຳນົດໄວ້ໃນສັນຍາ.

**ມາດຕາ 36 (ໃໝ່) ການໃຫ້ບໍລິການຊຳລະ**

ການໃຫ້ບໍລິການຊຳລະ ແມ່ນ ການໃຫ້ບໍລິການຊຳລະຄ່າສິນຄ້າ, ຄ່າບໍລິການ ແລະ ໜີ້ສິນອື່ນ ຕາມຄຳສັ່ງຈ່າຍຂອງລູກຄ້າ ຜ່ານກົນໄກ ແລະ ເຄື່ອງມືການຊຳລະໃດໜຶ່ງ ຕາມທີ່ໄດ້ກຳນົດໄວ້ໃນກົດໝາຍວ່າດ້ວຍລະບົບການຊຳລະ.

**ມາດຕາ 37 (ໃໝ່) ການຊື້ ຂາຍເງິນຕາ**

ການຊື້ ຂາຍເງິນຕາ ແມ່ນ ການແລກປ່ຽນເງິນຈາກສະກຸນເງິນໜຶ່ງ ເປັນສະກຸນເງິນອື່ນ ຕາມທີ່ໄດ້ກຳນົດໄວ້ໃນກົດໝາຍວ່າດ້ວຍການຄຸ້ມຄອງເງິນຕາຕ່າງປະເທດ.

ທະນາຄານທຸລະກິດ ສາມາດດຳເນີນທຸລະກິດຊື້ ຂາຍເງິນຕາ ດ້ວຍຕົນເອງ ຫຼື ມອບໃຫ້ບຸກຄົນ, ນິຕິບຸກຄົນ ຫຼື ຮ້ານແລກປ່ຽນເງິນຕາໃດໜຶ່ງ ເປັນຕົວແທນ ຕາມການອະນຸຍາດຂອງທະນາຄານແຫ່ງ ສປປ ລາວ. ທະນາຄານທຸລະກິດ ຕ້ອງຮັບຜິດຊອບຕໍ່ການເຄື່ອນໄຫວ ກ່ຽວກັບການຊື້ ຂາຍເງິນຕາຂອງຕົວແທນດັ່ງກ່າວ.

ທະນາຄານແຫ່ງ ສປປ ລາວ ເປັນຜູ້ກຳນົດລະບຽບການ ກ່ຽວກັບການຄຸ້ມຄອງຮ້ານແລກປ່ຽນເງິນຕາ ທີ່ໄດ້ຮັບມອບໝາຍເປັນຕົວແທນດັ່ງກ່າວ.

**ມາດຕາ 38 (ໃໝ່) ການເປັນຕົວແທນທາງດ້ານການເງິນ**

ການເປັນຕົວແທນທາງດ້ານການເງິນ ແມ່ນ ການເປັນນາຍໜ້າໃນການດຳເນີນທຸລະກຳ ລະຫວ່າງລູກຄ້າໃນຕະຫຼາດການເງິນ ລວມທັງການເປັນຕົວແທນໃນການຈັດຫາແຫຼ່ງທຶນ.

**ມາດຕາ 39 (ໃໝ່) ການໃຫ້ຄຳປຶກສາທາງດ້ານການເງິນ ແລະ ການລົງທຶນ**

ການໃຫ້ຄຳປຶກສາທາງດ້ານການເງິນ ແລະ ການລົງທຶນ ແມ່ນ ການໃຫ້ຄຳປຶກສາຂອງທະນາຄານທຸລະກິດ ກ່ຽວກັບການວິເຄາະແຜນການເງິນ ແລະ ໃຫ້ຄຳແນະນຳກ່ຽວກັບການລົງທຶນ.

**ມາດຕາ 40 (ໃໝ່) ການໃຫ້ບໍລິການເກັບຮັກສາວັດຖຸມີຄ່າ**

ການໃຫ້ບໍລິການເກັບຮັກສາວັດຖຸມີຄ່າ ແມ່ນ ການໃຫ້ເຊົ່າຕູ້ນິລະໄພເກັບຮັກສາເອກະສານມີຄ່າ ແລະ ວັດຖຸມີຄ່າ ຢູ່ໃນສະຖານທີ່ ທີ່ມີຄວາມປອດໄພຂອງທະນາຄານທຸລະກິດ ຕາມກົດໝາຍທີ່ກ່ຽວຂ້ອງ.

**ມາດຕາ 41 (ປັບປຸງ) ເວລາຂອງການໃຫ້ບໍລິການ**

ທະນາຄານທຸລະກິດ ຕ້ອງແຈ້ງເວລາການໃຫ້ບໍລິການແກ່ລູກຄ້າ ແລະ ບໍ່ສາມາດຢຸດການໃຫ້ບໍລິການໃນໄລຍະເວລາດັ່ງກ່າວ, ຖ້າຈະຢຸດກໍຕ້ອງປະກາດໃຫ້ລູກຄ້າຊາບກ່ອນ ສາມວັນ ລັດຖະການ.

ທະນາຄານທຸລະກິດ ທີ່ຕ້ອງການຢຸດການໃຫ້ບໍລິການໃນວັນທີ່ບໍ່ແມ່ນວັນພັກທາງລັດຖະການ ຫຼື ວັນພັກອື່ນ ຕາມການກຳນົດຂອງລັດຖະບານ ຕ້ອງຂໍອະນຸຍາດເປັນລາຍລັກອັກສອນຈາກທະນາຄານແຫ່ງ ສປປ ລາວ ຢ່າງໜ້ອຍ ຫ້າວັນ ລັດຖະການ ກ່ອນການຢຸດການໃຫ້ບໍລິການດັ່ງກ່າວ.

ໃນກໍລະນີ ວັນທີ່ທະນາຄານທຸລະກິດຢຸດການໃຫ້ບໍລິການ ກົງກັບວັນຄົບກຳນົດສັນຍາ ຊຶ່ງທະນາຄານທຸລະກິດ ແລະ ລູກຄ້າ ຕ້ອງປະຕິບັດພັນທະຢູ່ສະຖານທີ່ດຳເນີນທຸລະກິດຂອງທະນາຄານທຸລະກິດນັ້ນ ໃຫ້ຖືເອົາວັນເປີດໃຫ້ບໍລິການຖັດໄປ ເປັນວັນຄົບກຳນົດສັນຍາທີ່ກ່ຽວຂ້ອງ.

**ມາດຕາ 42 (ໃໝ່) ພາສາທີ່ໃຊ້ທາງການ**

ທຸກເອກະສານ ກ່ຽວກັບການເຄື່ອນໄຫວຂອງທະນາຄານທຸລະກິດ ຕ້ອງເຮັດເປັນພາສາລາວ. ສຳລັບເອກະສານທີ່ສົ່ງຂຶ້ນໂດຍສຳນັກງານໃຫຍ່ ຫຼື ຜູ້ຖືຮຸ້ນຕ່າງປະເທດ ທີ່ເປັນພາສາຕ່າງປະເທດນັ້ນ ຕ້ອງແປເປັນພາສາລາວ.

## ໝວດທີ 2
## ການຂະຫຍາຍທຸລະກິດ

**ມາດຕາ 43 (ປັບປຸງ) ການຂະຫຍາຍທຸລະກິດ**

ທະນາຄານທຸລະກິດ ສາມາດຂະຫຍາຍທຸລະກິດຂອງຕົນ ດ້ວຍການສ້າງຕັ້ງສາຂາ, ໜ່ວຍບໍລິການ, ຫ້ອງການຜູ້ຕາງໜ້າ, ການລົງທຶນໃນສະຖາບັນການເງິນ ຫຼື ນິຕິບຸກຄົນອື່ນທີ່ບໍ່ແມ່ນສະຖາບັນການເງິນ ໂດຍໄດ້ຮັບອະນຸຍາດຈາກທະນາຄານແຫ່ງ ສປປ ລາວ. ສຳລັບການສ້າງຕັ້ງໜ່ວຍບໍລິການ ຕ້ອງລາຍງານໃຫ້ທະນາຄານແຫ່ງ ສປປ ລາວ.

ການຂະຫຍາຍທຸລະກິດ ຕ້ອງມີເງື່ອນໄຂຕົ້ນຕໍ ດັ່ງນີ້:

1. ຖານະທາງດ້ານການເງິນ ມີຄວາມໝັ້ນຄົງ; 

2. ກົງຈັກການຄຸ້ມຄອງບໍລິຫານທຸລະກິດ, ລະບົບກວດສອບບັນຊີພາຍໃນ ມີປະສິດທິພາບ;
3. ລະບົບຮັບ ສົ່ງ ຂໍ້ມູນ ຂ່າວສານ ທີ່ມີປະສິດທິພາບ ສຳລັບວຽກງານຄຸ້ມຄອງ;
4. ການປະຕິບັດລະບຽບ ກ່ຽວກັບການຮັກສາຄວາມໝັ້ນຄົງໄດ້ດີ ຕາມລະບຽບການຂອງທະນາຄານແຫ່ງ ສປປ ລາວ.

ທະນາຄານແຫ່ງ ສປປ ລາວ ເປັນຜູ້ກຳນົດລະບຽບການ ກ່ຽວກັບການສ້າງຕັ້ງສາຂາ ແລະ ໜ່ວຍບໍລິການຫ້ອງການຜູ້ຕາງໜ້າຂອງທະນາຄານທຸລະກິດ.

**ມາດຕາ 44 (ໃໝ່) ການລົງທຶນໃນທຸລະກິດທາງດ້ານການເງິນ**

ທະນາຄານທຸລະກິດໃດໜຶ່ງ ສາມາດລົງທຶນສ້າງຕັ້ງ ຫຼື ເຂົ້າຖືຮຸ້ນ ໃນບໍລິສັດທີ່ດຳເນີນທຸລະກິດທາງດ້ານການເງິນອື່ນ ທີ່ບໍ່ແມ່ນທຸລະກິດການທະນາຄານ ດັ່ງນີ້:

1. ທຸລະກິດຫຼັກຊັບ;
2. ທຸລະກິດປະກັນໄພ;
3. ທຸລະກິດເຊົ່າສິນເຊື່ອ;
4. ທຸລະກິດທາງດ້ານການເງິນອື່ນ ຕາມການອະນຸຍາດຂອງທະນາຄານແຫ່ງ ສປປ ລາວ.

**ມາດຕາ 45 (ປັບປຸງ) ການລົງທຶນໃນນິຕິບຸກຄົນອື່ນທີ່ບໍ່ແມ່ນສະຖາບັນການເງິນ**

ທະນາຄານທຸລະກິດທີ່ມີຄວາມເຂັ້ມແຂງທາງດ້ານການເງິນ ສາມາດລົງທຶນໃນນິຕິບຸກຄົນອື່ນທີ່ບໍ່ແມ່ນສະຖາບັນການເງິນ ທັງພາຍໃນ ແລະ ຕ່າງປະເທດ ທີ່ມີຄວາມເຂັ້ມແຂງ ແລະ ດຳເນີນທຸລະກິດມີປະສິດທິຜົນ

ໃນອັດຕາສ່ວນບໍ່ເກີນ ສິບສ່ວນຮ້ອຍ ຂອງທຶນຈົດທະບຽນ ແລະ ບໍ່ເກີນ ຊາວສ່ວນຮ້ອຍ ຂອງຮຸ້ນທັງໝົດທີ່ສາມາດລົງຄະແນນສຽງໄດ້ໃນນິຕິບຸກຄົນນັ້ນ.

ການຖືຮຸ້ນທັງໝົດໃນນິຕິບຸກຄົນອື່ນ ທີ່ບໍ່ແມ່ນສະຖາບັນການເງິນ ບໍ່ໃຫ້ເກີນ ຫ້າສິບສ່ວນຮ້ອຍ ຂອງທຶນຈົດທະບຽນຂອງທະນາຄານທຸລະກິດ ຕາມລະບຽບການທີ່ທະນາຄານແຫ່ງ ສປປ ລາວ ກຳນົດ.

## ພາກທີ IV
## ການຮັກສາຄວາມໝັ້ນຄົງ, ການໂອນຮຸ້ນ, ການຄວບກິດຈະການ ແລະ ການຊື້ ຂາຍຊັບສິນທີ່ສຳຄັນຂອງທະນາຄານທຸລະກິດ

### ໝວດທີ 1
### ການຮັກສາຄວາມໝັ້ນຄົງຂອງທະນາຄານທຸລະກິດ

**ມາດຕາ 46 (ປັບປຸງ) ເງື່ອນໄຂລວມ ກ່ຽວກັບການຮັກສາຄວາມໝັ້ນຄົງ**

ທະນາຄານທຸລະກິດ ແລະ ສາຂາທະນາຄານທຸລະກິດຕ່າງປະເທດ ຕ້ອງປະຕິບັດເງື່ອນໄຂລວມ ກ່ຽວກັບການຮັກສາຄວາມໝັ້ນຄົງ ດັ່ງນີ້:

1. ດຳເນີນທຸລະກິດ ຕາມລະບົບການບໍລິຫານ ແລະ ການບັນຊີທີ່ດີ ຕາມເງື່ອນໄຂທີ່ໄດ້ກຳນົດໄວ້ໃນກົດໝາຍສະບັບນີ້ ແລະ ລະບຽບການທີ່ທະນາຄານແຫ່ງ ສປປ ລາວ ກຳນົດ;
2. ຮັກສາທຶນໃຫ້ພຽງພໍ, ຮັບປະກັນສະພາບຄ່ອງ ແລະ ຮັບປະກັນການບໍລິຫານຊັບສິນ ໃຫ້ມີຄວາມຕໍ່ເນື່ອງ ແລະ ມີການກະຈາຍຄວາມສ່ຽງ;
3. ມີລະບຽບ, ກົນໄກ ແລະ ຂັ້ນຕອນທີ່ຄົບຖ້ວນ ເພື່ອບໍລິຫານຄວາມສ່ຽງດ້ານຕ່າງໆ.

ທະນາຄານແຫ່ງ ສປປ ລາວ ເປັນຜູ້ກຳນົດລະບຽບການລະອຽດ ກ່ຽວກັບການຮັກສາຄວາມໝັ້ນຄົງຂອງທະນາຄານທຸລະກິດ ແລະ ສາຂາທະນາຄານທຸລະກິດຕ່າງປະເທດ.

ນອກຈາກເງື່ອນໄຂ ກ່ຽວກັບການຮັກສາຄວາມໝັ້ນຄົງທີ່ກ່າວມາເທິງນີ້, ທະນາຄານທຸລະກິດ ຍັງສາມາດນຳໃຊ້ວິທີປະຕິບັດທີ່ດີ ກ່ຽວກັບການຮັກສາຄວາມໝັ້ນຄົງ ຕາມການເຫັນດີຂອງທະນາຄານແຫ່ງ ສປປ ລາວ.

**ມາດຕາ 47 (ປັບປຸງ) ລະບົບການຄວບຄຸມພາຍໃນ**

ທະນາຄານທຸລະກິດ ຕ້ອງມີລະບົບ ແລະ ກຳນົດລະບຽບການຄຸ້ມຄອງບໍລິຫານພາຍໃນ ຊຶ່ງເນື້ອໃນຕົ້ນຕໍກຳນົດ ກ່ຽວກັບໂຄງປະກອບການຈັດຕັ້ງ ແລະ ກົນໄກການຄຸ້ມຄອງບໍລິຫານ ໃນນັ້ນລວມເອົາທີ່ຕັ້ງ, ພາລະບົດບາດ, ສິດ ແລະ ໜ້າທີ່ຄວາມຮັບຜິດຊອບ, ການຕິດຕາມ, ກວດກາ ແລະ ການລາຍງານຂອງຜູ້ບໍລິຫານ, ໜ່ວຍງານ ແລະ ພະນັກງານຂອງທະນາຄານທຸລະກິດ.

ທະນາຄານທຸລະກິດ ຕ້ອງສົ່ງສຳເນົາເອກະສານ ກ່ຽວກັບລະບຽບການຄຸ້ມຄອງ ແລະ ບັນຊີພະນັກງານຂອງຕົນ ທີ່ມີສິດລົງລາຍເຊັນ ພ້ອມທັງສຳເນົາລາຍເຊັນດັ່ງກ່າວໃຫ້ທະນາຄານແຫ່ງ ສປປ ລາວ ຊາບ. ຖ້າມີການປ່ຽນແປງເອກະສານເຫຼົ່ານັ້ນ ກໍຕ້ອງແຈ້ງໃຫ້ທະນາຄານແຫ່ງ ສປປ ລາວ ຊາບ ພາຍໃນເວລາ ສາມວັນ ລັດຖະການ.

ທະນາຄານທຸລະກິດ ຕ້ອງປະກອບບຸກຄະລາກອນຄວບຄຸມພາຍໃນ ທີ່ມີຄຸນວຸດທິ ແລະ ປະສົບການທີ່ເໝາະສົມ ໃນຈຳນວນທີ່ພຽງພໍ ພ້ອມທັງຝຶກອົບຮົມໃຫ້ບຸກຄະລາກອນດັ່ງກ່າວຢ່າງເປັນປົກກະຕິ.

**ມາດຕາ 48 (ໃໝ່) ການບໍລິຫານຄວາມພຽງພໍຂອງທຶນ**

ທະນາຄານທຸລະກິດ ຕ້ອງຮັກສາຄວາມພຽງພໍຂອງທຶນ ຕາມລະບຽບການຂອງທະນາຄານແຫ່ງ ສປປ ລາວ.

ທະນາຄານແຫ່ງ ສປປ ລາວ ກຳນົດອັດຕາສ່ວນຄວາມພຽງພໍຂອງທຶນ, ອົງປະກອບຂອງທຶນ ແລະ ຫຼັກການໃນການຄິດໄລ່ຄວາມພຽງພໍຂອງທຶນ ຂອງທະນາຄານທຸລະກິດ ແລະ ສາມາດກຳນົດເພີ່ມອັດຕາສ່ວນຄວາມພຽງພໍຂອງທຶນ ໃຫ້ທະນາຄານທຸລະກິດໃດໜຶ່ງ ຖ້າເຫັນວ່າທະນາຄານດັ່ງກ່າວ ຫາກມີຄວາມສຳຄັນຕໍ່ລະບົບ ຫຼື ມີຄວາມສ່ຽງສູງ ຊຶ່ງຈະພາໃຫ້ຂາດຄວາມໝັ້ນຄົງ.

**ມາດຕາ 49 (ໃໝ່) ການບໍລິຫານຄວາມສ່ຽງ**

ທະນາຄານທຸລະກິດ ຕ້ອງມີລະບຽບ, ກົນໄກ ແລະ ຂັ້ນຕອນການບໍລິຫານຄວາມສ່ຽງທີ່ລະອຽດ ລວມທັງລະບົບການຕິດຕາມກວດກາຂອງຜູ້ບໍລິຫານຢ່າງມີປະສິດທິຜົນ ເພື່ອໃຫ້ບັນລຸຈຸດປະສົງ ດັ່ງນີ້:

1. ກຳນົດ, ວັດແທກ, ປະເມີນ, ຕິດຕາມ, ລາຍງານ ແລະ ຄວບຄຸມ ຫຼື ຫຼຸດຜ່ອນ ທຸກຄວາມສ່ຽງສຳຄັນຢ່າງທັນເວລາ ເປັນຕົ້ນ ຄວາມສ່ຽງ ດ້ານສິນເຊື່ອ, ດ້ານຕະຫຼາດ, ດ້ານການດຳເນີນງານ;
2. ປະເມີນຄວາມພຽງພໍຂອງທຶນ ແລະ ສະພາບຄ່ອງ ຂອງທະນາຄານທຸລະກິດ.

ຂັ້ນຕອນການບໍລິຫານຄວາມສ່ຽງ ກວມເອົາການສ້າງ ແລະ ການທົບທວນແຜນການຮອງຮັບພາວະວິກິດ ໂດຍຄຳນຶງເຖິງສະພາບຕົວຈິງຂອງທະນາຄານທຸລະກິດ. ຂັ້ນຕອນດັ່ງກ່າວ ຕ້ອງມີຄວາມເໝາະສົມກັບສະພາບຄວາມສ່ຽງ ແລະ ລະດັບຄວາມສຳຄັນຂອງທະນາຄານທຸລະກິດຕໍ່ລະບົບທະນາຄານ.

ທະນາຄານແຫ່ງ ສປປ ລາວ ເປັນຜູ້ກຳນົດລະບຽບການ ກ່ຽວກັບການບໍລິຫານຄວາມສ່ຽງດ້ານຕ່າງໆ ຂອງທະນາຄານທຸລະກິດ.

**ມາດຕາ 50 (ໃໝ່) ການບໍລິຫານຊັບສິນ**

ທະນາຄານທຸລະກິດ ຕ້ອງມີລະບຽບ, ກົນໄກ ແລະ ຂັ້ນຕອນທີ່ເໝາະສົມ ໃນການບໍລິຫານຊັບສິນ ແລະ ຫັກເງິນແຮ ໄວ້ຢ່າງພຽງພໍ ຕາມລະບຽບການທີ່ທະນາຄານແຫ່ງ ສປປ ລາວ ວາງອອກ.

**ມາດຕາ 51 (ປັບປຸງ) ການສະກັດກັ້ນການສວຍໃຊ້ການບໍລິການດ້ານການທະນາຄານ**

ທະນາຄານທຸລະກິດ ຕ້ອງມີລະບຽບ, ກົນໄກ ແລະ ຂັ້ນຕອນທີ່ພຽງພໍ ເພື່ອສະກັດກັ້ນການສວຍໃຊ້ທະນາຄານທຸລະກິດ ເປັນຊ່ອງທາງໃນການກໍ່ອາຊະຍາກຳ ລວມທັງຈັດຕັ້ງປະຕິບັດກົດໝາຍວ່າດ້ວຍການຕ້ານ ສະກັດກັ້ນ ການຟອກເງິນ ແລະ ການສະໜອງທຶນໃຫ້ແກ່ການກໍ່ການຮ້າຍ.

**ມາດຕາ 52 (ໃໝ່) ການຈ້າງຜູ້ໃຫ້ບໍລິການຈາກພາຍນອກ**

ການຈ້າງຜູ້ໃຫ້ບໍລິການຈາກພາຍນອກ ເພື່ອໃຫ້ບໍລິການມອບສິນ ຫຼື ບໍລິຫານຈັດການການຄວບຄຸມພາຍໃນໃຫ້ທະນາຄານທຸລະກິດນັ້ນ ຕ້ອງໄດ້ຂໍອະນຸຍາດນຳທະນາຄານແຫ່ງ ສປປ ລາວ.

ທະນາຄານທຸລະກິດ ຕ້ອງມີລະບຽບ, ກົນໄກ ແລະ ຂັ້ນຕອນໃນການປະເມີນ, ບໍລິຫານ ແລະ ຕິດຕາມການຈ້າງຜູ້ໃຫ້ບໍລິການຈາກພາຍນອກ ເປັນຕົ້ນ ການກວດສອບຂໍ້ມູນຂອງຜູ້ກ່ຽວ, ການກຳນົດຮູບແບບການຈ້າງ, ຄວາມຮັບຜິດຊອບຂອງແຕ່ລະຝ່າຍຢ່າງລະອຽດ.

**ມາດຕາ 53 (ປັບປຸງ) ການດຳເນີນທຸລະກຳກັບຜູ້ກ່ຽວຂ້ອງ ຫຼື ພະນັກງານຂອງທະນາຄານທຸລະກິດ**

ການດຳເນີນທຸລະກຳກັບຜູ້ກ່ຽວຂ້ອງ ຫຼື ພະນັກງານຂອງທະນາຄານທຸລະກິດ ໃຫ້ປະຕິບັດຄືກັບລູກຄ້າທົ່ວໄປ ທີ່ບໍ່ມີສ່ວນກ່ຽວຂ້ອງກັບທະນາຄານດັ່ງກ່າວ ໂດຍບໍ່ໃຫ້ມີສິດພິເສດໃດໆ ແລະ ຕ້ອງມີການຄໍ້າປະກັນທີ່ເໝາະສົມ ໂດຍສອດຄ່ອງກັບລະບຽບການຂອງທະນາຄານແຫ່ງ ສປປ ລາວ.

ທະນາຄານທຸລະກິດ ຕ້ອງລາຍງານການເຮັດທຸລະກຳກັບຜູ້ກ່ຽວຂ້ອງ ຫຼື ພະນັກງານຂອງທະນາຄານທຸລະກິດ ຕໍ່ທະນາຄານແຫ່ງ ສປປ ລາວ.

**ມາດຕາ 54 (ໃໝ່) ການສ້າງແຜນການຂອງຮັບພາວະວິກິດ**

ທະນາຄານທຸລະກິດທີ່ມີຄວາມສຳຄັນຕໍ່ລະບົບ ຕ້ອງສ້າງແຜນການຂອງຮັບພາວະວິກິດ ຕາມລະບຽບການຂອງທະນາຄານແຫ່ງ ສປປ ລາວ ແລະ ຕ້ອງທົບທວນແຜນການດັ່ງກ່າວ ປີລະຄັ້ງ ຫຼື ເມື່ອຄາດວ່າຈະມີສະພາບໃດໜຶ່ງ ເຊັ່ນ ວິກິດການທາງດ້ານການເງິນ, ເສດຖະກິດ, ໄພທຳມະຊາດ ແລະ ລະບົບການຄຸ້ມຄອງບໍລິຫານພາຍໃນລົ້ມເຫຼວ ຫຼື ສະພາບອື່ນໆ ທີ່ອາດຈະເຮັດໃຫ້ມີຜົນກະທົບໄດ້ຍລວມຕໍ່ລະບົບທະນາຄານທຸລະກິດ.

**ມາດຕາ 55 (ປັບປຸງ) ຄວາມຮັບຜິດຊອບຂອງຜູ້ບໍລິຫານ ແລະ ພະນັກງານ**

ຜູ້ບໍລິຫານ ແລະ ພະນັກງານຂອງທະນາຄານທຸລະກິດ ຕ້ອງມີຄວາມຮັບຜິດຊອບສູງ ແລະ ມີຈັນຍາບັນ ໃນການປະຕິບັດໜ້າທີ່ຂອງຕົນ ໂດຍຖືເອົາຜົນປະໂຫຍດຂອງລູກຄ້າ ແລະ ທະນາຄານທຸລະກິດ ສູງກວ່າຜົນປະໂຫຍດຂອງຕົນເອງ.

ທະນາຄານທຸລະກິດ ຕ້ອງກຳນົດມາດຕາ ແລະ ປະຕິບັດມາດຕະການທີ່ເໝາະສົມຕໍ່ຜູ້ບໍລິຫານ ຫຼື ພະນັກງານຂອງຕົນ ທີ່ໄດ້ສ້າງຄວາມເສຍຫາຍໃຫ້ແກ່ທະນາຄານທຸລະກິດ ຫຼື ລູກຄ້າ.

**ມາດຕາ 56 (ປັບປຸງ) ການເປີດເຜີຍຜົນປະໂຫຍດ**

ຜູ້ບໍລິຫານຂອງທະນາຄານທຸລະກິດ ຕ້ອງແຈ້ງກິດຈະການທີ່ຕົນ ຫຼື ບຸກຄົນທີ່ກ່ຽວຂ້ອງກັບຕົນ ມີຜົນປະໂຫຍດຕິດພັນກັບທະນາຄານທຸລະກິດ ໃຫ້ແກ່ສະພາບໍລິຫານຂອງທະນາຄານທຸລະກິດຂອງຕົນຊາບ ຢ່າງລະອຽດ.

ໃນເວລາມີການພິຈາລະນາກິດຈະການທີ່ຕົນ ຫຼື ບຸກຄົນທີ່ກ່ຽວຂ້ອງກັບຕົນ ມີຜົນປະໂຫຍດຕິດພັນນັ້ນ ຜູ້ບໍລິຫານດັ່ງກ່າວ ຕ້ອງຖອນຕົວອອກຈາກກອງປະຊຸມ.

ໃນກໍລະນີທີ່ຜູ້ບໍລິຫານ ຫາກບໍ່ປະຕິບັດຕາມຂໍ້ກຳນົດເທິງນີ້ ທະນາຄານທຸລະກິດ ຫຼື ຜູ້ຖືຮຸ້ນ ມີສິດຮ້ອງຟ້ອງຕໍ່ສານ ເພື່ອລົບລ້າງສັນຍາ ທີ່ຖືກພັນກັບກິດຈະການດັ່ງກ່າວ. ພ້ອມກັນນັ້ນ ທະນາຄານແຫ່ງ ສປປ ລາວ ຈະໂຈະການປະຕິບັດໜ້າທີ່ຂອງຜູ້ບໍລິຫານດັ່ງກ່າວ ແລະ ຈະຖືກປົດຕຳແໜ່ງ ພາຍຫຼັງທີ່ສານໄດ້ຕັດສິນບົກເລີກສັນຍາ.

**ມາດຕາ 57 (ປັບປຸງ) ການປົກປ້ອງຜູ້ຊົມໃຊ້**

ທະນາຄານທຸລະກິດ ຕ້ອງມີລະບຽບ, ຂັ້ນຕອນທີ່ຊັດເຈນໃນການປະຕິບັດຕໍ່ຜູ້ຊົມໃຊ້ ແລະ ຕ້ອງມີກົນໄກທີ່ມີປະສິດທິຜົນໃນການຮັບ, ພິຈາລະນາ ແລະ ແກ້ໄຂຄຳຮ້ອງທຸກ ຫຼື ຄຳສະເໜີຂອງຜູ້ຊົມໃຊ້ ໂດຍສອດຄ່ອງກັບກົດໝາຍ ແລະ ລະບຽບການທີ່ກ່ຽວຂ້ອງ.

ທະນາຄານທຸລະກິດ ຕ້ອງປົກປ້ອງສິດ ແລະ ຜົນປະໂຫຍດຂອງຜູ້ຊົມໃຊ້ ດ້ວຍການ:

1. ເຂົ້າເປັນສະມາຊິກຂອງສຳນັກງານປົກປ້ອງເງິນຝາກ;
2. ສ້າງເງື່ອນໄຂ ເພື່ອອຳນວຍຄວາມສະດວກໃນການຝາກ, ການໂອນ ແລະ ການຖອນເງິນຂອງຜູ້ຊົມໃຊ້ ຢ່າງຄົບຖ້ວນ ແລະ ທັນເວລາ;
3. ຮັກສາຄວາມລັບ ກ່ຽວກັບການເຮັດທຸລະກຳຂອງຜູ້ຊົມໃຊ້ ເວັ້ນເສຍແຕ່ກົດໝາຍ ຫາກໄດ້ກຳນົດໄວ້ຢ່າງອື່ນ;
4. ເປີດເຜີຍຖານະການເງິນຂອງທະນາຄານທຸລະກິດ ໃຫ້ມວນຊົນຊາບ ຕາມລະບຽບການທີ່ທະນາຄານແຫ່ງ ສປປ ລາວ ກຳນົດ;
5. ແຈ້ງຂໍ້ມູນລາຍລະອຽດ ກ່ຽວກັບການຊົມໃຊ້ຜະລິດຕະພັນຂອງຕົນ ເປັນຕົ້ນ ອັດຕາດອກເບ້ຍ, ຄ່າບໍລິການ, ອັດຕາແລກປ່ຽນ, ເງື່ອນໄຂ ແລະ ວິທີການໃຊ້ບໍລິການ ດ້ວຍຊ່ອງທາງຕ່າງໆ ລວມທັງການໂຄສະນາຜະລິດຕະພັນ ແລະ ບໍລິການ ຕ້ອງຖືກຕ້ອງຕາມຄວາມເປັນຈິງ;
6. ປະຕິບັດພັນທະອື່ນ ກ່ຽວກັບການປົກປ້ອງຜູ້ຊົມໃຊ້ ຕາມກົດໝາຍ ແລະ ລະບຽບການທີ່ກ່ຽວຂ້ອງ.

**ມາດຕາ 58 (ປັບປຸງ) ການຮັກສາຄວາມລັບ**

ຜູ້ບໍລິຫານ, ພະນັກງານ ແລະ ຜູ້ຖືກມອບໝາຍ ທີ່ພວມປະຕິບັດ ຫຼື ພົ້ນຈາກໜ້າທີ່ຂອງທະນາຄານທຸລະກິດໄປແລ້ວ ຕ້ອງຮັກສາຂໍ້ມູນທີ່ເປັນຄວາມລັບຂອງທະນາຄານທຸລະກິດນັ້ນ. ຫ້າມເປີດເຜີຍ ຫຼື ນຳໃຊ້ ຂໍ້ມູນເຫຼົ່ານັ້ນ ເພື່ອຜົນປະໂຫຍດຂອງຕົນເອງ ຫຼື ຜູ້ອື່ນ ເວັ້ນເສຍແຕ່ ເພື່ອຜົນປະໂຫຍດຂອງທະນາຄານທຸລະກິດດັ່ງກ່າວ. ຂໍ້ມູນທີ່ເປັນຄວາມລັບ ສາມາດເປີດເຜີຍໃຫ້ທະນາຄານແຫ່ງ ສປປ ລາວ, ຜູ້ກວດສອບ ຫຼື ອົງການທີ່ມີສິດອຳນາດໄດ້ຕາມກົດໝາຍ. ຜູ້ທີ່ໄດ້ຂໍ້ມູນນຳທະນາຄານທຸລະກິດ ຕ້ອງຮັກສາຂໍ້ມູນດັ່ງກ່າວເປັນຄວາມລັບ ຍົກເວັ້ນກໍລະນີທີ່ຕ້ອງເປີດເຜີຍຕາມກົດໝາຍ.

## ໝວດທີ ໒
## ການໂອນຮຸ້ນ, ການຄວບກິດຈະການ
## ແລະ ການຊື້ ຂາຍຊັບສິນທີ່ສຳຄັນ ຂອງທະນາຄານທຸລະກິດ

**ມາດຕາ ໕໙ (ປັບປຸງ) ການໂອນຮຸ້ນ**

ການໂອນຮຸ້ນສາມັນຂອງທະນາຄານທຸລະກິດ ທີ່ພາໃຫ້ຜູ້ຖືຮຸ້ນໃດໜຶ່ງ ກາຍເປັນຜູ້ຖືຮຸ້ນລາຍໃຫຍ່, ການໂອນຮຸ້ນແຕ່ ສິບສ່ວນຮ້ອຍ ຂຶ້ນໄປ ຫຼື ການໂອນຮຸ້ນພາໃຫ້ຜູ້ຖືຮຸ້ນໃດໜຶ່ງ ກາຍເປັນຜູ້ມີສິດຄວບຄຸມຕໍ່ທະນາຄານທຸລະກິດນັ້ນ ຕ້ອງໄດ້ຂໍອະນຸຍາດນຳທະນາຄານແຫ່ງ ສປປ ລາວ.

ທະນາຄານແຫ່ງ ສປປ ລາວ ເປັນຜູ້ກຳນົດລະບຽບການ ກ່ຽວກັບການໂອນຮຸ້ນຂອງທະນາຄານທຸລະກິດ.

ການໂອນຮຸ້ນ ໃຫ້ປະຕິບັດພັນທະອາກອນ ຕາມກົດໝາຍທີ່ກ່ຽວຂ້ອງ.

**ມາດຕາ ໖໐ (ປັບປຸງ) ການຄວບກິດຈະການ**

ທະນາຄານທຸລະກິດ ສາມາດຄວບກິດຈະການກັບທະນາຄານທຸລະກິດອື່ນໄດ້ ຕາມການຮັບຮອງຂອງກອງປະຊຸມຜູ້ຖືຮຸ້ນ ແລະ ໄດ້ຮັບອະນຸຍາດຈາກທະນາຄານແຫ່ງ ສປປ ລາວ.

ທະນາຄານແຫ່ງ ສປປ ລາວ ເປັນຜູ້ກຳນົດລະບຽບການ ກ່ຽວກັບການຄວບກິດຈະການຂອງທະນາຄານທຸລະກິດ.

**ມາດຕາ ໖໑ (ປັບປຸງ) ການຊື້ ຂາຍຊັບສິນທີ່ສຳຄັນ**

ຊັບສິນທີ່ສຳຄັນຂອງທະນາຄານທຸລະກິດ ແມ່ນ ຊັບສິນທີ່ເປັນສ່ວນສຳຄັນໃນການດຳເນີນທຸລະກິດຂອງທະນາຄານນັ້ນ ຕາມລະບຽບການຂອງທະນາຄານແຫ່ງ ສປປ ລາວ.

ການຊື້ ຂາຍຊັບສິນທີ່ສຳຄັນຂອງທະນາຄານທຸລະກິດ ຕ້ອງໄດ້ຮັບການຮັບຮອງຈາກກອງປະຊຸມຜູ້ຖືຮຸ້ນ ແລະ ຕ້ອງໄດ້ຂໍອະນຸຍາດນຳທະນາຄານແຫ່ງ ສປປ ລາວ.

## ພາກທີ V
## ການບັນຊີ, ການເປີດເຜີຍຂໍ້ມູນຂອງທະນາຄານທຸລະກິດ
## ແລະ ການກວດສອບ ໂດຍບໍລິສັດກວດສອບພາຍນອກ
## ໝວດທີ ໑
## ການບັນຊີ ແລະ ການເປີດເຜີຍຂໍ້ມູນຂອງທະນາຄານທຸລະກິດ

**ມາດຕາ ໖໒ (ປັບປຸງ) ການບັນຊີ**

ທະນາຄານທຸລະກິດ ຕ້ອງຖືບັນຊີ ຕາມກົດໝາຍວ່າດ້ວຍການບັນຊີ ແລະ ລະບຽບການທີ່ກ່ຽວຂ້ອງ.

ທະນາຄານທຸລະກິດ ຕ້ອງບັນທຶກບັນຊີຕາມຜັງບັນຊີ ທີ່ທະນາຄານແຫ່ງ ສປປ ລາວ ກຳນົດໃນແຕ່ລະໄລຍະ.

ການສ້າງ, ການນຳໃຊ້ໂປແກຣມບັນຊີ ແລະ/ຫຼື ການເພີ່ມບັນຊີໃດໜຶ່ງໃນຜັງບັນຊີ ຕ້ອງໄດ້ຮັບອະນຸຍາດຈາກທະນາຄານແຫ່ງ ສປປ ລາວ.

ປີການບັນຊີຂອງທະນາຄານທຸລະກິດ ເລີ່ມຕົ້ນໃນວັນທີ 1 ມັງກອນ ແລະ ສິ້ນສຸດໃນວັນທີ 31 ທັນວາ ຂອງແຕ່ລະປີ.

**ມາດຕາ 63 (ປັບປຸງ) ລາຍຮັບ ແລະ ລາຍຈ່າຍ**

ລາຍຮັບ ແລະ ລາຍຈ່າຍ ຂອງທະນາຄານທຸລະກິດ ມີ ດັ່ງນີ້:

1. ລາຍຮັບ:
   - ດອກເບ້ຍ;
   - ຄ່າທຳນຽມ ແລະ ຄ່າບໍລິການ;
   - ເກັບຄືນເງິນແຮຄ່າເສື່ອມສິນເຊື່ອ ແລະ ຄ່າເສື່ອມຊັບສິນອື່ນ;
   - ລາຍຮັບອື່ນ ຕາມກົດໝາຍ.
2. ລາຍຈ່າຍ:
   - ດອກເບ້ຍ;
   - ຄ່າທຳນຽມ ແລະ ຄ່າບໍລິການ;
   - ຄ່າບໍລິຫານທຸລະກິດ ແລະ ວິຊາການ;
   - ເບ້ຍປະກັນເງິນຝາກ;
   - ຫັກເງິນແຮຄ່າເສື່ອມສິນເຊື່ອ ແລະ ຄ່າເສື່ອມຊັບສິນອື່ນ;
   - ຄ່າຫຼຸ້ຍຫ້ຽນ;
   - ເງິນແຮ ເພື່ອປະກັນຄວາມສ່ຽງ;
   - ລາຍຈ່າຍອື່ນ ຕາມກົດໝາຍ.

ສະພາບໍລິຫານ ເປັນຜູ້ຮັບຮອງເອົາແຜນລາຍຮັບ ແລະ ລາຍຈ່າຍ ຂອງທະນາຄານທຸລະກິດ ຕາມການສະເໜີຂອງຜູ້ອຳນວຍການ.

**ມາດຕາ 64 (ປັບປຸງ) ກຳໄລ ແລະ ການຂາດທຶນ**

ກຳໄລຂອງທະນາຄານທຸລະກິດ ແມ່ນ ສ່ວນຜິດດ່ຽງບວກ ລະຫວ່າງຍອດລາຍຮັບ ແລະ ຍອດລາຍຈ່າຍໃນປີ ຕາມທີ່ໄດ້ກຳນົດໄວ້ໃນມາດຕາ 63 ຂອງກົດໝາຍສະບັບນີ້. ກຳໄລສຸດທິ ແມ່ນ ກຳໄລພາຍຫຼັງທີ່ໄດ້ຫັກອາກອນກຳໄລໃຫ້ລັດແລ້ວ.

ການຂາດທຶນຂອງທະນາຄານທຸລະກິດ ແມ່ນ ສ່ວນຜິດດ່ຽງລົບ ລະຫວ່າງຍອດລາຍຮັບ ແລະ ຍອດລາຍຈ່າຍໃນປີ. ການຂາດທຶນສະສົມ ແມ່ນ ການຂາດທຶນທີ່ໄດ້ສະສົມປີຜ່ານມາ.

ກອງປະຊຸມຜູ້ຖືຮຸ້ນ ເປັນຜູ້ຮັບຮອງການແບ່ງປັນກຳໄລສຸດທິ ດັ່ງນີ້:

1. ຫັກເຂົ້າທຶນສຳຮອງຕາມລະບຽບການ;

2. ຫັກເຂົ້າຄັງຂະຫຍາຍທຸລະກິດ ແລະ ຄັງອື່ນ;

3. ແບ່ງເງິນປັນຜົນໃຫ້ຜູ້ຖືຮຸ້ນ.

ການໂອນເງິນປັນຜົນຂອງທະນາຄານທຸລະກິດ ຫຼື ການໂອນກຳໄລຂອງສາຂາທະນາຄານທຸລະກິດຕ່າງປະເທດ ໃຫ້ແກ່ສຳນັກງານໃຫຍ່ ຕ້ອງສອດຄ່ອງກັບກົດໝາຍ ແລະ ລະບຽບການທີ່ກ່ຽວຂ້ອງ.

ໃນກໍລະນີທີ່ຂາດທຶນສະສົມ ໃຫ້ທະນາຄານທຸລະກິດນຳໃຊ້ຄັງສຳຮອງຕາມລະບຽບການ ເພື່ອລ້າງການຂາດທຶນດັ່ງກ່າວ, ຖ້າເງິນໃນຄັງສຳຮອງຕາມລະບຽບການບໍ່ພຽງພໍ ຜູ້ຖືຮຸ້ນຂອງທະນາຄານທຸລະກິດ ຕ້ອງເພີ່ມທຶນ ເພື່ອລ້າງການຂາດທຶນສະສົມດັ່ງກ່າວ.

ໃນກໍລະນີທີ່ທະນາຄານທຸລະກິດ ຫຼື ສາຂາທະນາຄານທຸລະກິດຕ່າງປະເທດ ຍັງມີການຂາດທຶນສະສົມ ແຕ່ມີກຳໄລໃນປີ ແມ່ນບໍ່ໃຫ້ທະນາຄານທຸລະກິດ ແບ່ງເງິນປັນຜົນ, ສຳລັບສາຂາທະນາຄານທຸລະກິດຕ່າງປະເທດ ບໍ່ໃຫ້ໂອນກຳໄລດັ່ງກ່າວ ໃຫ້ແກ່ສຳນັກງານໃຫຍ່.

**ມາດຕາ 65 (ໃໝ່) ເອກະສານລາຍງານການເງິນ**

ທະນາຄານທຸລະກິດ ຕ້ອງສ້າງເອກະສານລາຍງານການເງິນປະຈຳ ເດືອນ, ໄຕມາດ ແລະ ປີ. ເອກະສານລາຍງານການເງິນ ປະກອບດ້ວຍ ໃບລາຍງານຖານະການເງິນ, ໃບລາຍງານຜົນການດຳເນີນງານ, ໃບລາຍງານກະແສເງິນສົດ, ໃບລາຍງານສ່ວນປ່ຽນແປງທຶນ ແລະ ບົດອະທິບາຍຊ້ອນທ້າຍເອກະສານລາຍງານການເງິນ.

**ມາດຕາ 66 (ປັບປຸງ) ການເປີດເຜີຍຂໍ້ມູນ**

ທະນາຄານທຸລະກິດ ຕ້ອງເປີດເຜີຍຂໍ້ມູນຂອງຕົນໃຫ້ແກ່ມວນຊົນ ດັ່ງນີ້:

1. ບົດລາຍງານປະຈຳໄຕມາດ ຕາມລະບຽບການຂອງທະນາຄານແຫ່ງ ສປ ລາວ;
2. ບົດລາຍງານປະຈຳປີ ແລະ ຄຳເຫັນຂອງບໍລິສັດກວດສອບຕໍ່ບົດລາຍງານດັ່ງກ່າວ ຕາມລະບຽບການຂອງທະນາຄານແຫ່ງ ສປປ ລາວ;
3. ຂໍ້ມູນອື່ນ ທີ່ຊ່ວຍໃຫ້ມວນຊົນສາມາດເຫັນໄດ້ສະພາບຄວາມໝັ້ນຄົງ ຂອງທະນາຄານທຸລະກິດ.

ໃນກໍລະນີທີ່ທະນາຄານທຸລະກິດມີບໍລິສັດໃນກຸ່ມ ການເປີດເຜີຍຕ້ອງລວມເອົາຂໍ້ມູນຂອງບໍລິສັດໃນກຸ່ມຄືນ ເພື່ອໃຫ້ມວນຊົນສາມາດເຫັນໄດ້ພາບລວມທາງດ້ານນະໂຍບາຍ, ແຜນການດຳເນີນທຸລະກິດ ແລະ ການບໍລິຫານຈັດການ ລວມທັງເອກະສານລາຍງານການເງິນຂອງບໍລິສັດໃນກຸ່ມດັ່ງກ່າວ.

**ມາດຕາ 67 (ໃໝ່) ຊ່ອງທາງການເປີດເຜີຍຂໍ້ມູນ**

ທະນາຄານທຸລະກິດ ຕ້ອງເປີດເຜີຍຂໍ້ມູນຕາມທີ່ໄດ້ກຳນົດໄວ້ໃນມາດຕາ 66 ຂອງກົດໝາຍສະບັບນີ້ ຜ່ານເວັບໄຊຂອງຕົນ ຫຼື ຊ່ອງທາງອື່ນ ທີ່ມວນຊົນສາມາດເຂົ້າເຖິງໄດ້ ແລະ ຕ້ອງມີກົນໄກທີ່ເໝາະສົມ ເພື່ອແຈ້ງໃຫ້ແກ່ລູກຄ້າຂອງຕົນທຸກຄັ້ງທີ່ມີການເປີດເຜີຍຂໍ້ມູນ ພ້ອມທັງແຈ້ງຊ່ອງທາງດັ່ງກ່າວໃຫ້ທະນາຄານແຫ່ງ ສປປ ລາວ.

**ມາດຕາ 68 (ປັບປຸງ) ການເກັບຮັກສາເອກະສານ ແລະ ຂໍ້ມູນທຸລະກຳ**

ທະນາຄານທຸລະກິດ ຕ້ອງເກັບຮັກສາເອກະສານ ແລະ ຂໍ້ມູນທຸລະກຳ ຢູ່ສຳນັກງານໃຫຍ່ຂອງຕົນ ດັ່ງນີ້:

1. ກົດລະບຽບ, ລະບຽບການ ແລະ ຄູ່ມືຕ່າງໆ ຕາມກົດໝາຍສະບັບນີ້;
2. ບັນຊີການຂຶ້ນທະບຽນຜູ້ຖືຮຸ້ນ;
3. ບົດບັນທຶກ ແລະ ມະຕິ ຂອງກອງປະຊຸມຜູ້ຖືຮຸ້ນ;
4. ບົດບັນທຶກ ແລະ ມະຕິ ຂອງກອງປະຊຸມສະພາບໍລິຫານ ແລະ ຄະນະກຳມະການຂອງສະພາບໍລິຫານ;
5. ການບັນທຶກການບັນຊີ ກ່ຽວກັບສະພາບການດຳເນີນທຸລະກິດ, ການເຮັດທຸລະກຳ ແລະ ເງື່ອນໄຂທາງດ້ານການເງິນ;
6. ບົດບັນທຶກທຸລະກຳ, ເອກະສານສິນເຊື່ອ ແລະ ບັນຊີຂອງລູກຄ້າແຕ່ລະຄົນ;
7. ບົດລາຍງານການກວດສອບພາຍໃນ ແລະ ພາຍນອກ;
8. ເອກະສານອື່ນ ທີ່ເຫັນວ່າຈຳເປັນ ຕາມການກຳນົດຂອງທະນາຄານແຫ່ງ ສປປ ລາວ.

ສຳລັບສາຂາທະນາຄານທຸລະກິດຕ່າງປະເທດ ຕ້ອງເກັບຮັກສາເອກະສານ ແລະ ຂໍ້ມູນທຸລະກຳ ຢູ່ສຳນັກງານສາຂາທີ່ຕັ້ງຢູ່ ສປປ ລາວ.

ເອກະສານ, ຂໍ້ມູນ ລວມທັງສຳເນົາທາງເອເລັກໂຕຣນິກ ຕ້ອງເກັບຮັກສາໄວ້ຢ່າງໜ້ອຍ ສິບປີ.

## ໝວດທີ 2
## ການກວດສອບໂດຍບໍລິສັດກວດສອບ

**ມາດຕາ 69 (ປັບປຸງ) ການກວດສອບ ໂດຍບໍລິສັດກວດສອບ**

ໃນແຕ່ລະປີ ທະນາຄານທຸລະກິດ ຕ້ອງໄດ້ຮັບການກວດສອບ ໂດຍບໍລິສັດກວດສອບ ເພື່ອ:

1. ຢັ້ງຢືນຄວາມຖືກຕ້ອງ ແລະ ຄົບຖ້ວນຂອງການຖືບັນຊີ ຕາມລະບົບບັນຊີທີ່ທະນາຄານແຫ່ງ ສປປ ລາວ ກຳນົດ;
2. ຢັ້ງຢືນຄວາມຖືກຕ້ອງ ແລະ ຄົບຖ້ວນ ຂອງການລາຍງານການເງິນປະຈຳປີ;
3. ຢັ້ງຢືນຄວາມຖືກຕ້ອງ ແລະ ຄົບຖ້ວນຂອງການຄວບຄຸມພາຍໃນ ພ້ອມທັງໃຫ້ຄຳແນະນຳກ່ຽວກັບມາດຕະການແກ້ໄຂ;
4. ຢັ້ງຢືນການແກ້ໄຂຂອງທະນາຄານທຸລະກິດ ຕໍ່ການລະເມີດທີ່ທະນາຄານແຫ່ງ ສປປ ລາວ ໄດ້ກວດພົບ ແລະ ໄດ້ແຈ້ງໃຫ້ບໍລິສັດກວດສອບ;
5. ລາຍງານໃຫ້ທະນາຄານແຫ່ງ ສປປ ລາວ ກ່ຽວກັບການລະເມີດກົດໝາຍ ແລະ ລະບຽບການຂອງທະນາຄານແຫ່ງ ສປປ ລາວ ຫຼື ການກະທຳໃດໜຶ່ງທີ່ອາດຈະມີຜົນຕໍ່ຄວາມໝັ້ນຄົງຂອງທະນາຄານທຸລະກິດ.

**ມາດຕາ 70 (ໃໝ່) ການວ່າຈ້າງບໍລິສັດກວດສອບ**

ທະນາຄານທຸລະກິດ ວ່າຈ້າງບໍລິສັດກວດສອບ ຕາມການຮັບຮອງຂອງທະນາຄານແຫ່ງ ສປປ ລາວ.

ທະນາຄານແຫ່ງ ສປປ ລາວ ເປັນຜູ້ກຳນົດບັນຊີລາຍຊື່ບໍລິສັດກວດສອບ ໂດຍກຳນົດເງື່ອນໄຂຂອງບໍລິສັດກວດສອບ ທີ່ຈະບັນຈຸເຂົ້າໃນບັນຊີລາຍຊື່ດັ່ງກ່າວ ເພື່ອຮັບປະກັນຄຸນນະພາບ, ຈັນຍາບັນ ແລະ ຄວາມເປັນເອກະລາດຂອງບໍລິສັດກວດສອບ. ທະນາຄານທຸລະກິດ ສາມາດເລືອກວ່າຈ້າງບໍລິສັດກວດສອບຕາມບັນຊີລາຍຊື່ບໍລິສັດກວດສອບ ເພື່ອໃຫ້ກວດສອບທະນາຄານຂອງຕົນ.

ໃນເວລາດຳເນີນການກວດສອບ ຖ້າຫາກເຫັນວ່າບໍລິສັດກວດສອບ ລະເມີດກົດໝາຍ ແລະ ລະບຽບການທີ່ກ່ຽວຂ້ອງ, ທະນາຄານແຫ່ງ ສປປ ລາວ ມີສິດສັ່ງໃຫ້ທະນາຄານທຸລະກິດ ໂຈະ ຫຼື ຍົກເລີກ ການວ່າຈ້າງບໍລິສັດກວດສອບດັ່ງກ່າວ.

**ມາດຕາ 71 (ໃໝ່) ພັນທະຂອງບໍລິສັດກວດສອບ**

ບໍລິສັດກວດສອບ ມີພັນທະໃຫ້ຄວາມຮ່ວມມື ແລະ ສະໜອງຂໍ້ມູນຕ່າງໆ ໃຫ້ທະນາຄານແຫ່ງ ສປປ ລາວ ຕາມກົດໝາຍ ແລະ ລະບຽບການ ຫຼື ຕາມການຮຽກຮ້ອງຂອງທະນາຄານແຫ່ງ ສປປ ລາວ.

## ພາກທີ VI
## ມາດຕະການແຕ່ຫົວທີ ແລະ ການແກ້ໄຂ ທະນາຄານທຸລະກິດທີ່ຢູ່ໃນພາວະວິກິດ

### ໝວດທີ 1
### ມາດຕະການແຕ່ຫົວທີ

**ມາດຕາ 72 (ໃໝ່) ສະພາບຂອງທະນາຄານທຸລະກິດທີ່ຈະຖືກນຳໃຊ້ມາດຕະການແຕ່ຫົວທີ**

ທະນາຄານທຸລະກິດ ທີ່ຈະຖືກນຳໃຊ້ມາດຕະການແຕ່ຫົວທີ ຖ້າຫາກຕົກຢູ່ໃນສະພາບໃດໜຶ່ງ ດັ່ງນີ້:

1. ການເຄື່ອນໄຫວມີລັກສະນະທີ່ບໍ່ໝັ້ນຄົງດ້ານການເງິນ ຫຼື ມີຜົນກະທົບຕໍ່ຜົນປະໂຫຍດຂອງຜູ້ຝາກເງິນ;
2. ລະເມີດ ຫຼື ອາດຈະມີການລະເມີດລະບຽບການດ້ານຄວາມໝັ້ນຄົງທາງດ້ານການເງິນ;
3. ການຄຸ້ມຄອງບໍລິຫານ, ການຄວບຄຸມພາຍໃນ ແລະ ການບັນຊີ ມີຄວາມບົກພ່ອງ ຊຶ່ງອາດເຮັດໃຫ້ທະນາຄານທຸລະກິດ ຫຼື ບໍລິສັດໃນກຸ່ມ ມີຄວາມສ່ຽງສູງ;
4. ຂາດສະພາບຄ່ອງ ຊຶ່ງຕ້ອງແກ້ໄຂດ້ວຍແຫຼ່ງທຶນຂອງທະນາຄານແຫ່ງ ສປປ ລາວ ຢ່າງຕໍ່ເນື່ອງ;
5. ຜົນກຳໄລຕ່ຳ ຫຼື ມີທ່າອ່ຽງຫຼຸດລົງຢ່າງຕໍ່ເນື່ອງ ຊຶ່ງອາດຈະສ້າງຜົນກະທົບທາງລົບຕໍ່ທະນາຄານທຸລະກິດ ໃນໄລຍະກາງ ແລະ ໄລຍະຍາວ;
6. ມີຄວາມສ່ຽງທີ່ຈະໄດ້ຮັບຜົນກະທົບ ຈາກທະນາຄານສຳນັກງານໃຫຍ່, ກຸ່ມທະນາຄານ ຫຼື ບໍລິສັດໃນກຸ່ມ;
7. ມີອຸປະສັກຕໍ່ການຄຸ້ມຄອງແບບລວມກຸ່ມ;
8. ມີສະພາບອື່ນ ຕາມການກຳນົດຂອງທະນາຄານແຫ່ງ ສປປ ລາວ.

**ມາດຕາ 73 (ໃໝ່) ມາດຕະການແຕ່ຫົວທີ**

ທະນາຄານແຫ່ງ ສປປ ລາວ ສາມາດປະຕິບັດມາດຕະການແຕ່ຫົວທີໃດໜຶ່ງ ຕໍ່ທະນາຄານທຸລະກິດ ທີ່ຕົກຢູ່ໃນສະພາບທີ່ໄດ້ກຳນົດໄວ້ໃນມາດຕາ 72 ຂອງກົດໝາຍສະບັບນີ້ ດັ່ງນີ້:

1. ປຶກສາຫາລື ຮ່ວມກັບຜູ້ຖືຮຸ້ນ ແລະ ຜູ້ບໍລິຫານ ເພື່ອກຳນົດວິທີແກ້ໄຂ;
2. ໃຫ້ທະນາຄານທຸລະກິດ ສ້າງແຜນການແກ້ໄຂ ແລະ ປະຕິບັດຕາມແຜນການດັ່ງກ່າວ;
3. ໃຫ້ທະນາຄານທຸລະກິດ ຫຼື ຜູ້ບໍລິຫານຂອງທະນາຄານທຸລະກິດ ສ້າງແຜນການປັບໂຄງສ້າງໜີ້ກັບເຈົ້າໜີ້ ໂດຍສອດຄ່ອງກັບແຜນການແກ້ໄຂຂອງຕົນ;
4. ໃຫ້ທະນາຄານທຸລະກິດ ແກ້ໄຂສະພາບຄ່ອງ ແລະ ບໍລິຫານຊັບສິນ ໃຫ້ແທດເໝາະກັບສະພາບແຫຼ່ງທຶນ;
5. ໃຫ້ຜູ້ຖືຮຸ້ນຂອງທະນາຄານທຸລະກິດ ເພີ່ມທຶນຈົດທະບຽນ ພາຍໃນໄລຍະເວລາທີ່ກຳນົດໃຫ້;
6. ໃຫ້ທະນາຄານທຸລະກິດ ຫັກເງິນແຮ ເພື່ອປະກັນຄວາມສ່ຽງສູງຂຶ້ນ;
7. ໃຫ້ທະນາຄານທຸລະກິດ ຫຼຸດລາຍຈ່າຍໃນການດຳເນີນງານ ລວມທັງລາຍຈ່າຍດ້ານບໍລິຫານຂອງຕົນ;
8. ໃຫ້ທະນາຄານທຸລະກິດ ຫຼຸດຜ່ອນຄວາມສ່ຽງທີ່ເກີດຈາກທຸລະກຳ, ຜະລິດຕະພັນ ແລະ ການຄຸ້ມຄອງບໍລິຫານຂອງຕົນ;
9. ໃຫ້ທະນາຄານທຸລະກິດ ລາຍງານຢ່າງຕໍ່ເນື່ອງ ກ່ຽວກັບຖານະການເງິນ ລວມທັງຄວາມພຽງພໍຂອງທຶນ ແລະ ສະພາບຄ່ອງ;
10. ໃຫ້ທະນາຄານທຸລະກິດ ນຳໃຊ້ກຳໄລສຸດທິຂອງຕົນ ເພື່ອເພີ່ມທຶນໂດຍຈຳກັດການຈ່າຍເງິນປັນຜົນ ແລະ ການຈ່າຍອື່ນ;
11. ໃຫ້ທະນາຄານທຸລະກິດ ປັບປຸງໂຄງສ້າງການຖືຮຸ້ນ ຫຼື ຮູບແບບບໍລິສັດ, ຍຸດທະສາດການດຳເນີນທຸລະກິດ, ໂຄງສ້າງການຈັດຕັ້ງ ແລະ ລະບົບການບໍລິຫານຄວາມສ່ຽງ;
12. ໃຫ້ທະນາຄານທຸລະກິດ ປັບປຸງໂຄງສ້າງເງິນກູ້, ຈຳກັດການສະໜອງສິນເຊື່ອໃໝ່ ແລະ ການລົງທຶນ;
13. ໃຫ້ທະນາຄານທຸລະກິດ ຈຳກັດການຫຼຸດທຶນ, ການຊື້ ຂາຍຊັບສິນ ແລະ/ຫຼື ຮັບເງິນຝາກ;
14. ຈຳກັດສິດຂອງຜູ້ຖືຮຸ້ນລາຍໃຫຍ່;
15. ຈຳກັດສິດ ຫຼື ສັ່ງປົດຜູ້ບໍລິຫານ ທີ່ມີການລະເມີດ;
16. ຈຳກັດປະເພດ ແລະ ພື້ນທີ່ການເຄື່ອນໄຫວທຸລະກິດຂອງທະນາຄານ ໃນກໍລະນີທີ່ທະນາຄານທຸລະກິດຕົກຢູ່ໃນສະພາບທີ່ໄດ້ກຳນົດໄວ້ໃນມາດຕາ 72 ຂໍ້ 6 ແລະ ຂໍ້ 7 ຂອງກົດໝາຍສະບັບນີ້;
17. ນຳໃຊ້ມາດຕະການອື່ນ ທີ່ທະນາຄານແຫ່ງ ສປປ ລາວ ເຫັນວ່າເໝາະສົມ.

ທະນາຄານແຫ່ງ ສປປ ລາວ ເປັນຜູ້ກຳນົດລະບຽບການລະອຽດ ກ່ຽວກັບການນຳໃຊ້ມາດຕະການແຕ່ຫົວທີ.

**ມາດຕາ 74 (ໃໝ່) ພັນທະຂອງທະນາຄານທຸລະກິດທີ່ຖືກນຳໃຊ້ມາດຕະການແກ່ຕົວທີ**

ທະນາຄານທຸລະກິດ ທີ່ຖືກນຳໃຊ້ມາດຕະການແກ່ຕົວທີ, ຜູ້ຖືຮຸ້ນ ຫຼື ຜູ້ບໍລິຫານ ຕ້ອງໃຫ້ຄວາມຮ່ວມມື ແລະ ຕ້ອງສະໜອງຂໍ້ມູນຢ່າງຖືກຕ້ອງ, ຄົບຖ້ວນ ແລະ ທັນຕາມກຳນົດເວລາ ຕາມການຮຽກຮ້ອງຂອງທະນາຄານແຫ່ງ ສປປ ລາວ.

ຜູ້ບໍລິຫານ ແລະ ພະນັກງານຂອງທະນາຄານທຸລະກິດ ຕ້ອງໃຫ້ການຮ່ວມມື ແລະ ອຳນວຍຄວາມສະດວກແກ່ຜູ້ກວດກາຂອງທະນາຄານແຫ່ງ ສປປ ລາວ.

**ມາດຕາ 75 (ໃໝ່) ການລາຍງານການຈັດຕັ້ງປະຕິບັດມາດຕະການແກ່ຕົວທີ**

ທະນາຄານທຸລະກິດ ຕ້ອງລາຍງານຜົນຂອງການຈັດຕັ້ງປະຕິບັດມາດຕະການແກ່ຕົວທີ ໃຫ້ແກ່ທະນາຄານແຫ່ງ ສປປ ລາວ ຕາມການກຳນົດຂອງທະນາຄານແຫ່ງ ສປປ ລາວ.

ໃນກໍລະນີທີ່ທະນາຄານແຫ່ງ ສປປ ລາວ ຫາກກຳນົດໃຫ້ມີການກວດສອບຈາກບໍລິສັດກວດສອບໃນລະຫວ່າງການຈັດຕັ້ງປະຕິບັດມາດຕະການແກ່ຕົວທີ, ເມື່ອສຳເລັດການກວດສອບແລ້ວ ບໍລິສັດກວດສອບທີ່ກວດສອບນັ້ນ ຕ້ອງສົ່ງບົດລາຍງານການກວດສອບຂອງຕົນ ໃຫ້ທະນາຄານແຫ່ງ ສປປ ລາວ ພາຍໃນເວລາທີ່ທະນາຄານແຫ່ງ ສປປ ລາວ ກຳນົດ.

## ໝວດທີ 2
## ການແກ້ໄຂທະນາຄານທຸລະກິດທີ່ຢູ່ໃນພາວະວິກິດ

**ມາດຕາ 76 (ໃໝ່) ທະນາຄານທຸລະກິດທີ່ຢູ່ໃນພາວະວິກິດ**

ທະນາຄານທຸລະກິດທີ່ຢູ່ໃນພາວະວິກິດ ແມ່ນ ທະນາຄານທຸລະກິດທີ່ມີຖານະການເງິນອ່ອນແອ ແລະ ຂາດຄວາມໝັ້ນຄົງ ຊຶ່ງຕົກຢູ່ໃນສະພາບໃດໜຶ່ງ ດັ່ງນີ້:

1. ບໍ່ສາມາດປະຕິບັດພັນທະຕໍ່ຜູ້ຝາກເງິນ ຫຼື ເຈົ້າໜີ້ອື່ນ;
2. ລະເມີດລະບຽບການ ກ່ຽວກັບການຮັກສາຄວາມໝັ້ນຄົງທີ່ທະນາຄານແຫ່ງ ສປປ ລາວ ກຳນົດ ເປັນຕົ້ນ ອັດຕາສ່ວນຄວາມພຽງພໍຂອງທຶນຕ່ຳກວ່າເຄິ່ງໜຶ່ງ, ຂາດສະພາບຄ່ອງຢ່າງຮ້າຍແຮງ ທີ່ບໍ່ສາມາດແກ້ໄຂໄດ້;
3. ການປະຕິບັດມາດຕະການແກ່ຕົວທີ ບໍ່ປະສົບຜົນສຳເລັດ ຊຶ່ງເຮັດໃຫ້ທະນາຄານທຸລະກິດ ຕົກໃນສະພາບທີ່ໄດ້ກຳນົດໄວ້ໃນຂໍ້ 1 ຫຼື 2 ຂອງມາດຕານີ້;
4. ມີການຍັກຍອກ, ສໍ້ໂກງ ຫຼື ບໍ່ໂປ່ງໃສ ໃນການບໍລິຫານ ແລະ ດຳເນີນທຸລະກິດ ຊຶ່ງອາດຈະສົ່ງຜົນກະທົບດ້ານລົບຕໍ່ຄວາມສາມາດໃນການຊຳລະໜີ້ສິນ ແລະ ຕໍ່ຜົນປະໂຫຍດຂອງຜູ້ຝາກເງິນ.

**ມາດຕາ 77 (ໃໝ່) ການແກ້ໄຂທະນາຄານທຸລະກິດທີ່ຢູ່ໃນພາວະວິກິດ**

ເມື່ອທະນາຄານທຸລະກິດ ຕົກຢູ່ໃນກໍລະນີໃດໜຶ່ງຕາມທີ່ໄດ້ກຳນົດໄວ້ໃນມາດຕາ 76 ຂອງກົດໝາຍສະບັບນີ້ ທະນາຄານແຫ່ງ ສປປ ລາວ ຕ້ອງເຂົ້າຄວບຄຸມການດຳເນີນທຸລະກິດຂອງທະນາຄານທຸລະກິດດັ່ງກ່າວໂດຍກົງ ຊຶ່ງບໍ່ຈຳເປັນຕ້ອງໄດ້ຮັບຄຳຍິນຍອມຈາກເຈົ້າໜີ້ ຫຼື ຜູ້ຖືຮຸ້ນຂອງທະນາຄານທຸລະກິດ.

ການແກ້ໄຂທະນາຄານທຸລະກິດທີ່ຢູ່ໃນພາວະວິກິດ ເພື່ອຈຸດປະສົງ ດັ່ງນີ້:

1. ຮັບປະກັນຄວາມຕໍ່ເນື່ອງຂອງການດຳເນີນງານທີ່ສຳຄັນຂອງທະນາຄານທຸລະກິດ;

2. ຫຼີກລ່ຽງບັນຫາທີ່ມີຜົນກະທົບດ້ານລົບຕໍ່ລະບົບການເງິນ ໂດຍສະເພາະການສະກັດກັ້ນການແຜ່ລາມຂອງບັນຫາດັ່ງກ່າວ ແລະ ເພື່ອຮັກສາວິໄນຕະຫຼາດ;

3. ປົກປ້ອງຊັບສິນຂອງຜູ້ຝາກເງິນ ແລະ ເຈົ້າໜີ້ອື່ນ.

ທະນາຄານແຫ່ງ ສປປ ລາວ ຕ້ອງນຳໃຊ້ມາດຕະການທີ່ເໝາະສົມໃນການແກ້ໄຂທະນາຄານທຸລະກິດທີ່ຢູ່ໃນພາວະວິກິດ ໂດຍໃຫ້ມີຄ່າໃຊ້ຈ່າຍໜ້ອຍທີ່ສຸດ ແລະ ຫຼີກເວັ້ນການສ້າງຄວາມເສຍຫາຍຕໍ່ມູນຄ່າຂອງຊັບສິນຕ່າງໆ ຍົກເວັ້ນກໍລະນີທີ່ມີຄວາມຈຳເປັນ ເພື່ອໃຫ້ບັນລຸຈຸດປະສົງ ຕາມທີ່ໄດ້ກຳນົດໄວ້ໃນວັກສອງເທິງນີ້.

ການແກ້ໄຂທະນາຄານທຸລະກິດທີ່ຢູ່ໃນພາວະວິກິດ ໃຫ້ຫຼີກລ່ຽງການນຳໃຊ້ແຫຼ່ງທຶນຂອງລັດ ເຂົ້າໃນການແກ້ໄຂທະນາຄານທຸລະກິດທີ່ຢູ່ໃນພາວະວິກິດ.

ການແກ້ໄຂທະນາຄານທຸລະກິດທີ່ຢູ່ໃນພາວະວິກິດ ສາມາດດຳເນີນໃນສອງກໍລະນີ ຄື ເມື່ອທະນາຄານແຫ່ງ ສປປ ລາວ ເຫັນວ່າທະນາຄານດັ່ງກ່າວ ຍັງສາມາດຟື້ນຟູໄດ້ ກໍຈະດຳເນີນການຟື້ນຟູຕາມທີ່ກຳນົດໄວ້ໃນກົດໝາຍສະບັບນີ້ ຫຼື ໃນກໍລະນີທີ່ເຫັນວ່າບໍ່ສາມາດຟື້ນຟູໄດ້ ກໍດຳເນີນການຮ້ອງຟ້ອງໃຫ້ລົ້ມລະລາຍ.

## ມາດຕາ 78 (ປັບປຸງ) ຄະນະຄວບຄຸມ

ໃນການແກ້ໄຂທະນາຄານທຸລະກິດທີ່ຢູ່ໃນພາວະວິກິດ ທະນາຄານແຫ່ງ ສປປ ລາວ ເປັນຜູ້ແຕ່ງຕັ້ງຄະນະຄວບຄຸມ ເພື່ອເຂົ້າໄປ ແກ້ໄຂທະນາຄານທຸລະກິດດັ່ງກ່າວ ຕາມແຕ່ລະກໍລະນີ. ຄະນະຄວບຄຸມ ມີສິດນຳໃຊ້ມາດຕະການຕາມທີ່ໄດ້ກຳນົດໄວ້ໃນມາດຕາ 79 ຂອງກົດໝາຍສະບັບນີ້ ຕາມການມອບໝາຍຂອງທະນາຄານແຫ່ງ ສປປ ລາວ.

ຄະນະຄວບຄຸມ ມີອາຍຸການ ຫົກເດືອນ ແລະ ສາມາດຕໍ່ໄດ້ສອງຄັ້ງ ຊຶ່ງແຕ່ລະຄັ້ງບໍ່ເກີນ ສາມເດືອນ.

ຄ່າໃຊ້ຈ່າຍໃນການນຳໃຊ້ໃນການປະຕິບັດມາດຕະການແກ້ໄຂຕໍ່ທະນາຄານທຸລະກິດ ທີ່ຢູ່ໃນພາວະວິກິດ ລວມທັງຄ່າແຮງງານຂອງຄະນະຄວບຄຸມ ແມ່ນເປັນພາລະຂອງທະນາຄານທຸລະກິດນັ້ນ.

## ມາດຕາ 79 (ປັບປຸງ) ມາດຕະການແກ້ໄຂທະນາຄານທຸລະກິດທີ່ຢູ່ໃນພາວະວິກິດ

ມາດຕະການແກ້ໄຂທະນາຄານທີ່ຢູ່ໃນພາວະວິກິດ ປະກອບມີມາດຕະການເຂົ້າຄວບຄຸມ ແລະ ມາດຕະການຟື້ນຟູ ດັ່ງນີ້:

ມາດຕະການເຂົ້າຄວບຄຸມ ມີ ດັ່ງນີ້:

1. ສັ່ງໃຫ້ປິດ, ຍົກເລີກ ຫຼື ສືບຕໍ່ການປະຕິບັດສັນຍາທາງການເງິນ ຫຼື ສັນຍາອະນຸພັນທາງດ້ານການເງິນ;

2. ເລື່ອນ, ໂຈະ ການຊຳລະໜີ້ຂອງທະນາຄານທຸລະກິດແກ່ເຈົ້າໜີ້ ຖ້າເຫັນວ່າສັນຍາບໍ່ຖືກຕ້ອງ;

3. ຮຽກເກັບຊັບສິນຂອງທະນາຄານທຸລະກິດທີ່ຢູ່ໃນພາວະວິກິດ ນຳບຸກຄົນ, ນິຕິບຸກຄົນ, ການຈັດຕັ້ງ ຫຼື ທະນາຄານທຸລະກິດອື່ນ;

4. ໃຫ້ບຸກຄົນ, ນິຕິບຸກຄົນ ຫຼື ການຈັດຕັ້ງທີ່ກ່ຽວຂ້ອງ ສະໜອງຂໍ້ມູນ;

5. ນຳໃຊ້ມາດຕະການອື່ນ ຕາມທີ່ໄດ້ກຳນົດໄວ້ໃນລະບຽບການຂອງທະນາຄານແຫ່ງ ສປປ ລາວ;

ມາດຕະການຟື້ນຟູ ມີ ດັ່ງນີ້:

1. ສັ່ງນຳສະພາບໍລິຫານ, ຜູ້ບໍລິຫານຂອງທະນາຄານທຸລະກິດ ເພື່ອສ້າງ ແລະ ຈັດຕັ້ງປະຕິບັດແຜນຟື້ນຟູ;

2. ສັ່ງໃຫ້ຜູ້ບໍລິຫານ ປົດຕຳແໜ່ງພະນັກງານທີ່ລະເມີດ ລະບຽບກົດໝາຍ ຫຼື ບໍ່ຈັດຕັ້ງປະຕິບັດແຜນຟື້ນຟູ;

3. ສັ່ງໃຫ້ຢຸດເຊົາການເຄື່ອນໄຫວຕ່າງໆຂອງທະນາຄານທຸລະກິດ ທີ່ບໍ່ສອດຄ່ອງກັບແຜນຟື້ນຟູ ແລະ ການເຄື່ອນໄຫວທີ່ສ້າງເປັນເສຍຫາຍແກ່ທະນາຄານທຸລະກິດ;

4. ປັບປຸງ, ປ່ຽນແທນສະພາບໍລິຫານ ແລະ ຜູ້ບໍລິຫານ ເພື່ອໃຫ້ເປັນລູແຜນຟື້ນຟູ;

5. ສັ່ງໃຫ້ເພີ່ມທຶນຈົດທະບຽນ ຫຼື ຄວບກິດຈະການກັບທະນາຄານທຸລະກິດອື່ນ;

6. ປັບປຸງຮູບແບບວິສາຫະກິດຂອງທະນາຄານທຸລະກິດ;

7. ນຳໃຊ້ມາດຕະການອື່ນ ຕາມທີ່ໄດ້ກຳນົດໄວ້ໃນລະບຽບການຂອງທະນາຄານແຫ່ງ ສປປ ລາວ;

ໃນກໍລະນີຈຳເປັນ ທະນາຄານແຫ່ງ ສປປ ລາວ ມີສິດນຳໃຊ້ມາດຕະການ ຕາມມາດຕານີ້ ຕໍ່ບໍລິສັດໃນກຸ່ມຂອງທະນາຄານທຸລະກິດທີ່ຢູ່ໃນພາວະວິກິດ ໂດຍປະສານກັບພາກສ່ວນທີ່ກ່ຽວຂ້ອງທີ່ຄຸ້ມຄອງບໍລິສັດໃນກຸ່ມນັ້ນ.

## ພາກທີ VII
## ການຍຸບເລີກ, ການລົ້ມລະລາຍ ແລະ ການຊຳລະສະສາງ
### ໝວດທີ 1
### ການຍຸບເລີກ ແລະ ການລົ້ມລະລາຍ

**ມາດຕາ ໙໐ (ປັບປຸງ) ການຍຸບເລີກທະນາຄານທຸລະກິດ**

ທະນາຄານແຫ່ງ ສປປ ລາວ ຈະພິຈາລະນາຍຸບເລີກທະນາຄານທຸລະກິດ ໃນກໍລະນີໃດໜຶ່ງ ດັ່ງນີ້:

1. ມີການຮ້ອງຂໍຍຸບເລີກທະນາຄານທຸລະກິດ ຕາມມະຕິຂອງກອງປະຊຸມຜູ້ຖືຮຸ້ນ;

2. ໄດ້ຮັບອະນຸຍາດດຳເນີນທຸລະກິດການທະນາຄານ ບົນພື້ນຖານການສະໜອງຂໍ້ມູນທີ່ບໍ່ຖືກຕ້ອງ;

3. ບໍ່ດຳເນີນທຸລະກິດຂອງຕົນ ພາຍໃນເວລາ ເກົ້າສິບວັນ ນັບແຕ່ວັນໄດ້ຮັບໃບທະບຽນວິສາຫະກິດ ເປັນຕົ້ນໄປ;

4. ມີການລະເມີດລະບຽບການ ກ່ຽວກັບການຮັກສາຄວາມໝັ້ນຄົງຂອງທະນາຄານທຸລະກິດຢ່າງຮ້າຍແຮງ.

**ມາດຕາ ໘໑ (ໃໝ່) ການຍຸບເລີກສາຂາທະນາຄານທຸລະກິດຕ່າງປະເທດ**

ທະນາຄານແຫ່ງ ສປປ ລາວ ຈະພິຈາລະນາການຍຸບເລີກສາຂາທະນາຄານທຸລະກິດຕ່າງປະເທດ ໃນກໍລະນີໃດໜຶ່ງ ດັ່ງນີ້:

໑. ສໍານັກງານໃຫຍ່ຮ້ອງຂໍຍຸບເລີກສາຂາຂອງຕົນ;

໒. ໄດ້ຮັບອະນຸຍາດດໍາເນີນທຸລະກິດການທະນາຄານ ບົນພື້ນຖານການສະໜອງຂໍ້ມູນທີ່ບໍ່ຖືກຕ້ອງ;

໓. ບໍ່ດໍາເນີນທຸລະກິດຂອງຕົນ ພາຍໃນເວລາ ເກົ້າສິບວັນ ນັບແຕ່ວັນໄດ້ຮັບໃບທະບຽນວິສາຫະກິດເປັນຕົ້ນໄປ;

໔. ບໍ່ສາມາດແກ້ໄຂພາວະວິກິດ;

໕. ສໍານັກງານໃຫຍ່ຂອງສາຂາທະນາຄານທຸລະກິດຕ່າງປະເທດ ຖືກຍຸບເລີກ ຫຼື ລົ້ມລະລາຍ.

ພາຍຫຼັງການຍຸບເລີກ ທະນາຄານແຫ່ງ ສປປ ລາວ ຈະຖອນໃບອະນຸຍາດດໍາເນີນທຸລະກິດການທະນາຄານຂອງສາຂາທະນາຄານທຸລະກິດດັ່ງກ່າວ.

ໃນກໍລະນີທີ່ຍຸບເລີກຕາມທີ່ໄດ້ກໍານົດໄວ້ໃນຂໍ້ ໒, ໔ ແລະ ຂໍ້ ໕ ຂອງມາດຕານີ້ ທະນາຄານແຫ່ງ ສປປ ລາວ ຈະແຕ່ງຕັ້ງຄະນະຊໍາລະສະສາງ ເພື່ອດໍາເນີນການຊໍາລະສະສາງ.

ໃນກໍລະນີທີ່ການຍຸບເລີກດ້ວຍສາເຫດຕາມທີ່ໄດ້ກໍານົດໄວ້ໃນຂໍ້ ໔ ຂອງມາດຕານີ້ ທະນາຄານແຫ່ງ ສປປ ລາວ ຈະແຈ້ງໃຫ້ສໍານັກງານປົກປ້ອງເງິນຝາກ ຈ່າຍຄືນເງິນຝາກທີ່ໄດ້ຮັບການປົກປ້ອງ.

ສໍານັກງານໃຫຍ່ຂອງສາຂາທະນາຄານທຸລະກິດຕ່າງປະເທດ ຕ້ອງຮັບຜິດຊອບຊໍາລະສະສາງໜີ້ສິນຂອງສາຂາຕົນທີ່ຖືກຍຸບເລີກຢ່າງຄົບຖ້ວນ.

**ມາດຕາ ໘໒ (ປັບປຸງ) ການລົ້ມລະລາຍ**

ທະນາຄານແຫ່ງ ສປປ ລາວ ມີສິດຮ້ອງຟ້ອງໃຫ້ສານຕັດສິນລົ້ມລະລາຍ ຕໍ່ທະນາຄານທຸລະກິດທີ່ ຢູ່ໃນພາວະວິກິດ ໃນກໍລະນີທີ່ເຫັນວ່າທະນາຄານທຸລະກິດດັ່ງກ່າວ ບໍ່ສາມາດຟື້ນຟູໄດ້ ຫຼື ໄດ້ດໍາເນີນການຟື້ນຟູແລ້ວ ແຕ່ທະນາຄານທຸລະກິດນັ້ນບໍ່ສາມາດຄົງຕົວຢູ່ໄດ້ ໂດຍມີໜີ້ສິນຫຼາຍກວ່າຊັບສິນ.

ພາຍຫຼັງຮ້ອງຟ້ອງໃຫ້ສານຕັດສິນລົ້ມລະລາຍ ທະນາຄານແຫ່ງ ສປປ ລາວ ຕ້ອງແຈ້ງໃຫ້ສໍານັກງານປົກປ້ອງເງິນຝາກ ເພື່ອປະຕິບັດການຈ່າຍຄືນເງິນຝາກທີ່ໄດ້ຮັບການປົກປ້ອງ ຕາມລະບຽບການທີ່ກ່ຽວຂ້ອງ.

**ມາດຕາ ໘໓ (ໃໝ່) ຜົນຂອງການຍຸບເລີກ ຫຼື ລົ້ມລະລາຍ**

ພາຍຫຼັງການຍຸບເລີກ ຫຼື ລົ້ມລະລາຍ ທະນາຄານທຸລະກິດ ຈະຖືກຖອນໃບອະນຸຍາດດໍາເນີນທຸລະກິດ ແລະ ດໍາເນີນການຊໍາລະສະສາງ.

ທະນາຄານທຸລະກິດທີ່ຍຸບເລີກ ຕ້ອງຮັບຜິດຊອບໃຊ້ແທນໜີ້ສິນຂອງຕົນຢ່າງຄົບຖ້ວນ.

ທະນາຄານແຫ່ງ ສປປ ລາວ ຕ້ອງລຶບຊື່ທະນາຄານທຸລະກິດ ທີ່ຖືກຍຸບເລີກ ຫຼື ລົ້ມລະລາຍ ອອກຈາກບັນຊີລາຍຊື່ທະນາຄານທຸລະກິດທີ່ເປີດເຜີຍຕໍ່ມວນຊົນ.

## ໝວດທີ 2
## ການຊໍາລະສະສາງ

**ມາດຕາ 84 (ປັບປຸງ) ການຊໍາລະສະສາງ**

ພາຍຫຼັງການຍຸບເລີກ ຫຼື ສານຕັດສິນລົ້ມລະລາຍແລ້ວ, ທະນາຄານແຫ່ງ ສປປ ລາວ ຈະແຕ່ງຕັ້ງຄະນະ ຫຼື ຜູ້ຊໍາລະສະສາງ ຕາມທີ່ກໍານົດໄວ້ໃນລະບຽບການຂອງທະນາຄານແຫ່ງ ສປປ ລາວ.

ໃນກໍລະນີການຊໍາລະສະສາງຂອງທະນາຄານທຸລະກິດ ທີ່ຍຸບເລີກດ້ວຍຄວາມສະໝັກໃຈ ຖ້າຫາກເຫັນວ່າທະນາຄານດັ່ງກ່າວມີຄວາມສາມາດຊໍາລະສະສາງໜີ້ຂອງຕົນຕໍ່ຜູ້ຝາກເງິນ ແລະ ເຈົ້າໜີ້ອື່ນໄດ້ຢ່າງຄົບຖ້ວນ, ທະນາຄານແຫ່ງ ສປປ ລາວ ກໍຈະມອບໃຫ້ທະນາຄານທຸລະກິດ ທີ່ຂໍຍຸບເລີກນັ້ນ ຈັດຕັ້ງການຊໍາລະສະສາງດ້ວຍຕົນເອງໄດ້ ແຕ່ຕ້ອງຕິດຕາມຢ່າງໃກ້ຊິດ.

**ມາດຕາ 85 (ປັບປຸງ) ສິດ ແລະ ໜ້າທີ່ ຂອງຄະນະ ຫຼື ຜູ້ຊໍາລະສະສາງ**

ຄະນະ ຫຼື ຜູ້ຊໍາລະສະສາງ ມີ ສິດ ແລະ ໜ້າທີ່ ດັ່ງນີ້:

1. ປະຕິບັດໜ້າທີ່ແທນຜູ້ບໍລິຫານ ແລະ ຜູ້ຖືຮຸ້ນ ຂອງທະນາຄານທຸລະກິດ ໃນການຊໍາລະສະສາງ;
2. ຄວບຄຸມຫ້ອງການ, ປຶ້ມບັນຊີ, ປຶ້ມບັນທຶກຕ່າງໆ ແລະ ຊັບສິນຂອງທະນາຄານທຸລະກິດ ຫຼື ບໍລິສັດໃນກຸ່ມ;
3. ລົບລ້າງສັນຍາຂອງທະນາຄານທຸລະກິດ ທີ່ເຮັດຂຶ້ນໂດຍບໍ່ຖືກຕ້ອງ;
4. ປົກປັກຮັກສາຊັບສິນຂອງທະນາຄານທຸລະກິດ ບໍ່ໃຫ້ຖືກເສື່ອມເສຍຫາຍ;
5. ເກັບກູ້ຊັບສິນຂອງທະນາຄານທຸລະກິດ;
6. ຂຶ້ນບັນຊີ ເຈົ້າໜີ້, ລູກໜີ້ ແລະ ຊັບສິນ, ສ້າງບົດສະຫຼຸບຊັບສົມບັດຂອງທະນາຄານທຸລະກິດຄືນໃໝ່ ແລ້ວສົ່ງສໍາເນົາໃຫ້ທະນາຄານແຫ່ງ ສປປ ລາວ ພ້ອມທັງພິມເຜີຍແຜ່ຜ່ານສື່ມວນຊົນ;
7. ກໍານົດຈໍານວນເງິນທີ່ຈະຊໍາລະສະສາງຕາມບູລິມະສິດ;
8. ກໍານົດແຜນການ, ວິທີການ ແລະ ຂອບການຊໍາລະສະສາງຊັບສິນ, ໜີ້ສິນ ເພື່ອສະເໜີທະນາຄານແຫ່ງ ສປປ ລາວ ພິຈາລະນາ;
9. ລາຍງານໃຫ້ທະນາຄານແຫ່ງ ສປປ ລາວ ກ່ຽວກັບຄວາມຄືບໜ້າຂອງການຊໍາລະສະສາງຢ່າງເປັນປົກກະຕິ;
10. ນໍາໃຊ້ສິດ ແລະ ປະຕິບັດໜ້າທີ່ອື່ນ ຕາມທີ່ໄດ້ກໍານົດໄວ້ໃນກົດໝາຍ.

**ມາດຕາ 86 (ປັບປຸງ) ບູລິມະສິດໃນການຊໍາລະສະສາງ**

ການຊໍາລະສະສາງ ໃຫ້ປະຕິບັດຕາມລໍາດັບບູລິມະສິດ ດັ່ງນີ້:

1. ຄ່າໃຊ້ຈ່າຍໃນການຊໍາລະສະສາງ;
2. ຊົດເຊີຍໃຫ້ສໍານັກງານປົກປ້ອງເງິນຝາກ;

3. ຈ່າຍຄືນເງິນຝາກທີ່ບໍ່ໄດ້ຮັບການປົກປ້ອງ ແລະ ສ່ວນທີ່ຍັງເຫຼືອຈາກການໄດ້ຮັບການປົກປ້ອງ;

4. ຈ່າຍເງິນເດືອນ ແລະ ຄ່າແຮງງານຂອງພະນັກງານທະນາຄານທຸລະກິດ ຍົກເວັ້ນຜູ້ບໍລິຫານ;

5. ໃຊ້ແທນໜີ້ສິນທີ່ມີການຄ້ຳປະກັນຕາມສັນຍາ;

6. ພັນທະທາງດ້ານການເງິນທີ່ມີກຳນົດ;

7. ໃຊ້ແທນໜີ້ສິນທີ່ບໍ່ມີການຄ້ຳປະກັນ;

8. ແບ່ງປັນໃຫ້ຜູ້ຖືຮຸ້ນຂອງທະນາຄານທຸລະກິດ ຫຼື ໂອນຄືນໃຫ້ສຳນັກງານໃຫຍ່.

**ມາດຕາ 87 (ປັບປຸງ) ຜົນສະທ້ອນຂອງການເຂົ້າຊຳລະສະສາງ**

ຜົນສະທ້ອນຂອງການເຂົ້າຊຳລະສະສາງ ມີ ດັ່ງນີ້:

1. ສິດຂອງທະນາຄານທຸລະກິດ ທີ່ເກີດຈາກກົດໝາຍ ຫຼື ສັນຍາ ຊຶ່ງໄດ້ສິ້ນສຸດ ຫຼື ຈະສິ້ນສຸດລົງ ຕ້ອງໄດ້ກຳນົດເວລາອອກໄປອີກ ຫົກເດືອນ ນັບແຕ່ວັນທີ່ຄະນະ ຫຼື ຜູ້ຊຳລະສະສາງ ເຂົ້າປະຕິບັດໜ້າທີ່ ເປັນຕົ້ນໄປ;

2. ການອາຍັດ ຊັບສິນ ຫຼື ຫຼັກຊັບຄ້ຳປະກັນສິນເຊື່ອ ຂອງທະນາຄານທຸລະກິດ ໃນເວລາມີການຊຳລະສະສາງນັ້ນຈະຖືກຍົກເລີກ ເວັ້ນເສຍແຕ່ກໍລະນີການອາຍັດ ຫຼື ການຄ້ຳປະກັນດັ່ງກ່າວ ຫາກເກີດຂຶ້ນ ຫົກເດືອນ ກ່ອນວັນທີ່ທະນາຄານແຫ່ງ ສປປ ລາວ ຮັບເອົາການຍຸບເລີກ ຫຼື ວັນທີ່ທະນາຄານແຫ່ງ ສປປ ລາວ ຮ້ອງຟ້ອງໃຫ້ສານຕັດສິນລົ້ມລະລາຍ ເປັນຕົ້ນໄປ;

3. ສິດຂອງຜູ້ຖືຮຸ້ນແມ່ນຈະຖືກຍົກເລີກ ເວັ້ນເສຍແຕ່ສິດໄດ້ຮັບການແບ່ງປັນຊັບສິນທີ່ຍັງເຫຼືອຈາກການຊຳລະສະສາງ.

**ມາດຕາ 88 (ປັບປຸງ) ຄ່າໃຊ້ຈ່າຍໃນການຊຳລະສະສາງ**

ທະນາຄານທຸລະກິດ ທີ່ຖືກຍຸບເລີກ ຫຼື ລົ້ມລະລາຍ ເປັນຜູ້ຮັບຜິດຊອບຄ່າໃຊ້ຈ່າຍໃນການຊຳລະສະສາງ ຕາມການພິຈາລະນາຂອງຄະນະ ຫຼື ຜູ້ຊຳລະສະສາງ ບົນພື້ນຖານການຮັບຮອງຂອງທະນາຄານແຫ່ງ ສປປ ລາວ.

**ມາດຕາ 89 (ປັບປຸງ) ການລາຍງານຄັ້ງສຸດທ້າຍຂອງຄະນະ ຫຼື ຜູ້ຊຳລະສະສາງ**

ພາຍຫຼັງການດຳເນີນການຊຳລະສະສາງສຳເລັດ ຄະນະ ຫຼື ຜູ້ຊຳລະສະສາງ ຕ້ອງເຮັດບົດລາຍງານໃຫ້ທະນາຄານແຫ່ງ ສປປ ລາວ, ສຳລັບການລົ້ມລະລາຍ ຍັງຕ້ອງສົ່ງບົດລາຍງານໃຫ້ອົງການຈັດຕັ້ງປະຕິບັດຄຳຕັດສິນຂອງສານທີ່ກ່ຽວຂ້ອງ ເພື່ອປິດສຳນວນຄະດີ.

ຫຼັງຈາກທະນາຄານແຫ່ງ ສປປ ລາວ ໄດ້ຮັບຮອງເອົາບົດລາຍງານດັ່ງກ່າວແລ້ວ ຄະນະ ຫຼື ຜູ້ຊຳລະສະສາງ ຈະໝົດຄວາມຮັບຜິດຊອບ ແລະ ຖືວ່າການຊຳລະສະສາງສິ້ນສຸດລົງ.

## ພາກທີ VIII
## ຂໍ້ຫ້າມ

**ມາດຕາ ໙໐ (ໃໝ່) ຂໍ້ຫ້າມທົ່ວໄປ**

ຫ້າມ ບຸກຄົນ, ນິຕິບຸກຄົນ ແລະ ການຈັດຕັ້ງ ມີ ພຶດຕິກຳ ດັ່ງນີ້:

1. ນຳໃຊ້ຄຳວ່າ ທະນາຄານ ຫຼື ຄຳສັບທີ່ມີຄວາມໝາຍເປັນທະນາຄານ ຢູ່ໃນທຸລະກິດ, ຜະລິດຕະພັນ ຫຼື ການບໍລິການຂອງຕົນ ໂດຍບໍ່ໄດ້ຮັບອະນຸຍາດສ້າງຕັ້ງເປັນທະນາຄານທຸລະກິດ;
2. ດຳເນີນທຸລະກິດການທະນາຄານ ໂດຍບໍ່ໄດ້ຮັບອະນຸຍາດຈາກທະນາຄານແຫ່ງ ສປປ ລາວ;
3. ແອບອ້າງ ຫຼື ໂຄສະນາ, ບິດເບືອນ ຂໍ້ມູນ ທີ່ສ້າງຜົນເສຍຫາຍຕໍ່ລະບົບທະນາຄານ, ຜູ້ຊົມໃຊ້ ແລະ ສັງຄົມ;
4. ສວຍໃຊ້ການໃຫ້ບໍລິການທະນາຄານ ເຂົ້າໃນການເຄື່ອນໄຫວທີ່ບໍ່ຖືກຕ້ອງຕາມກົດໝາຍ;
5. ປະຕິເສດ ຫຼື ບໍ່ໃຫ້ການຮ່ວມມື ແກ່ຜູ້ກວດກາຂອງທະນາຄານແຫ່ງ ສປປ ລາວ ແລະ ເຈົ້າໜ້າທີ່ກ່ຽວຂ້ອງຂອງລັດ;
6. ໃຫ້ຂໍ້ມູນທີ່ບໍ່ຖືກຕ້ອງ, ປອມແປງເອກະສານ ເພື່ອໃຊ້ບໍລິການທະນາຄານ;
7. ມີພຶດຕິກຳອື່ນ ທີ່ເປັນການລະເມີດກົດໝາຍ.

**ມາດຕາ ໙໑ (ປັບປຸງ) ຂໍ້ຫ້າມສຳລັບທະນາຄານທຸລະກິດ**

ຫ້າມ ທະນາຄານທຸລະກິດ ຫຼື ສາຂາທະນາຄານທຸລະກິດຕ່າງປະເທດ ລວມທັງ ຜູ້ບໍລິຫານ ແລະ ພະນັກງານ ມີ ພຶດຕິກຳ ດັ່ງນີ້:

1. ດຳເນີນ ຫຼື ຮ່ວມດຳເນີນທຸລະກຳໃດໜຶ່ງ ຊຶ່ງຈະເຮັດໃຫ້ຕົນ ຫຼື ຜູ້ອື່ນ ມີຖານະເປັນຜູ້ຄອບຄອງຕະຫຼາດ;
2. ດຳເນີນທຸລະກຳທີ່ເປັນການປົ່ນປອນ ເຮັດໃຫ້ເກີດມີການໄດ້ປຽບ ຫຼື ເສຍປຽບ ແບບບໍ່ຍຸຕິທຳ ລະຫວ່າງທະນາຄານທຸລະກິດດ້ວຍກັນ ແລະ ພາກສ່ວນອື່ນ;
3. ຮຽກຮ້ອງ ຫຼື ກຳນົດເງື່ອນໄຂ ທີ່ບໍ່ຖືກຕ້ອງຕາມກົດໝາຍໃຫ້ຜູ້ຊົມໃຊ້ ປະຕິບັດໃນການຮັບການບໍລິການຂອງຕົນ ຫຼື ໃນກຸ່ມ;
4. ຊື້ຮຸ້ນສິນຂອງບໍລິສັດໃນກຸ່ມ, ຊື້ຫຼັກຊັບ ທີ່ບໍລິສັດໃນກຸ່ມຂອງຕົນ ໃຫ້ການຄ້ຳປະກັນການຈຳໜ່າຍ;
5. ສະໜອງສິນເຊື່ອ ເພື່ອອຳນວຍຄວາມສະດວກໃນການຊື້ຫຼັກຊັບທີ່ຕົນ ຫຼື ບໍລິສັດໃນກຸ່ມໃຫ້ການຄ້ຳປະກັນການຈຳໜ່າຍ;
6. ສະໜອງສິນເຊື່ອ ໂດຍມີຮຸ້ນຂອງຕົນ ຫຼື ບໍລິສັດໃນກຸ່ມຂອງຕົນ ເປັນຫຼັກຊັບຄ້ຳປະກັນ;
7. ແບ່ງເງິນປັນຜົນ ໃນກໍລະນີທີ່ມີການຂາດທຶນ;
8. ເປີດເຜີຍຂໍ້ມູນຂອງລູກຄ້າ ໂດຍບໍ່ໄດ້ຮັບອະນຸຍາດ;
9. ມີພຶດຕິກຳອື່ນ ທີ່ເປັນການລະເມີດກົດໝາຍ.

**ມາດຕາ 92 (ໃໝ່) ຂໍ້ຫ້າມສຳລັບ ພະນັກງານຂອງອົງການຄຸ້ມຄອງ, ຄະນະຄວບຄຸມ ແລະ ຄະນະ ຫຼື ຜູ້ຊຳລະສະສາງ**

ຫ້າມພະນັກງານຂອງອົງການຄຸ້ມຄອງ, ຄະນະຄວບຄຸມ ແລະ ຄະນະ ຫຼື ຜູ້ຊຳລະສະສາງ ມີ ພຶດຕິກຳ ດັ່ງນີ້:

1. ເປີດເຜີຍຂໍ້ມູນທີ່ເປັນຄວາມລັບ ກ່ຽວກັບວຽກງານການຄຸ້ມຄອງທະນາຄານທຸລະກິດ ໂດຍບໍ່ໄດ້ຮັບອະນຸຍາດ;
2. ສວຍໃຊ້ໜ້າທີ່ຕຳແໜ່ງ ເພື່ອຫາຜົນປະໂຫຍດແກ່ຕົນ ຫຼື ຜູ້ກ່ຽວຂ້ອງ;
3. ທວງເອົາ, ຂໍເອົາ, ຮັບສິນບົນ ຫຼື ສິ່ງຕອບແທນອື່ນ;
4. ມີພຶດຕິກຳອື່ນ ທີ່ເປັນການລະເມີດກົດໝາຍ.

# ພາກທີ IX
# ການຄຸ້ມຄອງ ແລະ ການກວດກາ ທະນາຄານທຸລະກິດ

## ໝວດທີ 1
## ການຄຸ້ມຄອງທະນາຄານທຸລະກິດ

**ມາດຕາ 93 (ປັບປຸງ) ອົງການຄຸ້ມຄອງ**

ລັດຖະບານ ເປັນຜູ້ຄຸ້ມຄອງທະນາຄານທຸລະກິດ ຢ່າງລວມສູນ ແລະ ເປັນເອກະພາບໃນຂອບເຂດທົ່ວປະເທດ ໂດຍມອບໃຫ້ທະນາຄານແຫ່ງ ສປປ ລາວ ເປັນຜູ້ຮັບຜິດຊອບໂດຍກົງ ແລະ ເປັນເຈົ້າການປະສານສົມທົບກັບພາກສ່ວນທີ່ກ່ຽວຂ້ອງ.

**ມາດຕາ 94 (ປັບປຸງ) ສິດ ແລະ ໜ້າທີ່ ຂອງທະນາຄານແຫ່ງ ສປປ ລາວ**

ໃນການຄຸ້ມຄອງທະນາຄານທຸລະກິດ ທະນາຄານແຫ່ງ ສປປ ລາວ ມີ ສິດ ແລະ ໜ້າທີ່ ດັ່ງນີ້:

1. ຄົ້ນຄວ້າ ສ້າງນະໂຍບາຍ, ກົດໝາຍ, ຍຸດທະສາດ ແລະ ແຜນການ ກ່ຽວກັບການຄຸ້ມຄອງທະນາຄານທຸລະກິດ ເພື່ອສະເໜີຂັ້ນເທິງພິຈາລະນາ;
2. ສ້າງ, ປັບປຸງນິຕິກຳ, ຄູ່ມື ແລະ ແບບຟອມ ເພື່ອຄຸ້ມຄອງທະນາຄານທຸລະກິດໃນແຕ່ລະໄລຍະ;
3. ໂຄສະນາ ເຜີຍແຜ່, ຊີ້ນຳ ແລະ ຊຸກຍູ້ ການຈັດຕັ້ງປະຕິບັດກົດໝາຍ ແລະ ລະບຽບການ ກ່ຽວກັບວຽກງານຄຸ້ມຄອງທະນາຄານທຸລະກິດ ໃນຂອບເຂດທົ່ວປະເທດ;
4. ອອກ ແລະ ຖອນ ໃບອະນຸຍາດດຳເນີນທຸລະກິດການທະນາຄານ;
5. ກວດກາການປະຕິບັດລະບຽບການຮັກສາຄວາມໝັ້ນຄົງ ຂອງທະນາຄານທຸລະກິດທົ່ວລະບົບ ລວມທັງກວດກາການປະຕິບັດກົດໝາຍ ແລະ ລະບຽບການທີ່ກ່ຽວຂ້ອງ;
6. ສ້າງແຜນການຮອງຮັບພາວະວິກິດ ຂອງທະນາຄານທຸລະກິດທີ່ມີຄວາມສຳຄັນຕໍ່ລະບົບ;
7. ນຳໃຊ້ມາດຕະການແຕ່ຫົວທີ ຫຼື ແກ້ໄຂທະນາຄານທຸລະກິດທີ່ຢູ່ໃນພາວະວິກິດ;

໘. ນຳໃຊ້ມາດຕະການຕໍ່ທະນາຄານທຸລະກິດ ທີ່ລະເມີດກົດໝາຍ ແລະ ລະບຽບການຄຸ້ມຄອງທະນາຄານທຸລະກິດ;

໙. ສ້າງ, ບຳລຸງພະນັກງານທາງດ້ານວິຊາການການທະນາຄານ;

໑໐. ກຳນົດ ແລະ ເກັບຄ່າຄຸ້ມຄອງປະຈຳປີ ຕໍ່ທະນາຄານທຸລະກິດ;

໑໑. ປະສານສົມທົບກັບພາກສ່ວນທີ່ກ່ຽວຂ້ອງພາຍໃນປະເທດ ກ່ຽວກັບວຽກງານຄຸ້ມຄອງທະນາຄານທຸລະກິດ;

12. ຮ່ວມມືກັບຕ່າງປະເທດ, ພາກພື້ນ ແລະ ສາກົນ ກ່ຽວກັບວຽກງານຄຸ້ມຄອງທະນາຄານທຸລະກິດ;

13. ລາຍງານຜົນຂອງການຈັດຕັ້ງປະຕິບັດວຽກງານຂອງຕົນ ໃຫ້ລັດຖະບານຢ່າງເປັນປົກກະຕິ;

14. ນຳໃຊ້ສິດ ແລະ ປະຕິບັດໜ້າທີ່ອື່ນ ຕາມທີ່ໄດ້ກຳນົດໄວ້ໃນກົດໝາຍ.

## ໝວດທີ 2
## ການກວດກາທະນາຄານທຸລະກິດ

### ມາດຕາ 95 (ໃໝ່) ອົງການກວດກາ

ອົງການກວດກາທະນາຄານທຸລະກິດ ແມ່ນອົງການດຽວກັນກັບອົງການຄຸ້ມຄອງທະນາຄານທຸລະກິດ ຕາມທີ່ໄດ້ກຳນົດໄວ້ໃນມາດຕາ 93 ຂອງກົດໝາຍສະບັບນີ້.

### ມາດຕາ 96 (ໃໝ່) ຮູບການການກວດກາ

ການກວດກາທະນາຄານທຸລະກິດ ມີ ສາມ ຮູບການ ດັ່ງນີ້:

1. ການກວດກາປົກກະຕິ ຊຶ່ງແມ່ນການກວດກາທີ່ດຳເນີນໄປຕາມແຜນການຢ່າງເປັນປະຈຳ ແລະ ມີກຳນົດເວລາທີ່ແນ່ນອນ;

2. ການກວດກາໂດຍແຈ້ງໃຫ້ຮູ້ລ່ວງໜ້າ ຊຶ່ງແມ່ນການກວດການອກແຜນການ ເມື່ອເຫັນວ່າມີຄວາມຈຳເປັນ ຊຶ່ງຕ້ອງແຈ້ງໃຫ້ທະນາຄານທຸລະກິດຮູ້ລ່ວງໜ້າ;

3. ການກວດກາແບບກະທັນຫັນ ຊຶ່ງແມ່ນການກວດກາຮີບດ່ວນ ໂດຍບໍ່ໄດ້ແຈ້ງໃຫ້ທະນາຄານທຸລະກິດຮູ້ລ່ວງໜ້າ.

ການກວດກາ ສາມາດດຳເນີນໄດ້ທັງການກວດກາທາງເອກະສານ ແລະ ການກວດກາກັບທີ່ ຊຶ່ງຜູ້ກວດກາ ຕ້ອງປະຕິບັດຕາມກົດໝາຍ ແລະ ລະບຽບການຢ່າງເຂັ້ມງວດ.

### ມາດຕາ 97 (ໃໝ່) ການກວດກາທາງເອກະສານ

ທະນາຄານແຫ່ງ ສປປ ລາວ ຕ້ອງດຳເນີນການກວດກາທາງເອກະສານຢ່າງຕໍ່ເນື່ອງ ດ້ວຍການເກັບກຳ ແລະ ວິເຄາະ ບົດລາຍງານ, ເອກະສານ ແລະ ຂໍ້ມູນຕ່າງໆ ກ່ຽວກັບການເຄື່ອນໄຫວຂອງທະນາຄານທຸລະກິດ ພ້ອມທັງກວດກາຄວາມຖືກຕ້ອງຂອງຂໍ້ມູນ ແລະ ປະເມີນສະພາບ, ລັກສະນະຄວາມສ່ຽງ ແລະ ການຄວບຄຸມພາຍໃນຂອງທະນາຄານທຸລະກິດ.

**ມາດຕາ 98 (ໃໝ່) ການກວດກາທັນທີ**

ທະນາຄານແຫ່ງ ສປປ ລາວ ຕ້ອງດໍາເນີນການກວດກາທັນທີຢູ່ທະນາຄານທຸລະກິດ ກ່ຽວກັບການເຄື່ອນໄຫວ, ສະພາບພາບໃນຕົວຈິງ ແລະ ການຮັກສາຄວາມໝັ້ນຄົງຂອງທະນາຄານທຸລະກິດ ຊຶ່ງການກວດກາດັ່ງກ່າວ ມີເນື້ອໃນຕົ້ນຕໍ ດັ່ງນີ້:

1. ການດໍາເນີນທຸລະກິດໂດຍທົ່ວໄປ;
2. ການຈັດຕັ້ງປະຕິບັດລະບຽບການຮັກສາຄວາມໝັ້ນຄົງ;
3. ການກວດກາ ແລະ ປະເມີນຄວາມສ່ຽງ, ການບໍລິຫານຄວາມສ່ຽງ ແລະ ລະບົບຄວບຄຸມພາຍໃນ;
4. ການຕິດຕາມການແກ້ໄຂຂໍ້ຄົງຄ້າງຂອງທະນາຄານທຸລະກິດ ໃນການຈັດຕັ້ງປະຕິບັດຄໍາແນະນໍາທີ່ກໍານົດໄວ້ໃນຜົນການກວດກາຄັ້ງຜ່ານມາ.

ພາຍຫຼັງສໍາເລັດການກວດກາທັນທີ ທະນາຄານແຫ່ງ ສປປ ລາວ ຕ້ອງສົ່ງບົດສະຫຼຸບຜົນການກວດກາທັນທີໃຫ້ສະພາບໍລິຫານຂອງທະນາຄານທຸລະກິດດັ່ງກ່າວ.

ໃນກໍລະນີທີ່ທະນາຄານແຫ່ງ ສປປ ລາວ ມີຄໍາສັ່ງໃຫ້ທະນາຄານທຸລະກິດ ດໍາເນີນການກວດກາທັນທີດ້ານໃດໜຶ່ງຈາກບໍລິສັດກວດສອບພາຍນອກ ທະນາຄານທຸລະກິດນັ້ນ ຕ້ອງຮັບຜິດຊອບຄ່າໃຊ້ຈ່າຍທັງໝົດທີ່ຕິດພັນກັບການກວດກາດັ່ງກ່າວ.

**ມາດຕາ 99 (ປັບປຸງ) ສິດ ແລະ ໜ້າທີ່ ຂອງຜູ້ກວດກາຂອງທະນາຄານແຫ່ງ ສປປ ລາວ**

ຜູ້ກວດກາຂອງທະນາຄານແຫ່ງ ສປປ ລາວ ມີ ສິດ ແລະ ໜ້າທີ່ ດັ່ງນີ້:

1. ກວດກາການປະຕິບັດລະບຽບການຮັກສາຄວາມໝັ້ນຄົງ;
2. ເຂົ້າເຖິງ ແລະ ກວດກາ ບັນຊີ, ເອກະສານ, ຂໍ້ມູນທາງດ້ານເອເລັກໂຕຣນິກ ແລະ ບົດບັນທຶກຕ່າງໆຂອງທະນາຄານທຸລະກິດ ຫຼື ບໍລິສັດໃນກຸ່ມ;
3. ທວງໃຫ້ຜູ້ບໍລິຫານ, ພະນັກງານ ແລະ ຕົວແທນຂອງທະນາຄານທຸລະກິດ ຫຼື ບໍລິສັດໃນກຸ່ມ ສົ່ງຂໍ້ມູນທີ່ກ່ຽວຂ້ອງກັບການບໍລິຫານ ແລະ ການດໍາເນີນວຽກງານ;
4. ເຊີນຜູ້ບໍລິຫານ, ພະນັກງານ ແລະ ຕົວແທນຂອງທະນາຄານທຸລະກິດ ຫຼື ບໍລິສັດໃນກຸ່ມ ມາຊີ້ແຈງບັນຫາຕໍ່ຜູ້ກວດກາຂອງທະນາຄານແຫ່ງ ສປປ ລາວ;
5. ກວດກາທະນາຄານທຸລະກິດທີ່ສົງໄສວ່າ ມີການລະເມີດກົດໝາຍ, ລະບຽບການ ແລະ ເກັບກໍາເອກະສານທີ່ກ່ຽວຂ້ອງ;
6. ເປີດກອງປະຊຸມກັບສະພາບໍລິຫານ ແລະ ຜູ້ບໍລິຫານຂອງທະນາຄານທຸລະກິດ ເພື່ອຕີລາຄາຜົນຂອງການດໍາເນີນງານຂອງທະນາຄານທຸລະກິດ, ການປະຕິບັດກົດໝາຍສະບັບນີ້, ກົດໝາຍອື່ນ ແລະ ລະບຽບການທີ່ກ່ຽວຂ້ອງ ພາຍຫຼັງສໍາເລັດການກວດກາທັນທີແຕ່ລະຄັ້ງ;
7. ນໍາໃຊ້ມາດຕະການແກ້ໄຂທີ່ ຕາມການມອບໝາຍຂອງທະນາຄານແຫ່ງ ສປປ ລາວ;
8. ນໍາໃຊ້ສິດ ແລະ ປະຕິບັດໜ້າທີ່ອື່ນ ຕາມການມອບໝາຍຂອງທະນາຄານແຫ່ງ ສປປ ລາວ.

### ມາດຕາ ໑໐໐ (ໃໝ່) ການກວດກາ ສາຂາ, ຫ້ອງການຜູ້ຕາງໜ້າ ແລະ ບໍລິສັດໃນກຸ່ມ ຂອງທະນາຄານທຸລະກິດ

ທະນາຄານແຫ່ງ ສປປ ລາວ ມີສິດກວດກາທາງເອກະສານ ແລະ ກວດກາກັບທີ່ບັນດາສາຂາ, ຫ້ອງການຜູ້ຕາງໜ້າ ແລະ ບໍລິສັດໃນກຸ່ມ ຂອງທະນາຄານທຸລະກິດ ທີ່ຕັ້ງຢູ່ ສປປ ລາວ ແລະ ຢູ່ຕ່າງປະເທດ ຜ່ານກົນໄກການຮ່ວມມື ແລະ ປະສານງານກັບອົງການຄຸ້ມຄອງທີ່ກ່ຽວຂ້ອງ.

### ມາດຕາ ໑໐໑ (ໃໝ່) ການໃຫ້ການຮ່ວມມືແກ່ຜູ້ກວດກາ

ຜູ້ຖືຮຸ້ນ, ຜູ້ບໍລິຫານ ແລະ ພະນັກງານ ຂອງເປົ້າໝາຍຖືກກວດກາ ຕ້ອງໃຫ້ການຮ່ວມມື ແລະ ອໍານວຍຄວາມສະດວກແກ່ທະນາຄານແຫ່ງ ສປປ ລາວ ແລະ ຜູ້ກວດກາຂອງທະນາຄານແຫ່ງ ສປປ ລາວ.

ໃນກໍລະນີທີ່ທະນາຄານແຫ່ງ ສປປ ລາວ ແລະ ຜູ້ກວດກາຂອງທະນາຄານແຫ່ງ ສປປ ລາວ ໄດ້ເຊີນ ຜູ້ຖືຮຸ້ນ, ຜູ້ບໍລິຫານ ຫຼື ພະນັກງານແລ້ວ ຜູ້ກ່ຽວຕ້ອງມາພົບດ້ວຍຕົນເອງ.

ທະນາຄານທຸລະກິດ ຕ້ອງສະໜອງເອກະສານ ແລະ ຂໍ້ມູນທີ່ຖືກຕ້ອງ ແລະ ຄົບຖ້ວນ ທີ່ກ່ຽວຂ້ອງກັບທຸລະກິດທີ່ຢູ່ໃນການຄອບຄອງຂອງຕົນ ຫຼື ຢູ່ນໍາຜູ້ດູແລຊັບສິນ ໃຫ້ແກ່ຜູ້ກວດກາຂອງທະນາຄານແຫ່ງ ສປປ ລາວ ໃຫ້ທັນຕາມກໍານົດເວລາຕາມທີ່ຜູ້ກວດກາດັ່ງກ່າວໄດ້ກໍານົດໄວ້.

ທະນາຄານທຸລະກິດ ຕ້ອງແຕ່ງຕັ້ງພະນັກງານທີ່ມີຄວາມເໝາະສົມ ຮັບຜິດຊອບໃນການປະສານງານຂອງຕົນ ເພື່ອຮັບປະກັນການສະໜອງຂໍ້ມູນທີ່ວ່ອງໄວທັນການໃຫ້ແກ່ຜູ້ກວດກາ.

### ມາດຕາ ໑໐໒ (ໃໝ່) ການລາຍງານ

ທະນາຄານທຸລະກິດ ຕ້ອງລາຍງານຂໍ້ມູນການເຄື່ອນໄຫວທຸລະກິດຂອງຕົນ ຕາມແບບລາຍງານ ແລະ ລະບຽບການຂອງທະນາຄານແຫ່ງ ສປປ ລາວ.

ຂໍ້ມູນຕົ້ນຕໍທີ່ຕ້ອງລາຍງານໃຫ້ທະນາຄານແຫ່ງ ສປປ ລາວ ປະກອບດ້ວຍ ນະໂຍບາຍ ແລະ ແຜນການດໍາເນີນທຸລະກິດ, ການບໍລິຫານຈັດການ, ເອກະສານລາຍງານການເງິນ ແລະ/ຫຼື ຂໍ້ມູນການເງິນຂອງບໍລິສັດໃນກຸ່ມ, ຂໍ້ມູນ ກ່ຽວກັບເງິນຝາກ ແລະ ສິນເຊື່ອ.

ນອກຈາກນີ້ ທະນາຄານແຫ່ງ ສປປ ລາວ ສາມາດທວງເອົາເອກະສານການລາຍງານເພີ່ມເຕີມ ນໍາທະນາຄານທຸລະກິດໄດ້ ເປັນຕົ້ນ ເຄືອຂ່າຍຂອງທະນາຄານທຸລະກິດ, ຜູ້ສະໜອງການບໍລິການດ້ານວິຊາຊີບ ແລະ ຜູ້ດໍາເນີນການໃດໜຶ່ງ ໃຫ້ແກ່ທະນາຄານທຸລະກິດ.

## ພາກທີ X
## ນະໂຍບາຍຕໍ່ຜູ້ມີຜົນງານ ແລະ ມາດຕະການຕໍ່ຜູ້ລະເມີດ

### ມາດຕາ ໑໐໓ (ປັບປຸງ) ນະໂຍບາຍຕໍ່ຜູ້ມີຜົນງານ

ບຸກຄົນ, ນິຕິບຸກຄົນ ຫຼື ການຈັດຕັ້ງ ທີ່ມີຜົນງານດີເດັ່ນໃນການຈັດຕັ້ງປະຕິບັດກົດໝາຍສະບັບນີ້ ຈະໄດ້ຮັບການຍ້ອງຍໍ ແລະ ນະໂຍບາຍອື່ນ ຕາມລະບຽບການ.

**ມາດຕາ 104 (ປັບປຸງ) ມາດຕະການຕໍ່ຜູ້ລະເມີດ**

ທະນາຄານທຸລະກິດ ແລະ ສາຂາທະນາຄານທຸລະກິດຕ່າງປະເທດ ລວມທັງຜູ້ບໍລິຫານ, ຜູ້ຖືຮຸ້ນລາຍໃຫຍ່ ແລະ ພະນັກງານ ທີ່ລະເມີດກົດໝາຍສະບັບນີ້ ຈະຖືກປະຕິບັດມາດຕະການ ສຶກສາອົບຮົມ, ກ່າວເຕືອນ, ລົງວິໄນ, ປັບໃໝ, ໃຊ້ແທນຄ່າເສຍຫາຍທາງແພ່ງ ຫຼື ຖືກລົງໂທດທາງອາຍາ ຕາມທີ່ໄດ້ກຳນົດໄວ້ໃນກົດໝາຍ.

ທະນາຄານແຫ່ງ ສປປ ລາວ ເປັນຜູ້ກຳນົດມາດຕະການຕໍ່ທະນາຄານທຸລະກິດ ແລະ ສາຂາທະນາຄານທຸລະກິດຕ່າງປະເທດ ລວມທັງ ຜູ້ຖືຮຸ້ນ ແລະ ຜູ້ບໍລິຫານ.

## ພາກທີ XI
## ບົດບັນຍັດສຸດທ້າຍ

**ມາດຕາ 105 ການຈັດຕັ້ງປະຕິບັດ**

ລັດຖະບານແຫ່ງ ສາທາລະນະລັດ ປະຊາທິປະໄຕ ປະຊາຊົນລາວ ເປັນຜູ້ຈັດຕັ້ງປະຕິບັດກົດໝາຍສະບັບນີ້.

**ມາດຕາ 106 (ປັບປຸງ) ຜົນສັກສິດ**

ກົດໝາຍສະບັບນີ້ ມີຜົນສັກສິດ ພາຍຫຼັງ ປະທານປະເທດ ແຫ່ງ ສາທາລະນະລັດ ປະຊາທິປະໄຕ ປະຊາຊົນລາວ ອອກລັດຖະດຳລັດປະກາດໃຊ້ ແລະ ໄດ້ລົງຈົດໝາຍເຫດທາງລັດຖະການ ສິບຫ້າວັນ.

ທະນາຄານທຸລະກິດ ທີ່ສ້າງຕັ້ງຂຶ້ນກ່ອນກົດໝາຍສະບັບນີ້ ຕ້ອງປັບປຸງໃຫ້ສອດຄ່ອງກັບກົດໝາຍສະບັບນີ້ ພາຍໃນເວລາ ສອງປີ ນັບແຕ່ວັນທີ່ກົດໝາຍສະບັບນີ້ມີຜົນສັກສິດເປັນຕົ້ນໄປ ຍົກເວັ້ນການເພີ່ມທຶນຈົດທະບຽນ ແລະ ເງິນລົງທຶນຕ່ຳສຸດ ຊຶ່ງຕ້ອງປະຕິບັດໃຫ້ສຳເລັດ ພາຍໃນເວລາ ຫ້າປີ.

ກົດໝາຍສະບັບນີ້ ປ່ຽນແທນກົດໝາຍວ່າດ້ວຍທະນາຄານທຸລະກິດ ສະບັບເລກທີ 03/ສພຊ, ລົງວັນທີ 26 ທັນວາ 2006.

ຂໍ້ກຳນົດ, ບົດບັນຍັດໃດ ທີ່ຂັດກັບກົດໝາຍສະບັບນີ້ ລ້ວນແຕ່ຖືກຍົກເລີກ.

ປະທານສະພາແຫ່ງຊາດ

ປານີ ຢາທໍ່ຕູ້